# ວັນນະຄະດີລາວ

ສຳລັບປີ 1 ລະບົບ 0+5

ມະຫາວິທະຍາໄລແຫ່ງຊາດ
ຄະນະອັກສອນສາດ
ພາກວິຊາພາສາລາວ-ສື່ສານມວນຊົນ

ວຽງຈັນ 2009

# ສາລະບານ

## ບົດທີ 1

## ວັນນະຄະດີລາວໂດຍສັງເຂບ

**ຫົວຂໍ້**


1. ຄວາມໝາຍຂອງວັນນະຄະດີ........ ໜ້າ
   1.1. ຄວາມໝາຍດ້ານຄຳສັບ........1
   1.2. ຄວາມໝາຍດ້ານສັງຄົມ........1
2. ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີລາວ........1
   2.1. ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີພື້ນເມືອງ........2
   2.2. ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີລ້ານຊ້າງ........2
   2.3. ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີປັດຈຸບັນ........2
3. ການຄົງຕົວ ແລະການຂະຫຍາຍຕົວຂອງວັນນະຄະດີລາວ........4
   3.1. ການຄົງຕົວ ແລະຂະຫຍາຍຕົວດ້ວຍການເລົ່າຕໍ່ກັນ........6
   3.2. ການຄົງຕົວ ແລະຂະຫຍາຍຕົວດ້ວຍການຂຽນ ແລະຈົດກ່າຍ........6
   3.3. ການຄົງຕົວ ແລະຂະຫຍາຍຕົວດ້ວຍການສຶກສາຄົ້ນຄວ້າ ແລະການນຳໃຊ້........7
4. ປະເພດຂອງວັນນະຄະດີ........7
   4.1. ປະເພດຮ້ອຍແກ້ວ........7
   4.2. ປະເພດຮ້ອຍກອງ........8
   4.3. ປະເພດການສະແດງເທິງເວທີ........18


## ບົດທີ 2

## ບົດບາດຄວາມສຳຄັນຂອງວັນນະຄະດີ


1. ວັນນະຄະດີມີຄວາມສຳຄັນຕໍ່ຊີວິດ........20
   1.1. ວັນນະຄະດີແມ່ນອາຫານບຳລຸງຈິດໃຈມະນຸດ........20
   1.2. ວັນນະຄະດີຊ່ວຍໃຫ້ມີຄວາມສຸກ, ເບີກບານ ແລະແຈ່ມໃສ........21
   1.3. ວັນນະຄະດີແມ່ນປຶ້ມຕຳລາຮຽນແຫ່ງຊີວິດ........21
   1.4. ວັນນະຄະດີຊ່ວຍໃຫ້ຄົນມີມະນຸດສຳພັນທີ່ດີ........22
      1.4.1. ມະນຸດສຳພັນໃນຄຳສຸພາສິດລາວ........23
      1.4.2. ມະນຸດສຳພັນໃນບົດວັນນະຄະດີລາວ........25
2. ວັນນະຄະດີມີຄວາມສຳຄັນຕໍ່ປະເທດຊາດ........26

2.1. ວັນນະຄະດີເປັນເຄື່ອງຜູກມັດຈິດໃຈຂອງຄົນພາຍໃນຊາດ....................26
2.2. ວັນນະຄະດີບອກໃຫ້ຮູ້ກ່ຽວກັບປະຫວັດສາດ.................... 28
2.3. ວັນນະຄະດີເປັນສົມບັດດ້ານວັດທະນະທຳທີ່ສຳຄັນຂອງຊາດ....................30
2.3.1. ວັນນະຄະດີບອກໃຫ້ຮູ້ຮີດຄອງປະເພນີຂອງຊາດ.................... 31
2.3.2. ວັນນະຄະດີສະແດງໃຫ້ເຫັນສິລະທຳ ແລະຄວາມມຸ່ງມາດປາຖະໜາຂອງຄົນໃນຊາດ
2.4. ວັນນະຄະດີເປັນຄັງສາງພາສາແຫ່ງຊາດ.................... 38
2.5. ວັນນະຄະດີບອກໃຫ້ຮູ້ຄວາມສວຍງາມຮັ່ງມີຂອງເມືອງລາວ....................41

## ບົດທີ 3

## ການປົກປັກຮັກສາ ແລະເສີມຂະຫຍາຍມູນເຊື້ອວັນນະຄະດີ

1. ສະພາບການປົກປັກຮັກສາ ແລະຄົ້ນຄວ້າວັນນະຄະດີລາວໂດຍທົ່ວໄປ....................44
2. ການປົກປັກຮັກສາ ແລະຄົ້ນຄວ້າວັນນະຄະດີຢູ່ສະຖາບັນການສຶກສາຕ່າງໆ....................46
2.1. ການຄົ້ນຄວ້າວິໄຈວັນນະຄະດີຢູ່ມະຫາວິທະຍາໄລສ້າງຄູວຽງຈັນ....................46
2.2. ການຄົ້ນຄວ້າວິໄຈວັນນະຄະດີໃນມະຫາວິທະຍາໄລແຫ່ງຊາດ....................47
2.3. ການສຶກສາຮ່ຳຮຽນວິຊາພາສາລາວ-ວັນນະຄະດີຕາມໂຮງຮຽນຕ່າງໆ....................49
3. ການປົກປັກຮັກສາ ( ການຄົ້ນຄວ້າ ) ແລະຂີດຂຽນວັນນະຄະດີລາວສ່ວນບຸກຄົນ....................49
3.1. ການປົກປັກຮັກສາ ແລະຄົ້ນຄວ້າວັນນະຄະດີສ່ວນບຸກຄົນ.................... 49
3.2. ການປົກປັກຮັກສາ ແລະເສີມຂະຫຍາຍວັນນະຄະດີລາວດ້ວຍການປະດິດແຕ່ງບົດວັນນະຄະດີ.
4. ການປົກປັກຮັກສາວັນນະຄະດີດ້ວຍການເກັບມ້ຽນເອກະສານ.................... 53
5. ສະຫລຸບ.................... 54
ບົດອ່ານເພີ້ມ....................56
ເລື່ອງຂຸນບູລົມ.................... 56
ເລື່ອງພະຍາຈັນທະພານິດ....................57

# ບົດທີ 1

# ວັນນະຄະດີລາວໂດຍສັງເຂບ

VANNAKHADE

## 1. ຄວາມໝາຍຂອງວັນນະຄະດີ

### 1.1. ຄວາມໝາຍດ້ານຄຳສັບ

ຄຳວ່າ " ວັນນະຄະດີ " ເປັນຄຳທີ່ມີເຄົ້າມາຈາກພາສາບາລີວ່າ " ວັນນະຄະຕິ ". " ວັນນະ" ແປວ່າ ເພດ, ສີສັນ, ຕົວອັກສອນ ຫລືໜັງສື; ສ່ວນຄຳວ່າ " ຄະຕິ " ຫລື " ຄະດີ " ແປວ່າ ການໄປ; ທາງ, ວິທີ; ແບບ ແຜນ ຫລືເລື່ອງ. ໂຮມຄຳວ່າ ວັນນະ ກັບ ຄະຕິ ເຂົ້າກັນເປັນ ວັນນະຄະຕິ ຫລືວັນນະຄະດີ. ດັ່ງນັ້ນ ຄຳວ່າ ວັນນະຄະດີ ຕາມຄວາມໝາຍຂອງຮາກສັບ ຈຶ່ງໝາຍເຖິງທາງຂອງໜັງສື, ເລື່ອງຂອງໜັງສື ຫລືໜັງສືເລື່ອງຕ່າງໆ ( ອ້າງໄວໃນສີລາວີລະວົງ, 1990:81), ແຕ່ບໍ່ໄດ້ໝາຍຄວາມວ່າໜັງສືເລື່ອງໃດ ກໍຈະເປັນວັນນະຄະດີ ໄດ້. ດັ່ງນັ້ນ ຄຳວ່າ ວັນນະຄະດີ ແລະວັນນະກຳຈຶ່ງມີຄວາມໝາຍທີ່ແຕກຕ່າງກັນ. ວັນນະກຳໝາຍເຖິງໜັງສື ທີ່ໃຫ້ຄວາມຮູ້ທົ່ວໆໄປ ນັບທັງໜັງສືແບບຮຽນເຊັ່ນ ຕຳລາເລກ, ຕຳລາພູມສາດ, ຕຳລາຢາ ແລະໜັງສືວິທະຍາສາດອື່ນໆ ກໍນັບວ່າເປັນວັນນະກຳໄດ້. ສ່ວນວັນນະຄະດີແມ່ນໝາຍເອົາໜັງສືທີ່ພາໃຫ້ເກີດທັງຄວາມຮູ້ ແລະຄວາມສະເທືອນໃຈ ຄືມີຄວາມມ່ວນຊື່ນ, ຄວາມໂສກເສົ້າ, ຄວາມຄຽດຊັງ, ຄວາມຮັກໄຄ່ ແລະອື່ນໆລວມຢູ່ນຳ; ສະນັ້ນ, ຄຳວ່າ ວັນນະຄະດີ ຈຶ່ງໝາຍເຖິງໜັງສືທີ່ພາໃຫ້ເກີດຄວາມຮູ້ ແລະຄວາມ ສະເທືອນໃຈ.

### 1.2. ຄວາມໝາຍດ້ານສັງຄົມ

ວັນນະຄະດີເປັນໜັງສືທີ່ສຳຄັນຍິ່ງຂອງມະນຸດຊາດ. ທຸກໆຊາດທີ່ຈະເລີນທັງອະດີດ ແລະ ປັດຈຸບັນ ລ້ວນແຕ່ຖືເອົາວັນນະຄະດີເປັນວັດທະນະທຳ ເປັນມໍລະດົກທາງພູມປັນຍາທີ່ສຳຄັນຍິ່ງຂອງຊາດ. ດັ່ງນັ້ນ, ຜ່ານມາກໍມີນັກຄົ້ນຄວ້າ, ນັກກະວີ, ນັກປະພັນວັນນະຄະດີຫລາຍທ່ານໄດ້ໃຫ້ຄຳນິຍາມເອົາໄວ້ ເຊັ່ນ

ແຊັກນິວ ແຊັກລະກີ ນັກວິຈານທີ່ມີຊື່ສຽງຂອງຣັດເຊຍ ໄດ້ກ່າວໄວ້ວ່າ " ວັນນະຄະດີແມ່ນປຶ້ມຕຳລາຮຽນແຫ່ງຊີວິດ " ( ອ້າງໃນ ບໍ່ແສງຄຳ ວົງດາລາ ແລະຄະນະ, 1997 ).

ທ່ານ ກາກມາກ ນັກປັດຊະຍາຜູ້ມີຊື່ສຽງຂອງເຢຍລະມັນໄດ້ໃຫ້ນິຍາມວ່າ "ວັນນະຄະດີແມ່ນທີ່ນຮອນແຫ່ງຄວາມຮູ້; ບົດປະພັນແມ່ນສູນລວມຄວາມຮູ້ຫລາຍກວ່າປຶ້ມການເມືອງ " ( ອ້າງໃນຄຳສອນ ທອງມີໄຊ ແລະກົງຈັນ ພະເນືອງ, 1998 ).

ທ່ານ ຊີເຊໂຣ ນັກປາດຊາວໂຣແມັງ ກ່າວໄວ້ວ່າ " ວັນນະຄະດີພາໃຫ້ເກີດຄວາມຈະເລີນແກ່ຜູ້ໜຸ່ມ, ໃຫ້ຄວາມຊື່ນບານແກ່ຜູ້ເຖົ້າ, ເປັນອາພອນຂອງຄົນຮັ່ງມີ, ເປັນຢາແກ້ທຸກໃນຍາມໂສກເສົ້າ, ເປັນຄວາມມ່ວນຊື່ນໃນຄອບຄົວ, ບໍ່ຄຽດຊັງໃນຕ່າງຖິ່ນ, ບໍ່ຖິ້ມປະລະໄລເຮົາ ທັງເວລາກາງຄືນ ແລະກາງເວັນ ລວມທັງ ຍາມເດີນທາງ ແລະຢຸດຢັ້ງ " ( ອ້າງໃນ ສີລາ ວີລະວົງ, 1999 ).

ທ່ານ ມາກຊິມ ກໍອກກີ ນັກປະພັນເອກຂອງໂຊວຽດກ່າວວ່າ " ວັນນະຄະດີແມ່ນຫູ ແມ່ນຕາແມ່ນ

ກະບອກສຽງຂອງຊົນຊັ້ນ " ( ອ້າງໃນ . ຕຳລາຮຽນວິຊາທິດສະດີວັນນະຄະດີ ປີທີສອງ, ພາສາລາວ-ສື່ສານມວນຊົນ ).

ທ່ານ ມະຫາ ສີລາ ວິລະວົງ ນັກປາດຜູ້ມີຈິດໃຈຮັກວັນນະຄະດີຂອງລາວໄດ້ກ່າວໄວ້ວ່າ " ວັນນະຄະດີແມ່ນຊີວິດ ແລະມີປະໂຫຍດແກ່ຊີວິດ ເພາະເປັນເຄື່ອງຜັດສີຈິດໃຈໃຫ້ຜ່ອງໃສ ພາໃຫ້ເກີດເປັນຄົນທີ່ມີຈິດໃຈເບີກບານ ແລະກວ້າງຂວາງ, ຢຸດຢັ້ງຄວາມເປັນຄົນປ່ວງບ້າ ສາລະວົນລາບຍົດ ແລະອຳນາດ ວາດ ສະໜາໄດ້ເປັນຢ່າງດີ " ( ອ້າງໃນ ສີລາ ວິລະວົງ, 1999 ).

ໂຮມຄວາມແລ້ວ ວັນະຄະດີແມ່ນວັດທະນະທຳສ່ວນໜຶ່ງທີ່ສຳຄັນຂອງຊາດ, ແມ່ນຊີວິດ ແລະປື້ມຕຳລາຮຽນແຫ່ງຊີວິດ ເພາະວັນນະຄະດີແມ່ນທຶນຮອນແຫ່ງຄວາມຮູ້ ປະສົບການຕ່າງໆຂອງຊີວິດທີ່ໄດ້ສະສົມ ແລະສືບທອດກັນມາເປັນເວລາຫລາຍເຊັ່ນຄົນ. ດັ່ງນັ້ນ, ວັນນະຄະດີຈຶ່ງເປັນວິທະຍາສາດຂະແໜງໜຶ່ງ ທີ່ຄົ້ນຄວ້າການເຄື່ອນໄຫວ, ການດຳລົງຊີວິດຂອງຄົນໃນສັງຄົມ ໂດຍຮູບການປະດິດແຕ່ງ. ຍ້ອນແນວນັ້ນ ວັນນະຄະດີຈຶ່ງສົມຄວນໄດ້ຮັບການສຶກສາຮ່ຳຮຽນຄົ້ນຄວ້າ ແລະພັດທະນາໃຫ້ຈະເລີນກ້າວໜ້າຕໍ່ໆໄປ.

## 2. ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີລາວ.

### 2.1. ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີພື້ນເມືອງ

ວັນນະຄະດີພື້ນເມືອງ ແມ່ນໝາກຜົນແຫ່ງການປະດິດແຕ່ງແບບລວມໝູ່ຂອງປະຊາຊົນຜູ້ອອກແຮງງານ ແລະກໍແມ່ນສ່ວນໜຶ່ງຂອງຮູບຖານສະຕິສັງຄົມ. ວັນນະຄະດີພື້ນເມືອງໄດ້ກຳເນີດມາຈາກການອອກແຮງງານ, ການຕໍ່ສູ້ຕ້ານໄພທຳມະຊາດ ແລະການຕໍ່ສູ້ສັງຄົມຂອງຄົນເຮົາ ແຕ່ເຄົ້າກຳເນີດໄປເຖິງຕົວລະຄອນ ແລະພາສາຄຳເວົ້າລ້ວນແຕ່ໄດ້ກົເຄົ້າມາຈາກຊີວິດຈິງຂອງສັງຄົມ, ສ່ອງແສງໃຫ້ເຫັນຄວາມມຸ່ງມາດ ປາຖະໜາອັນແຮງກ້າຂອງມວນມະນຸດທີ່ຢາກຫລຸດພົ້ນຈາກໄພຂົ່ມຂູ່ຈາກທຳມະຊາດ. ດ້ວຍເຫດນີ້ວັນນະຄະດີພື້ນເມືອງຈຶ່ງຍົກແລະສົ່ງເສີມບຸກຄົນໃຫ້ມີກຳລັງວັງຊາເໜືອມະນຸດ ເຊິ່ງສະແດງອອກເລື່ອງ " ເທບນິຍາຍນາງເຕົ້າປຸງ, ປູເຍີຍ່າເຍີ ເຫລົ່ານີ້ເປັນຕົ້ນ ". ແຕ່ລະປະເພດເລື່ອງເລົ່ານັ້ນບໍ່ແມ່ນເກີດໃນຍຸກສະໄໝ ແລະ ລະບອບອັນດຽວກັນ. ເທບນິຍາຍເກີດກ່ອນໃນລະບອບສະຫະຊົບປະຖົມບູຮານເມື່ອສະຕິເປັນເຈົ້າຕົນເອງຍັງບໍ່ທັນສູງ ແຕ່ກໍມີຄວາມຈຳເປັນຕ້ອງຊອກຮູ້, ອະທິບາຍປາກົດການຕ່າງໆຂອງທຳມະຊາດ ແລະສັງຄົມ. ຄຳວ່າ " ວັນນະຄະດີກຳເນີດມາຈາກການອອກແຮງງານ " ຕໍ່ກັບບັນຫານີ້ທ່ານອັງແກນຢັ້ງຢືນວ່າ " ການອອກແຮງງານນັ້ນເອງໄດ້ສ້າງຝາມືຂອງຄົນເຮົາໃຫ້ກາຍເປັນຝາມືທີ່ຄ່ອງແຄ້ວມະຫັດສະຈັນ, ຝາມືຂອງຄົນເຮົາບໍ່ສະເພາະແຕ່ສາມາດອອກແຮງງານຢ່າງປະດິດສ້າງເທົ່ານັ້ນ, ມັນຍັງສາມາດປະດິດສ້າງວັນນະຄະດີສິລະປະກຳຢ່າງຄ່ອງແຄ້ວ"( ທິດສະດີວັນນະຄະດີ, 2002: 5).

ປະຫວັດແຫ່ງການຂະຫຍາຍຕົວຂອງສັງຄົມ ແມ່ນປະຫວັດແຫ່ງການອອກແຮງງານຢ່າງມີສະຕິ ແລະປະດິດສ້າງຂອງຄົນເຮົາ, ແມ່ນປະຫວັດແຫ່ງການຕໍ່ສູ້ທຳມະຊາດ ແລະສັງຄົມອັນເຫີງນານຫລາຍພັນປີ ໂດຍຜ່ານການຕໍ່ສູ້ອັນທຸກຍາກລຳບາກຍືດເຍື້ອຍາວນານ. ມະນຸດນັບແຕ່ດຳລົງຊີວິດແບບຕ່ຳຊ້າຫລ້າຫລັງໄດ້ຄ່ອຍໆກ້າວຂຶ້ນ ແລະຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ຜ່ານການອອກແຮງງານເຮັດໄຮ່, ເຮັດ

ບາລ່ຄສັ● ເພື່ອລ້ຽງຊີບເຂົາເຈົ້າໄດ້ມີໂອກາດໂອ້ລົມແລກປ່ຽນບົດຮຽນເຊິ່ງກັນແລະກັນ, ບາງເທື່ອກໍເປັນການສະແດງຄົນດ້ວຍທ່າທີກິລິຍາອັນອ່ອນຫວານ, ນີ້ມນວນກາຍເປັນບົດຟ້ອນ, ບາງເທື່ອກໍເກີດຄວາມເບີກບານມ່ວນຊື່ນໃນເມື່ອໄດ້ຮັບໄຊຊະນະໃດໜຶ່ງ ກໍມີການເຕັ້ນດີດ, ຮ້ອງໂຮໂອທະການແບບພໍໃຈ ກໍພາໃຫ້ເກີດເປັນສຽງຂັບສຽງລຳ. ວັນນະຄະດີພື້ນເມືອງ ນອກຈາກປະເພດຂັບລຳ, ເທບນິຍາຍ ແລ້ວຍັງມີຫລາຍປະເພດ ວັນນະຄະດີເຊັ່ນ ຄຳຜະຫຍາ, ຄຳທວາຍ, ຄຳສຸພາສິດ ຕະຫລອດຮອດເຊັ່ງ... ອາດເວົ້າໄດ້ວ່າ ວັນນະຄະດີ ພື້ນເມືອງອຸດົມສົມບູນທາງດ້ານເນື້ອໃນ ແລະຮູບການ ທັງເປັນພື້ນຖານອັນແໜ້ນແກ່ນໃຫ້ແກ່ວັນນະຄະດີຂຽນຂອງລາວສະໄໝຕໍ່ມາ. ເຖິງວ່າຈະມີວັນນະຄະດີຂຽນເກີດຂຶ້ນແລ້ວກໍຕາມແຕ່ວັນນະຄະດີພື້ນເມືອງ ກໍຍັງຄົງຕົວ ແລະຂະຫຍາຍຕົວຕະຫລອດມາ.

## 2.2. ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີລ້ານຊ້າງ

ວັນນະຄະດີລ້ານຊ້າງແມ່ນພາກສ່ວນໜຶ່ງຂອງວັນນະຄະດີລາວ ເຊິ່ງກຳເນີດ ແລະຂະຫຍາຍຕົວຢູ່ໃນໄລຍະການກໍ່ສ້າງອານາຈັກລາວລ້ານຊ້າງເມື່ອກາງສະຕະວັດທີ 14 ( ຄ. ສ. 1353 ) ຫາຕົ້ນສະຕະວັດທີ 19 ( ຄ. ສ. 1893 ).

ວັນນະຄະດີລ້ານຊ້າງ ຫລື ວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງໄດ້ກຳເນີດ ແລະຂະຫຍາຍຕົວແຕ່ປີໃດຫາປີໃດນັ້ນ ນັກຄົ້ນຄວ້າວັນນະຄະດີລາວບໍ່ທັນຄົ້ນພົບຂໍ້ມູນທີ່ຄົບຖ້ວນ ເພື່ອຢັ້ງຢືນໄດ້ຢ່າງຊັດເຈນເທື່ອ. ໂດຍອີງໃສ່ເອກະສານວັນນະຄະດີ ແລະປະຫວັດສາດ ສາມາດຄົ້ນຄວ້າໄລຍະການກຳເນີດວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງໄດ້ ຕາມການສະຖາປະນາອານາຈັກລາວລ້ານຊ້າງເມື່ອກາງສະຕະວັດທີ 14 ເປັນຕົ້ນມາ. ໂດຍຖືເອົາຄຳໂອວາດຂອງເຈົ້າຟ້າງຸ່ມ ເປັນບົດປະພັນສະບັບທຳອິດ ເຊິ່ງໄດ້ປະກາດໃນງານສະຫລອງໄຊຊະນະອັນອຸດົມສົມບູນໃນການທ້ອນໂຮມປະເທດຊາດໃຫ້ເປັນອານາຈັກລາວລ້ານຊ້າງເອກະພາບໃນປີ ຄ. ສ. 1357 ຢູ່ທີ່ວຽງຈັນ ( ບໍ່ແສງຄຳ ວົງດາລາ ພ້ອມຄະນະ, 1987:186-187). ວັນນະຄະດີລ້ານຊ້າງກຳເນີດ ແລະ ຂະຫຍາຍຕົວຕາມສອງໄລຍະປະຫວັດສາດທີ່ແຕກຕ່າງກັນຄື:

### ໄລຍະທີ 1 ເລີ່ມແຕ່ສະຕະວັດທີ 14 ( 1353 ) ຫາສະຕະວັດທີ 17 ( 1690 ).

ໄລຍະນີ້ແມ່ນໄລຍະກຳເນີດ ແລະ ຂະຫຍາຍຕົວຮຸ່ງເຮືອງທີ່ສຸດຂອງວັນນະຄະດີລ້ານຊ້າງ ເຊິ່ງກຳເນີດ ແລະຂະຫຍາຍຕົວດ້ວຍ 3 ລັກສະນະຄື: ການປະດິດແຕ່ງ, ການຈົດກ່າຍ ຫລືບັນທຶກ ແລະການແປ.

- ການປະດິດແຕ່ງແມ່ນປະດິດແຕ່ງດ້ວຍ 3 ຮູບການຄື ປະດິດແຕ່ງເປັນເລື່ອງຂອງລາວໂດຍກົງເຊັ່ນ ກາບປູ່ສອນຫຼານ-ຫຼານສອນປູ່, ອິນທິຍານສອນລູກ, ຊະນະສັນທະ... ; ປະດິດແຕ່ງເປັນເລື່ອງລາວ ແຕ່ຄ້າຍຄືກັບຊາດີກເຊັ່ນ ແຕ່ງອ່ອນ, ກາລະເກດ, ສິນໄຊ, ຈຳປາສີ່ຕົ້ນ,... ແລະປະດິດແຕ່ງດ້ວຍການຢືມເຄົ້າຊາດົກ ຫລືວັນນະຄະດີອິນເດຍມາແຕ່ງເປັນເລື່ອງລາວ ໂດຍອີງຕາມຊີວິດຈິງຂອງຄົນລາວເປັນພື້ນຖານ ເຊັ່ນ ເລື່ອງພະລັກພະລາມ, ສຽວສະຫວາດ, ສີທົນ,...
- ການຈົດກ່າຍຄືນແມ່ນນຳເອົາເລື່ອງເລົ່າພື້ນເມືອງ ໂດຍສະເພາະແມ່ນເລື່ອງທີ່ມີເນື້ອໃນກ່ຽວ

ຂ້ອງກັບປະຫວັດສາດມາບັນທຶກໄວ້ເປັນລາຍລັກອັກສອນເຊັ່ນ: ຂຸນບູລົມ, ຂຸນເຈືອງ, ສີໂຄດຕະບອງ, ຈັນທະພານິດ,...

– ການແປແມ່ນການນຳເອົາເລື່ອງຈາກຕ່າງປະເທດມາແປເປັນພາສາລາວ ໂດຍສະເພາະແມ່ນວັນນະຄະດີຊາດົກຈາກອິນເດຍເຊັ່ນ: ພະເວດສັນດອນ, ນາງຕັນໄຕ ເຫລົ່ານີ້ເປັນຕົ້ນ.

### ໄລຍະທີ 2 ເລີ່ມແຕ່ທ້າຍສະຕະວັດທີ 17 ( 1690 ) ຫາທ້າຍສະຕະວັດທີ 19 ( 1893 )

ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີລ້ານຊ້າງໄລຍະນີ້ແມ່ນໄລຍະຊຸດໂຊມ ຍ້ອນສະພາບທາງການເມືອງ ແລະສັງຄົມລາວມີຄວາມສັບສົນວຸ່ນວາຍຢູ່ພາຍໃນກຸ່ມສັກດີນາລາວ. ຫລັງຈາກເຈົ້າສຸລິຍະວົງສາສິ້ນພະຊົນໃນປີ 1690 ໄດ້ເກີດມີການຍາດຊີງບັນລັງພາຍໃນລາຊະສຳນັກ ອັນໄດ້ເຮັດໃຫ້ອານາຈັກລາວລ້ານຊ້າງເອກະພາບແບ່ງແຍກອອກເປັນສາມອານາຈັກໃນທີ່ສຸດ. ຈາກນັ້ນກໍຕົກເປັນຫົວເມືອງຂຶ້ນໃຫ້ແກ່ສັກດີນາສະຫຍາມເມື່ອປີ 1758-1779. ສັກດີນາສະຫຍາມໄດ້ກວາດຕ້ອນເອົານັກກະວີ, ໝໍລຳ ພ້ອມທັງປຶດວັນນະຄະດີທີ່ຂຽນໄວ້ໃນໃບລານ, ສ່ວນທີ່ເຫຼືອກໍຈູດເຜົາຫຳລາຍ. ໄລຍະດັ່ງກ່າວນີ້ໄດ້ມີປຶດວັນນະຄະດີຈຳນວນໜຶ່ງກຳເນີດເກີດຂຶ້ນ ເພື່ອຕຳໜິຕິຕຽນຄວາມຊົ່ວຮ້າຍຂອງສັກດີນາລາວ ແລະກ່າວປະນາມສັກດີນາສະຫຍາມເຊັ່ນ: ສານລຶບພະສູນ, ກາບເມືອງພວນ ເປັນຕົ້ນ.

## 2.3. ການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີປັດຈຸບັນ

ວັນນະຄະດີລາວປັດຈຸບັນໄດ້ກຳເນີດ ແລະ ຂະຫຍາຍຕົວໄປຕາມສາມໄລຍະປະຫວັດສາດທີ່ແຕກຕ່າງກັນຄື:

ໄລຍະທີ 1 ເລີ່ມແຕ່ປີ 1893-1954: ໄລຍະນີ້ເປັນໄລຍະທີ່ປະເທດລາວຕົກເປັນຫົວເມືອງຂຶ້ນໃຫ້ແກ່ຈັກກະພັດຝຣັ່ງ. ພວກເຂົາໄດ້ລຶບລ້າງພາສາລາວ, ວັນນະຄະດີ ແລະວັດທະນະທຳລາວ ໂດຍບັງຄັບໃຫ້ຄົນລາວຕ້ອງຮຽນພາສາຝຣັ່ງ, ເວົ້າພາສາຝຣັ່ງ, ກຳນົດ ແລະນຳໃຊ້ພາສາຝຣັ່ງເປັນພາສາທີ່ໃຊ້ທາງລັດຖະການ.

ວັນນະຄະດີລາວໄລຍະນີ້ໄດ້ກຳເນີດ ແລະຂະຫຍາຍຕົວຕາມສອງກະແສຄື

– ກະແສວັນນະຄະດີທີ່ມີລັກສະນະລອກແບບຈາກວັນນະຄະດີຝຣັ່ງ ເຊິ່ງປາກົດອອກໃນບາງບົດເລື່ອງເຊັ່ນ ເລື່ອງພະພຸດທະຮູບສັກສິດ, ເລື່ອງນັກສືບ ເປັນຕົ້ນ.

– ກະແສວັນນະຄະດີຮັກຊາດ ຂະຫຍາຍຕົວມີລັກສະນະວັນນະຄະດີພື້ນເມືອງ ເປັນຕົ້ນມີຜູ້ປະດິດແຕ່ງຂຶ້ນແລ້ວເລົ່າສູ່ກັນຟັງແບບປາກເປົ່າ ແລະແຜ່ລາມໄປຫລາຍທ້ອງຖິ່ນເຊັ່ນ ເລື່ອງພໍ່ກະດວດຜູ້ໃຈບຸນ, ເລື່ອງອີງແກ້ວອີງກິນນະດາ, ເຈົ້າຟ້າປັດໄຈ. ນອກນັ້ນ ຍັງມີຮູບການວັນນະຄະດີອື່ນໆອີກເພື່ອຕໍ່ສູ້ ເຊິ່ງສ່ວນຫລາຍເປັນຄຳເວົ້າ, ກາບກອນສັ້ນ ເພື່ອສະແດງເຖິງຄວາມບໍ່ເພິ່ງພໍໃຈຕໍ່ການກົດຂີ່ຂູດຣີດຂອງພວກລ່າເມືອງຂຶ້ນຝຣັ່ງ ເຊິ່ງໄດ້ປາກົດອອກໃນບາງປະໂຫຍກທີ່ວ່າ " ຫົວໂລ້ນມາ ຫົວລ້ານເຂົ້າປ່າ " ຫລືວ່າ " ການຫລວງນັບມື້ຫຍຸ້ງ ຕະແຫລວນັບມື້ຫ່າງ " ເປັນຄຳເວົ້າທີ່ທີ່ເຍາະເຍີ້ຍຕໍ່ການປະລາໄຊຂອງພວກລ່າເມືອງຂຶ້ນຝຣັ່ງ, ຍີ່ປຸ່ນ.

ກະແສວັນນະຄະດີຮັກຊາດຂະຫຍາຍຕົວແມ່ນເລີ່ມແຕ່ປີ1940 ເປັນຕົ້ນມາປາກົດມີບົດລະຄອນ

" ບ້າຍິງ " ສະແດງເປັນຄັ້ງທໍາອິດເມື່ອວັນທີ 28 ເດືອນພະຈິກ ປີ 1941 ໃນໂອກາດສະຫລອງໂຮງລະຄອນລາວວຽງຈັນ, ບົດລະຄອນ " ບາບໄລ່ເວນທັນ " ສະແດງວັນທີ 9 ມີຖຸນາ ປີ 1943. ເນື້ອໃນແມ່ນກ່າວປະນາມຄວາມບໍ່ຍຸຕິທໍາຂອງສັງຄົມສັກດີນາເຄິ່ງເມືອງຂຶ້ນ. ນອກນີ້ຍັງມີບົດກອນ, ບົດເພງ, ໜັງສືພິມ ດັ່ງນີ້.

ຕົວຢ່າງບົດກອນ ປືນເພີງສອງກະບອກ

| | |
|---|---|
| ... ປາງຕໍ່ຕ້ານ | ມີຊາຍສອງຄົນ |
| ເຊິ່ງເປັນປະຊາຊົນ | ຄາເມບ້ານນອກ |
| ຈຶ່ງໄດ້ສາກປືນພົກອອກ | ຈໍ້ໃສ່ຢ່າງໄວວາ |
| ພໍດີກັບເວລາ | ປືນເພີງລັ່ນປ້າງ... |

ບົດເພງ " ຈໍາປາເມືອງລາວ " ກ່ອນປີ 1945 ແຕ່ງໂດຍ ອຸດະມະ ຈຸລະມະນີ, ເພງ " ຕໍ່ຕ້ານ " , ເພງ " ອິດທິນ ", ເພງ " ແດນອິດສະລະ" ແລະອື່ນໆ. ມາເຖິງ ປີ 1948 ມີໜັງສືພິມ " ສາມັກຄີທໍາ ", ຕໍ່ມາປີ 1950 ມີໜັງສືພິມ " ລາວອິດສະລະ " ລວມຄວາມວ່າ ກະແສວັນນະຄະດີຮັກຊາດໄດ້ກໍາເນີດຂຶ້ນເພື່ອສ່ອງແສງ ແລະຕໍ່ຕ້ານຈັກກະພັດຝຣັ່ງຜູ້ຮຸກຮານ.

ໄລຍະທີ 2 ເລີ່ມແຕ່ປີ 1955-1975: ວັນນະຄະດີລາວໄລຍະນີ້ໄດ້ກໍາເນີດ ແລະຂະຫຍາຍຕົວຢູ່ສອງເຂດຄື ເຂດສັດຕູຄວບຄຸມຊົ່ວຄາວ ແລະເຂດປົດປ່ອຍ. ວັນນະຄະດີເຂດຄວບຄຸມຊົ່ວຄາວຂອງສັດຕູໃນໄລຍະ 1955-1960 ບໍ່ຂະຫຍາຍຕົວຫລາຍປານໃດ; ມີແຕ່ນໍາເລື່ອງເກົ່າມາລຶດຈະນາເຊັ່ນເລື່ອງສັງສິນໄຊ, ສຽວສະຫວາດ, ແຕ່ງອ່ອນ,ຈໍາປາສີ່ຕົ້ນ, ກາລະເກດ ເປັນຕົ້ນ, ບາງບົດກໍລອກແບບຈາກວັນນະຄະດີໄທ.

ຫລັງຈາກປີ 1960 ເປັນຕົ້ນມາ, ວັນນະຄະດີໃນເຂດຄວບຄຸມຊົ່ວຄາວຈຶ່ງຂະຫຍາຍຕົວ ໂດຍມີນັກຂຽນຮຸ່ນໜຸ່ມປາກົດຕົວຂຶ້ນເຊັ່ນ ປາໄນ, ດວງຈໍາປາ, ດອກເກດ, ປຽມ ຈຸນລະມຸນຕີ, ອິນທະລາ ແລະຜູ້ອື່ນໆ. ວັນນະຄະດີທີ່ປາກົດຢູ່ໃນໄລຍະນີ້ແມ່ນມີສອງກະແສຄື ກະແສວັນນະຄະດີສັດຈະທັດ ເປັນບົດວັນນະຄະດີທີ່ວິຈານທາດແທ້ຂອງລະບອບສັງຄົມຜູ້ປົກຄອງ ແລະວັນນະຄະດີທີ່ມີລັກສະນະເພີນຈິດເຊິ່ງ ເປັນບົດວັນນະຄະດີທີ່ມີເນື້ອໃນເວົ້າເຖິງຄວາມຮັກທີ່ມົວເມົາ, ບໍ່ສາມາດໄຂຊ່ອງທາງອອກໃຫ້ແກ່ຕົວລະຄອນເຊັ່ນ ເລື່ອງຊີວິດຄືລະຄອນ, ຜູ້ຍິງນໍຜູ້ຍິງ, ...ນອກຈາກນັ້ນ ກໍມີບົດລະຄອນຈໍານວນໜຶ່ງເຊັ່ນລະຄອນເທິງ ເວທີ, ລະຄອນວິທະຍຸ, ລໍາເລື່ອງ ເປັນຕົ້ນ.

ວັນນະຄະດີໃນເຂດປົດປ່ອຍເອີ້ນວ່າ ວັນນະຄະດີປະຕິວັດ ເຊິ່ງໄດ້ກໍາເນີດ ແລະຂະຫຍາຍຕົວຢູ່ພາຍໃຕ້ການນໍາພາຂອງພັກ. ແມ່ນວັນນະຄະດີທີ່ສືບຕໍ່ກະແສວັນນະຄະດີຮັກຊາດ ເຊິ່ງໄດ້ເລີ່ມແຕ່ສະໄໝຕໍ່ຕ້ານພວກລ່າເມືອງຂຶ້ນຝຣັ່ງ ແຕ່ໄລຍະນີ້ຂະຫຍາຍຕົວໃນລະດັບສູງ ແລະສ່ອງແສງກວ້າງກວ່າເກົ່າ. ລັກສະນະຂອງວັນນະຄະດີປະຕິວັດແມ່ນຮັບໃຊ້ພາລະກິດການປະຕິວັດ ແລະແນວທາງການເມືອງຂອງພັກ. ວັນນະຄະດີປະຕິວັດໄດ້ກໍາເນີດ ແລະຂະຫຍາຍຕົວຢ່າງວ່ອງໄວ ນັບທັງວັນນະຄະດີປະເພດຄໍາຮ້ອຍກອງ ແລະຮ້ອຍແກ້ວ. ມີນັກປະພັນ ນັກກະວີປະຕິວັດປາກົດຂຶ້ນຫລາຍທ່ານເຊັ່ນ ພູມີ ວົງວິຈິດ,

ສີຊະນະ ສີສານ, ອຸດຕະມະ ຈຸນລະມະນີ, ສົມສີ ເດຊາຄຳພູ, ( ສ ເດຊາ ), ຄຳມາ ພົມກອງ, ຄຳລຽງ ພົນເສນາ, ສຸວັນທອນ ບຸບຜານຸວົງ ( ສ. ບຸບຜານຸວົງ ), ຈັນທີ ເດືອນສະຫວັນ...

ໃນວັນນະຄະດີປະຕິວັດປະເພດເລື່ອງສັ້ນ ແລະບົດບັນທຶກເປັນປະເພດທີ່ຂະຫຍາຍຕົວແຮງກວ່າວັນນະຄະດີປະເພດອື່ນໆເຊັ່ນ ເລື່ອງ "ເຂົ້າຕົ້ມຈີ້ເອົາປີນ ", " ລູກຜູ້ປະເສີດຂອງຊາດ", " ສອງແມ່ລູກບົວບານ ", " ພັດພາກຈາກສົມພັນດອນ " ( 1969 ), "ຕາມຖະໜົນວຽງຈັນ "(1969), " ພາສາແມ່" (1971), " ແຫວນພັ້ນ", "ຄືນໜຶ່ງໃນແນວໜ້າ " (1971), "ຜູ້ສືບທອດ"(1973), " ນ້ອງນ້ອຍອາດຫານ "(1969), "ດອກໄມ້ປ່າ ຊີວິດໃໝ່ ", "ບົນເສັ້ນທາງປົດປ່ອຍ", "ສຽງເອີ້ນຂອງໃຜ "(1973 )...

ໃນປີ 1969-1970 ມີປຶດນະວະນິຍາຍເຫລັ້ມທຳອິດອອກສູ່ສາຍຕາມະຫາຊົນ ແມ່ນເລື່ອງ " ສີນ້ອຍ " ແຕ່ງໂດຍ ຄຳລຽງ ພົນເສນາ , ຕໍ່ຈາກນັ້ນແມ່ນຈຶ່ງມີເລື່ອງ " ກອງພັນທີສອງ " ຂອງສຸວັນທອນ ບຸບຜານຸວົງ, ເລື່ອງ " ເສັ້ນທາງແຫ່ງຊີວິດ " ຂອງຈັນທີ ເດືອນສະຫວັນ , ເລື່ອງ "ສອງເອື້ອຍນ້ອງ" ແລະ ເລື່ອງອື່ນໆ.

ໄລຍະທີ 3 ເລີ່ມແຕ່ປີ 1976 ເຖິງປັດຈຸບັນ: ໄລຍະນີ້ ວັນນະຄະດີກໍເກີດຂຶ້ນບົນພື້ນຖານການປົກປັກຮັກສາ, ການຟື້ນຟູ ແລະການກໍ່ສ້າງປະເທດຊາດ. ພັກ ແລະລັດໄດ້ອຳນວຍຄວາມສະດວກແກ່ຜູ້ສະຫງວນນັກໃນການປະດິດແຕ່ງວັນນະຄະດີສິລະປະກຳ ໃຫ້ສິ່ງບົດຂອງຕົນລົງໃນໜັງສືພິມວັນນະສິນ, ໜຸ່ມລາວ, ແຮງງານ ແລະແມ່ຍິງລາວ ເປັນຕົ້ນ ອັນໄດ້ເຮັດໃຫ້ວັນນະຄະດີໄລຍະນີ້ກໍເກີດ ແລະຂະຫຍາຍຕົວດີ ນັບທັງກາບກອນ, ເລື່ອງສັ້ນ, ນະວະນິຍາຍ ແລະລະຄອນ. ສຳນັກພິມໄດ້ຈັດພິມປຶ້ມຫລາຍເຫລັ້ມເຊັ່ນ ບົດກະວີຂອງ ສົມສີ ເດຊາຄຳພູ, ນະວະນິຍາຍເລື່ອງ~~ສີນ້ອຍ ຂອງຄຳລຽງ~~ ພົນເສນາ; ໂຮມເລື່ອງ ງານບ້ານເກີດ, ຕາເວັນຂຶ້ນທີ່ດອນນາງ, ແປວໄຟແຫ່ງໄວໜຸ່ມ,... ມາເຖິງປັດຈຸບັນນີ້ກໍ່ຍັງມີນັກຂຽນປາກົດ ຕົວຂຶ້ນ ແລະມີບົດຂຽນອອກສູ່ສາຍຕາຜູ້ອ່ານສະເໝີມາ.

## 3. ການຄົງຕົວ ແລະການຂະຫຍາຍຕົວຂອງວັນນະຄະດີລາວ

### 3.1. ການຄົງຕົວ ແລະຂະຫຍາຍຕົວດ້ວຍການເລົ່າຕໍ່ກັນ.

ການຄົງຕົວ ແລະ ການຂະຫຍາຍຕົວຂອງວັນນະຄະດີໃນສະໄໝຕົ້ນກ່ອນມະນຸດມີຕົວໜັງສືນັ້ນ ການປະດິດແຕ່ງວັນນະຄະດີກໍປະດິດແຕ່ງດ້ວຍປາກເປົ່າ ແລະນຳເອົາວັນນະຄະດີໄປເຜີຍແຜ່ຈາກທ້ອງຖິ່ນນີ້ຫາທ້ອງຖິ່ນອື່ນ, ຈາກຮຸ່ນຄົນນີ້ຫາຮຸ່ນຄົນຕໍ່ໆມາກໍ່ສິ່ງຜ່ານດ້ວຍການເລົ່າສູ່ກັນຟັງ ແລະການຂັບລຳ.

### 3.2. ການຄົງຕົວ ແລະຂະຫຍາຍຕົວດ້ວຍການຂຽນ ແລະຈົດກ່າຍ.

ເມື່ອສັງຄົມຂະຫຍາຍຕົວ, ມີຕົວໜັງສືຈຶ່ງກໍເກີດວັນນະຄະດີຂຽນຂຶ້ນ ຄືຢູ່ລາວພວກເຮົາ ອີງຕາມຫລັກຖານທີ່ພົບເຫັນໃນປັດຈຸບັນແມ່ນເລີ່ມແຕ່ປີ 1353 ເປັນຕົ້ນມາ ທີ່ພວກເຮົາເລີ່ມມີວັນນະຄະດີຂຽນເກີດຂຶ້ນ, ຜູ້ແຕ່ງກໍເລີ່ມໃຊ້ພາສາຂຽນ ເພື່ອແຕ່ງວັນນະຄະດີ ແລະຈົດກ່າຍວັນນະຄະດີ ໂດຍສະເພາະເລື່ອງເລົ່າ ແລະກາບກອນຕ່າງໆເອົາໄວ້. ແຕ່ວັນນະຄະດີຂຽນໃນສະໄໝນັ້ນ ບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງປະຊາຊົນໄດ້ ເພາະວ່າປະຊາຊົນຍັງບໍ່ທັນຮູ້ໜັງສືທົ່ວເຖິງກັນ; ດັ່ງນັ້ນ,

ການປະດິດແຕ່ງດ້ວຍ ການປາກເວົ້າ ແລະການຄົງຕົວ ແລະຂະຫຍາຍຕົວດ້ວຍປາກເປົ່າ ໂດຍຜ່ານການເລົ່າ ແລະການສືບລຳນັ້ນ ຈຶ່ງສືບຕໍ່ມາເຖິງປັດຈຸບັນນີ້.

### 3.3. ການຄົງຕົວ ແລະຂະຫຍາຍຕົວດ້ວຍການສຶກສາຄົ້ນຄວ້າ ແລະການນຳໃຊ້.

ໃນປັດຈຸບັນນີ້ ວັນນະຄະດີໄດ້ຄົງຕົວ ແລະຂະຫຍາຍຕົວຂຶ້ນສູ່ລະດັບສູງ ເພາະວັນນະຄະດີໄດ້ກາຍເປັນວິທະຍາສາດຂະແໜງໜຶ່ງທີ່ສຳຄັນ ເຊິ່ງທຸກໆຊາດໃນໂລກໄດ້ນຳມາຮ່ຳຮຽນ, ສຶກສາຄົ້ນຄວ້າ ຕັ້ງແຕ່ ລະດັບການສຶກສາຊັ້ນປະຖົມຈົນເຖິງມະຫາວິທະຍາໄລ ແລະປະລິນຍາເອກ. ໝາຍຄວາມວ່າ ມາເຖິງ ປັດຈຸບັນນີ້ ວັນນະຄະດີສິລະປະກຳໄດ້ແຍກອອກເປັນວຽກງານສະເພາະ ກາຍເປັນວິຊາອາຊີບທີ່ມີເງິນເດືອນ ມີລາຍໄດ້ຄືກັບວິຊາອື່ນໆ. ເມື່ອສັງຄົມຈະເລີນເທົ່າໃດ ຍິ່ງເປັນເງື່ອນໄຂດີທີ່ຊຸກຍູ້ໃຫ້ວິຊາວັນນະຄະດີຄົງຕົວ ແລະຂະຫຍາຍຕົວ ໂດຍຜ່ານການສະແດງ, ຜ່ານໂທລະພາບ ແລະວີດີໂອຕ່າງໆ.

ລວມຄວາມແລ້ວ ວັນນະຄະດີຄືຊີວິດ, ເກີດຂຶ້ນຈາກການດຳເນີນຊີວິດຂອງມະນຸດ, ຄົງຕົວແລະຂະຫຍາຍຕົວ ແລະຮັບໃຊ້ຊີວິດຂອງມະນຸດຕະຫລອດເວລາ ບໍ່ວ່າອະດີດ, ປັດຈຸບັນ ກໍຄືອະນາຄົດ.

## 4. ປະເພດຂອງວັນນະຄະດີ

ການຈັດປະເພດວັນນະຄະດີສາມາດຈັດໄດ້ຫລາຍຮູບແບບ ແລະຫລາຍປະເພດ ແລ້ວແຕ່ບ່ອນອີງຂອງການຈັດແບ່ງ. ສຳລັບການຈັດແບ່ງປະເພດໃນເອກະສານສະບັບນີ້ ແມ່ນໄດ້ອີງໃສ່ແນວຄິດການຈັດແບ່ງປະເພດວັນນະຄະດີຂອງທ່ານອາລິດສະໂຕດ (ຊາວເກຣັກ), ບັນຫາສຳຄັນແມ່ນອີງໃສ່ຈຸດພິເສດສະເພາະທາງດ້ານເນື້ອໃນຂອງວັນນະຄະດີລາວ ແລະຮູບການສິລະປະການປະດິດແຕ່ງ, ການສ້າງຕົວລະຄອນ ແລະການນຳໃຊ້ພາສາ . ດັ່ງນັ້ນ ຈຶ່ງຈັດແບ່ງປະເພດວັນນະຄະດີລາວອອກເປັນ 3 ປະເພດຄື:

### 4.1. ປະເພດຮ້ອຍແກ້ວ

ວັນນະຄະດີປະເພດຄຳຮ້ອຍແກ້ວ ແມ່ນໜັງສືທີ່ແຕ່ງຂຶ້ນດ້ວຍຄຳເວົ້າທຳມະດາ ອັນອຸດົມສົມບູນເຊິ່ງພາໃຫ້ເກີດຄວາມມ່ວນຊື່ນ, ເກີດຄວາມສັງເວດ, ເກີດຄວາມສະຫລົດໃຈ ຫລືຄວາມຕື່ນເຕັ້ນໃຈເປັນສ່ວນສຳຄັນ, ບໍ່ໄດ້ມຸ່ງໝາຍໃຫ້ເກີດຄວາມຮູ້ໂດຍກົງພຽງຢ່າງດຽວ ແຕ່ຫາກມີແນວທາງໃນການສັ່ງສອນສິນທຳ, ຈາລິຍະທຳ ແລະວັດທະນະທຳອັນດີໄປໃນຕົວຂອງວັນນະຄະດີ. ໜັງສືທີ່ແຕ່ງຂຶ້ນໃນທຳນອງດັ່ງກ່າວນີ້ ຈັດເປັນວັນນະຄະດີປະເພດຄຳຮ້ອຍແກ້ວ.

ວັນນະຄະດີປະເພດຄຳຮ້ອຍແກ້ວປະກອບດ້ວຍເທບນິຍາຍ, ພື້ນສືບ, ນິທານອັດສະຈັນ, ນິທານຊວນຫົວ, ນິທານສັດ, ເລື່ອງສັ້ນ, ເລື່ອງຈິງຄືນແທ້, ນະວະນິຍາຍເຫລົ່ານີ້ເປັນຕົ້ນ. ແຕ່ລະປະເພດເລື່ອງເລົ່າ ນີ້ບໍ່ແມ່ນເກີດຂຶ້ນໃນຍຸກສະໄໝ ແລະລະບອບສັງຄົມດຽວກັນ. ເທບນິຍາຍເກີດກ່ອນໝູ່ໃນສະໄໝສະຫະຊີບປະຖົມບູຮານ, ຖັດຈາກເທບນິຍາຍແມ່ນເລື່ອງພື້ນສືບ. ພື້ນສືບເກີດຂຶ້ນໃນໄລຍະທ້າຍຂອງລະບອບສະຫະຊີບປະຖົມບູຮານຕໍ່ໃສ່ສັງຄົມທີ່ມີການພັນແຍກຊົນຊັ້ນ, ບັນດາເຜົ່າເລີ່ມມີສະຕິເປັນເຈົ້າຈຸ້ມເຈື້ອເຊື້ອສາຍ ເຊິ່ງຕິດພັນກັບການກໍ່ຕັ້ງເມືອງບູຮານລາວເຊັ່ນ ພື້ນຄີໂຄດຕະບອງ, ພື້ນຈັນທະພານິດ, ພື້ນຂຸນບູລົມ, ພື້ນຂຸນເຈືອງ, ຕຳນານຫລວງພະບາງ, ຕຳນານວຽງຈັນ, ...

- ນິທານ: ໝາຍເຖິງເລື່ອງພື້ນເມືອງທົ່ວໄປທີ່ໄດ້ຮັບຜົນສະທ້ອນຈາກສາລະໜາພຸດລະຫວ່າງ

ສິນທຳ ແລະອະທຳ ເປັນຕົ້ນ ເລື່ອງທ້າວກຳພ້າຜີນ້ອຍ, ກຳພ້າງົວທອງ, ເລື່ອງຊຽງໝ້ຽງ, ສິນໄຊ, ແຕ່ງອ່ອນ, ກາລະເກດ, ຈຳປາສີ່ຕົ້ນ ແລະອື່ນໆ.

- ນິທານອັດສະຈັນ ເວົ້າລວມແມ່ນມີກົກເຄົ້າມາຈາກການດຳລົງຊີວິດຕົວຈິງຂອງປະຊາຊົນຜູ້ອອກແຮງງານ ແລະທັງມີກົກເຄົ້າມາຈາກເທບນິຍາຍ. ຕົວລະຄອນເຖິງແມ່ນຈະມີຮູບຮ່າງຜິດປົກກະຕິ, ຜິດ ສະດານເປັນຕາງຶດງໍ້ເຊັ່ນເລື່ອງ ອ້າຍຕຶກຄຶກ, ອ້າຍເຈັດໄຫ, ອ້າຍເກົ້າຮຸ້ງເກົ້າຮ່ວງ, ເລື່ອງພູມະໂລງ ພູບາ ຈຽງ,...

- ນິທານສັດ ໂດຍເອົາສັດມາເວົ້າ ເພື່ອແທນໃຫ້ຄົນເພື່ອໂຈມຕີຊົນຊັ້ນປົກຄອງໂດຍທາງອ້ອມ. ນິທານສັດໄດ້ກຳເນີດພ້ອມໆກັບນິທານອັດສະຈັນເຊັ່ນ ເລື່ອງ ນົກຖົວຫົວຫງອກ, ຊ້າງ ແລະເຜິ້ງໂກນ, ນົກເຄົ້າ ແລະແມວຟານ ເຫລົ່ານີ້ເປັນຕົ້ນ. ເນື້ອໃນນິທານສັດແມ່ນສັ່ງສອນສຳລັບຄົນທີ່ມີລັກສະນະສັດຈະທຳ ແລະປັດຊະຍາ.

- ນິທານຊວນຫົວ ແມ່ນຮູບການປະດິດແຕ່ງໜຶ່ງທີ່ແຕ່ງຂຶ້ນ ເພື່ອເຍາະເຍີ້ຍສຽດສີຕຳໜິຊົນຊັ້ນປົກຄອງທັງຕຳໜິໃນໝູ່ມະຫາຊົນ.

- ເລື່ອງຈິງຄົນແທ້ເປັນບົດເລື່ອງທີ່ຂຽນຂຶ້ນດ້ວຍການພັນລະນາ ຫລືເລົ່າເຫດການການເຄື່ອນໄຫວທີ່ເດັ່ນ ແລະມີຈິງຂອງບຸກຄົນທີ່ມີຄວາມສາມາດ, ອົງອາດກ້າຫານໃນການຕໍ່ສູ້ ແລະເຮັດວຽກໃດໜຶ່ງເພື່ອສັງຄົມ ເພື່ອຄົນຈຳນວນຫລາຍເຊັ່ນ ເລື່ອງສີທອງວິລະຊົນ, ນາງມາແມ່ຍິງສາມເກັ່ງ, ...

- ເລື່ອງສັ້ນ ເປັນວັນນະຄະດີຂຽນທີ່ຫາກໍກຳເນີດຂຶ້ນໃນສະໄໝປັດຈຸບັນຄື ເລີ່ມກຳເນີດຂຶ້ນແຕ່ປີ 1930 ເປັນຕົ້ນມາ. ເລື່ອງສັ້ນເປັນບົດເລື່ອງທີ່ໄດ້ປະດິດແຕ່ງຂຶ້ນດ້ວຍການພັນລະນາຕົວລະຄອນ ເພື່ອເປັນຕົວແທນໃຫ້ແກ່ການເຄື່ອນໄຫວດຳເນີນຊີວິດ ການອອກແຮງງານ ແລະການຕໍ່ສູ້ຂອງປະຊາຊົນ, ແຕ່ບົດເລື່ອງເຫລົ່ານັ້ນບໍ່ໄດ້ຂຽນຍາວ, ຕົວລະຄອນບໍ່ຫລາຍ ແລະຂໍ້ປົກຍ່ອຍບໍ່ກວ້າງເຊັ່ນ ບົດເລື່ອງ ລູກປືນນັດສຸດທ້າຍ, ຟອງແມ່ນ້ຳຂອງ, ຜູ້ສືບທອດ, ນ້ອງອານູ, ...

- ນະວະນິຍາຍແມ່ນບົດເລື່ອງທີ່ຍາວ ບົດເລື່ອງທີ່ໄດ້ຂຽນຂຶ້ນ ເພື່ອການພັນລະນາເຫດການ ແລະການດຳເນີນຊີວິດຂອງຕົວລະຄອນຢ່າງລະອຽດ ແລະຍືດຍາວ. ນະວະນິຍາຍລາວໄດ້ກຳເນີດເກີດຂຶ້ນໃນລະຫວ່າງປີ 1969 ເປັນຕົ້ນມາ. ນະວະນິຍາຍລາວກໍປະກອບມີຫລາຍບົດເລື່ອງເຊັ່ນ ສີນ້ອຍ, ເສັ້ນທາງແຫ່ງຊີວິດ, ຫວນຄືນຫລັງ, ສອງເອື້ອຍນ້ອງ, ພາຍຸຊີວິດ, ກອງພັນທີສອງ, ...

## 4.2. ປະເພດຮ້ອຍກອງ

ວັນນະຄະດີປະເພດຄຳຮ້ອຍກອງແມ່ນໜັງສືວັນນະຄະດີ ທີ່ຜູ້ແຕ່ງໄດ້ຄັດເລືອກເອົາຄຳເວົ້າແຕ່ລະຄຳມາຮຽບຮຽງເຂົ້າໃຫ້ຕິດຕໍ່ໜື່ເນື່ອງກັນໂດຍມີລະບຽບຂໍ້ບັງຄັບ ແລະສຳຜັດຄ່ອງຈ່ອງກັນ ເຊິ່ງພວກເຮົາມັກເອີ້ນວ່າ ຄຳກອນ ( ກາບກອນ ) ຫລື ກະວີ, ກາບກອນ ຫລືກະວີລາວເປັນປະເພດວັນນະຄະດີທີ່ໄດ້ຮັບຄວາມນິຍົມຈາກຄົນລາວຫລາຍກວ່າປະເພດອື່ນ; ດັ່ງນັ້ນ, ວັນນະຄະດີປະເພດນີ້ຈຶ່ງກຳເນີດ ແລະຂະຫຍາຍຕົວແຮງຕັ້ງແຕ່ກ່ອນຈົນເຖິງປັດຈຸບັນ. ວັນນະຄະດີປະເພດນີ້ມີຄວາມອຸດົມສົມບູນທາງດ້ານຈຳນວນ ແລະເນື້ອໃນສ່ອງແສງທີ່ມີປະໂຫຍດແທດເໝາະກັບວິຖີຊີວິດຂອງຄົນລາວ.

ກາບກອນ ຫລືກະວີລາວປະກອບມີສີ່ຢ່າງຄື ກາບ, ກອນ, ໂຄງ ແລະສານ (ບຸນເລີດ ແສງສຸລິນ, 1993: 318-372 ) ໄດ້ອະທິບາຍກ່ຽວກັບກາບກອນ ຫລືກະວີໄວ້ໂດຍລະອຽດ, ແຕ່ທີ່ນີ້ຂໍນຳເອົາກາບກອນສີ່ຢ່າງນັ້ນ ມານຳສະເໜີພໍໃຫ້ເຂົ້າໃຈໃນພາບລວມດັ່ງນີ້:

## – ກາບ

ກາບແມ່ນຄຳປະພັນຊະນິດໜຶ່ງທີ່ມີລັກສະນະຄ້າຍຄືກອນແຕ່ບໍ່ມີກົດບັງຄັບດ້ານຄຳປະຈຳບ່ອນ. ບັນຫາຫລັກຂອງກາບແມ່ນການສຳຜັດຈາກວັກນີ້ຕໍ່ໃສ່ວັກອື່ນ ຫລືເວົ້າຢ່າງໜຶ່ງ ການແຕ່ງກາບຮຽກຮ້ອງໃຫ້ມີພຽງແຕ່ການສຳຜັດລະຫວ່າງວັກຕໍ່ວັກ.

ລັກສະນະຂອງກາບບໍ່ນິຍົມກຳນົດຄຳປະຈຳບ່ອນ ໃຊ້ແຕ່ການສຳຜັດນອກ ຫລື ສຳຜັດບາວັກ ( ບາດຄຳທີເຈັດ ຫລືທີແປດຂອງວັກນີ້ ສຳຜັດກັບບາດຄຳທີສາມ ຫລືທີສີ່ຂອງວັກຕໍ່ໄປ ) ບໍ່ກຳນົດເຟື້ອງ ຫລືບາດ. ບາດໜຶ່ງມີເຈັດ ຫລືແປດບາດຄຳ. ເພິ່ນນິຍົມແຕ່ງເປັນກອນເຊີ້ງໃນບຸນງານຕ່າງໆ. ກອນກາບມີສອງຊະນິດ ຄື ກາບເຈັດ ເອີ້ນວ່າກາບເຍີ້ນ ແລະກາບແປດ ເອີ້ນວ່າ ກາບຕັດ. ກາບເຈັດແມ່ນເຊີ້ງໄປເທື່ອລະວັກ ແລະນິຍົມເຊີ້ງກັນແບບຊ້າໆຫລາຍກວ່າ; ສ່ວນກາບແປດແມ່ນໃຊ້ເຊີ້ງແບບໄວໆ ແລະເວລາເຊີ້ງແມ່ນນິຍົມເວົ້າ ຫລືເຊີ້ງໄປເທື່ອລະຕອນ ຕອນໜຶ່ງເວົ້າສອງເທື່ອ.

ຕົວຢ່າງ ກາບເຈັດ ( ກາບເຍີ້ນ )

" ກາບເຊີ້ງແຫ່ເຂີຍ "

ເອີເຮີເອີຍ
ແມ່ເຖົ້າເອີຍ
ລູກເຂີຍແກ້ວ
ມາຄຳຈູບ
ພວກໝູ່ເຈົ້າ
ຊິພໍໃຈ
ລູກເຂີຍກໍ່
ທັງແຂງແຮງ
ເນື້ອໜັງເປັ່ງ
ຖ້າຈະຖາມ
ເຂີຍບາກບັ່ນ
ແສນສະບາຍ
ຟັງທາງພີ້
ເລື່ອງຈິດໃຈ
ທັງສະຫລາດ

ເຮີເອີເຮີເອີຍ
ລູກເຂີຍມາແລ້ວ
ມາຄ້ຳມາຄູນ
ເຮືອນຊານແມ່ເຖົ້າ
ຊິວ່າຈັ່ງໃດ
ເອົາເຂີຍຫລືບໍ່
ເຂີຍລ້າງເຂີຍແປງ
ການງານກໍເກັ່ງ
ໜ້າຕາກໍງາມ
ເຖິງຄວາມດຸໝັ່ນ
ສຸດກົກສຸດປາຍ
ໄດ້ເຂີຍຜູ້ນີ້
ຊິກ່າວຂານໄຂ
ເຂີຍດີຂະໜາດ
ຄວາມຮູ້ວິຊາ

ນັບຖືຕາ        ແມ່ນາຍພີ່ນ້ອງ
ລູກເຂີຍຍ້ອງ        ຍໍໄວ້ບ່ອນສູງ
ນັບທັງລຸງ        ອ່າວອານ້າບ່າວ
ເຂີຍບໍ່ກ່າວ        ກາຍຮີດກາຍຄອງ
ເຂີຍໝາຍປອງ        ລູກສາວແມ່ເຖົ້າ
ໝາຍມາເຂົ້າ        ເປັນລູກເປັນຫລານ
ເປັນວົງວານ        ສືບໄປພາຍໜ້າ
ຫາກແມ່ນວ່າ        ພໍອົກພໍໃຈ
ຈິ່ງສືບໄຂ        ຕູເອົາເຂີຍເຂົ້າ
ໄປຫາເຈົ້າ        ສາວຖ້າຢູ່ໃນ
ອວຍພອນໄຊ        ສູ່ຂວັນຕາມຮີດ
ຢ່າໄປກີດ        ທາງຕູຂ້ອຍໄປ
ຢູ່ທາງໃນ        ລູກສາວແມ່ເຖົ້າ
ພວມນັ່ງເຝົ້າ        ລໍຖ້າເອົາເຂີຍ

( ແຕ່ງໂດຍ ອຈ. ບຸນເລີດ ແສງສຸລິນ, 27/1/1993 )

– ກອນ

ກອນແມ່ນວັນນະຄະດີປະເພດຄຳຮ້ອຍກອງຢ່າງໜຶ່ງ ທີ່ມີລັກສະນະເລິກເຊິ່ງທາງດ້ານອາລົມທັງມ່ວນຊື່ນ ມີສິລະປະ ແລະຫນັກແໜ້ນ. ກອນແມ່ນການນຳໃຊ້ພາສາຢ່າງມີສິລະປະ. ພາສາທີ່ໃຊ້ໃນການແຕ່ງກອນເປັນພາສາທີ່ມີຮູບພາບເດັ່ນ. ກອນທີ່ໄດ້ຮັບຄວາມນິຍົມໄດ້ແກ່ກອນຂັບ, ກອນລຳ, ກອນຮ່າຍ, ກອນຜະຫຍາ ເປັນຕົ້ນ.

ຕົວຢ່າງ ກອນຂັບ ແມ່ນແບບຮ້ອງພື້ນເມືອງຂອງປະຊາຊົນບັນດາເຜົ່າ ເຊິ່ງສ່ວນຫລາຍຕັ້ງພູມລຳເນົາຢູ່ທາງພາກເໜືອເຊັ່ນ ຂັບຊຳເໜືອ, ຂັບພວນ, ຂັບທຸ່ມ, ຂັບລື້. ສຳລັບຂັບຊຳເໜືອມີສອງຮູບການຄືຂັບດ່ຽວ ແລະຂັບຕໍ່ແຍ. ການຈະຂັບສັ້ນ ແລະຍາວນັ້ນມັນຂຶ້ນກັບອາລົມຈິດຂອງຜູ້ຂັບ ຕົວຢ່າງ

...ໂອນໍ!        ນ້ອງຮັກແພງໃຈຮຽມເອີຍ!
ອ້າຍກໍເລຍດາຍເດ        ງິ້ວພັດງີ້ວຫລາຍປີມັນຍັງຮ້ອງຕາຍ
ຄວາຍພັດຄວາຍ        ຫລາຍປີມັນຍັງຮ້ອງອູ້
ບາດວ່າຊູ້ພັດຊູ້        ໃຫ້ອ້າຍຢູ່ໃດເປັນເດ   ນ້ອງເອີຍ!
ຫລືວ່າເປັນນຳເວນກຳຊາດກ່ອນ        ອ້າຍມ້າງຮັ່ງນົກແຊວ  ຊັ້ນບໍ່?
ເປັນນຳເວນຊາດຫລັງ        ອ້າຍມ້າງຮັ່ງນົກນ້ອຍ
ແມ່ມັນປ້ອຍ        ເຮົາຈຶ່ງໄດ້ຈາກຄົນທາງ
ຄາວກ່ອນນາ! ໄປຊຸດຊຽດ        ອ້າຍກໍຍັງຈຳ ໃຫ້ນ້ອງຈ່ອງຊູ

ໄປຊຸດປູ · ຍັງຈຳໃຫ້ນ້ອງທົ່ວຂ້ອງ
ຊຽດຢ້ອງເຕັ້ນ ນ້ອງຈຳໃຫ້ອ້າຍແລ່ນນຳ ຊັ້ນນາ
ນ້ອງປັ້ນຊຽດ ກໍຍັງປັ້ນໃຫ້ໄຕຕາຍ
ນ້ອງປັ້ນຄວາຍ ພັດປັ້ນໃຫ້ໄຕນ້ອຍ
ອ້າຍຜູ້ໃຫ້ຈ້ອຍໆ ນ້ອງຈຶ່ງຕື່ມແຖມນຳ...

ຕົວຢ່າງ ກອນລຳສັ້ນ ຫລືລຳຕັດ

## " ສັງຂານຂອງຄົນບໍ່ທ່ຽງ "

ຟັງເບິ່ງກ່ອນ ··· ນັກປາດອາຈານ
ຜູ້ທີ່ຮູ້ຕຳນານ ສິກສາມາຊາບ
ຮູ້ຈັກບຸນຈັກບາບ ກາຍະສຳພັນ
ຊິເວົ້າເລື່ອງສັງຂານ ຂອງຄົນບໍ່ທ່ຽງ
ເປັນຄ້ອຍໆຫລ່ຽງໆ ຂຶ້ນໆລົງໆ
ບໍ່ໄປຕາມປະສົງ ຄົນເຮົາດອກທ່ານ
ຮຽນຄິດອ່ານ ແນນຢູ່ຫລາຍປີ
ມັນໄລດທຸກອັນມີ ປ່ຽນແປງບໍ່ຢ່ອນ
ເວົ້າເຖິງບ່ອນ ເນື້ອນໜັງມັງສາ
ຕອນຍັງໜຸ່ມທັ້ນນາ ທັງທັນທັງເຄັ່ງ
ເບິ່ງບ່ອນໃດກໍເປັ່ງ ຈົກຈັກຕຶງຕັ່ງ
ບາດແກ່ໄຕແລ້ວຫຍັງ ກໍຫລຸດກໍຜ່ອນ
ຕັ້ງແຕ່ບ່ອນ ກຳລັງວັງຊາ
ຊິເອັ້ນມັນຄືນມາ ກໍບໍ່ສົມປະກອບ
ມັນຕັ້ງໜີບໍ່ຄອບ ເຮົາດອກພິງສາ
ເມື່ອຍັງໜຸ່ມຮີບຫາ ວິຊາເອົາໄວ້
ໃຫຍ່ມາແລ້ວຈຶ່ງໄດ້ ມີວຽກການງານ
ຈຶ່ງຊິສຳລານ ຮຸ່ງເຮືອງເມືອໜ້າ
ບໍ່ແມ່ນຮຽນຫາວ່າ ເປັນຄຳຕັກເຕືອນ
ແຕ່ຕົວຈິງມັນເໝືອນ ຄວາມຮຽນເວົ້າອອກ
ຮຽນກໍພຽງແຕ່ບອກ ວິວັດມັນເປັນ
ສຸດແລ້ວແຕ່ຄວາມເຫັນ ທ່ານຈະໄດ້ຄິດຮຳ

( ແຕ່ງໂດຍ: ບຸນເລີດ ແສງສຸລິນ )

ຕົວຢ່າງ ກອນອ່ານແບບອັກສອນສັງວາດ

## ເລື່ອງ " ສາມັກຄີສ້າງບ້ານແປງເມືອງ "

| | | |
|---|---|---|
| + ບັດນີ້ຈັກກ່າວ ກອນຖະແຫລງເບື້ອງ | ໄຂຄວາມຄຳປະກອບ | ກ່ອນແລ້ວ |
| ຊຽນຂີດເປັນກາບແກ້ວ | ປະພັນຊີ້ຊ່ອງທາງ | ກ່ອນແລ້ວ |
| + ແນມເຫັນດວງດອກໄມ້ | ມະໄລເບີກບານສີ | ພຸ້ນເຍີ |
| ທຸກເທື່ອຕາມອງຫລີງ | ຊອກຊີມຊວນໃຫ້ | |
| ອາທິດທໍແສງຕ້ອງ | ສວຍງາມລຳລື່ນ | |
| ດິນລາວລືໄລກຮູ້ | ຂວັນຂ້ອຍຂອດບໍ່ລືມ | ໄດ້ແລ້ວ |
| + ໃບໜ້າຊາດຍິ້ມແຍ້ມ | ລົດຊື່ນມີສະເໜ | |
| ປະຊາແພງພັນຮັກ | ຮ່ວມແຮງໂຮມພ້ອມ | |
| ລູງອາວອາຫລານຫລ້າ | ຍິງລະກັນບ່າວເກົ່າ | |
| ໃຜກໍແຮງເຮັ່ງຈ້າວ | ທັນທ້າວວ່ອງໄວ | ແທ້ແລ້ວ |
| + ພໍ່ແມ່ ອ້າຍເອື້ອຍນ້ອງ | ພັນເຜົ່າຂັນແຂງ | |
| ດຸໝັ່ນທົນທະນົງອົດ | ບໍ່ຖອນຖອຍໜ້າ | |
| ສາມັກຄີໜາແໜ້ນ | ກິນກຽວກ້າແກ່ | |
| ຄືດັ່ງສາຍເຊືອກໄສ້ | ເກາະກ່ຽວກ່ຽວກົມ | ລະນາ |
| + ວຽກງານແສນຍາກຫຍຸ້ງ | ກໍບຸກເບີກບືນເຮັດ | |
| ທັນທົດໂຮມແຮງກັນ | ຮັກແພງພຽນພ້ອມ | |
| ຍຶດເອົາຄວາມເປັນເຈົ້າ | ຈິດໃຈປະກອບສ່ວນ | |
| ປົກປັກທັງສົບສ້າງ | ເມືອງແກ້ວເກີດເຮົາ | ລາວນີ້ |

( ແຕ່ງໂດຍ: ບຸນເລີດ ແສງສຸລິນ )

ຕົວຢ່າງກອນຮ່າຍ ( ເປັນບົດກອນທີ່ໃຊ້ລຳລັບສູ່ຂວັນ )

## ກອນຮ່າຍສູ່ຂວັນທົ່ວໄປ

| | |
|---|---|
| ສິສີສິດທິພະພອນ | ບໍ່ວອນອະຕິເລກ |
| ອະເນກະເຕຊາ | ມະຫາໄຊຍະມັງຄະເລດ |
| ທົ່ວທຸກເຂດໄດ້ລືຊາ | ພ້ອມກັນມາໂຮມເຮົ້າ |
| ມານັ່ງເຕົ້າພາຂວັນ | ຕາມບູຮານມີແຕ່ງໄວ້ |

ສົມມຸດໃຫ້ຜູ້ຂ້າເປັນພາມມະນາ ກ່າວຄາຖາຮຽກເອີ້ນ
ເພື່ອຈັກເຊີນເອົາຂວັນແຈ່ມເຈົ້າ ໃຫ້ມາເຕົ້າມາໂຮມ ມາເຢີຂ້ວນເອີຍ
ຂວັນເຈົ້າໄປທ່ຽວຫລິ້ນ ກໍໃຫ້ກັບຄືນມາ
ຂວັນເຈົ້າໄປຫລົງປ່າ ກໍໃຫ້ມາຄືນໄດ້ງ
ຂວັນເຈົ້າເດີນຫລົງທົ່ງ ຮ່ອມຫ້ວຍພູເຂົາ
ຫລົງເມົາມົວ ເດີນຊົມດວງດອກ
ຫລົງຖ່ຽວຊອກ ຊົມຫລິ້ນມ່ວນໃຈ
ເຄີຍຫລົງໄພ ບໍ່ເຫັນທາງຕ່າວ
ຮຽນກ່າວເອີ້ນ ຂວັນເຈົ້າຕ່າວຄືນ ມາເຢີຂວັນເອີຍ !
ຂວັນຫົວ ກໍໃຫ້ມາຢູ່ຫົວຍິ້ແຍ້ມ
ທັງຂວັນແກ້ມ ຂວັນຄິ້ວຂ້ວນຕາ
ທັງຂວັນຂາ ຂວັນແຂນຂວັນທ້ອງ
ໃຫ້ເຈົ້າກັບຄືນໝ້ອງ ບ່ອນເດີນເຄີຍຢູ່
ໃຫ້ເຈົ້າກັບຄືນສູ່ ບ່ອນອູ່ເຄີຍນອນ
ໃຫ້ເຈົ້າຄືນມາຊອນ ຮຽງໝອນໜ່ວຍເກົ່າ
ເຊີນແຈ່ມເຈົ້າ ຫວນໄດ້ງຕ່າວມາ ມາເຢີຂວັນເອີຍ !
ເຊີນຂວັນເຈົ້າມາກິນເຂົ້າ ຫອມອ່ອນດອມອາ
ເຊີນຂວັນເຈົ້າມາກິນປາ ດອມພີ່ງພີ່ນ້ອງ
ມາຮອດຫ້ອງ ເຮືອນແລ້ວຢູ່ດີ
ໃຫ້ເຈົ້າຈົ່ງສຸຂີ ໄພລີຢ່າລໍ່
ຢ່າພົບພໍ້ ຄວາມໂສກໂສກີ
ຕັ້ງແຕ່ນີ້ ໃຫ້ເຈົ້າຢູ່ຍືນຍົງ
ໃຫ້ເຈົ້າໃສຮົງໆ ຢ່າມີວັນຫລ່າ
ນັບແຕ່ນີ້ເມືອໜ້າ ໃຫ້ເຈົ້າຢູ່ສະຫວັດດີ
ໄຊຍະຕຸພະວົງ ໄຊຍະມັງຄະລະ
ໃຫ້ເຈົ້າມີອາຍຸ ວັນນະ ສຸຂະ ພະລະ ໝັ້ນຍືນໆ.

( ແຕ່ງໂດຍ: ບຸນເລີດ ແສງສຸລິນ, 3/12/1993 )

ຕົວຢ່າງ ກອນຜະຫຍາ

"ກອນຜະຫຍາທົ່ວໄປ "

1) ເຈົ້າຜູ້ປູກດອກຊ້ອນ ຊອນດອກບົວບົກ

ກົກບໍ່ທັນຝັງໝັ້ນ · ສັ່ງມາຈູບດອກ
ຮາກບໍ່ທັນຢັ່ງພື້ນ ສັ່ງມາປົ້ນປົ່ງໃບ

2) ຫອມດອກຈີກ ຄຶດຮອດບ້ານຫລັງ
ຫອມດອກຮັງ ຄຶດຮອດບ້ານເກົ່າ
ຫອມດອກຄັດເຄົ້າ ຄືຊິເຖົ້າບໍ່ເປັນ

3) ນ້ຳຕົກຕາດ ຄືນ້ອງແກວງຫລາ
ນ້ຳຕົກຜາ ຄືນ້ອງແກວ່ງອື້ວ
ຟ້າຍິກຄີ້ວ ຄືນ້ອງແກວ່ງແຂນ

4) ເຈົ້າຜູ້ໜີໄປໜ້າ ຫາກິນປາໜອງໃໝ່
ໜອງເກົ່າມີບໍ່ແພ້ ແສນຊິບ້ອນກໍບໍ່ຈີ່ມ

5) ເດືອນເພັງແຈ້ງ ແຍງເງົາພໍ່ພູມໝູ່
ໃຜຜູ້ມີຮູ້ແລ້ວ ຄະນຶງໄອ້ອ່າວຫລັງ

6) ທາງພີ່ສ້າງຂົວແປ້ນ ຕົວນ້ອງບໍ່ນຳ ແລນໍ
ທາງພີ່ສ້າງຂົວຄຳ ຕົວນາງບໍ່ໄຕ່
ບາດວ່າບ່າວໄທໄກ ສ້າງແຕ່ຂົວໄມ້ອ້
ມີແຕ່ຕໍ່ໄມ້ຕື້ວ ເປັນສັ່ງນກໍຄ່ອຍຄານ ຊັ້ນບໍ

7) ອ້າຍຢາກເມືອຢາມນ້ອງ ບໍ່ມີເຮືອນຊິເຊົາແວ່
ເມື່ອເຫັນແຕ່ພໍ່ແມ່ນ້ອງ ຕົວອ້າຍກໍຢາກໄຕນ

8) ບ້ານຮ້າງຢ່າແວ່ ສາວແກ່ຢ່າຈາ
ຢາກເຫັນໃຈອ້າຍ ໃຫ້ມີນຕາເບິ່ງນ້ຳແຈ່ວ
ຄັນວ່າຫວານດັ່ງອ້ອຍ ໃຈອ້າຍກໍດັ່ງດຽວ

9) ບາດວ່າລົມເປັນຮູ້ ແກງປາກໍວ່າອ່ຽນ
ບາດວ່າປ່ຽນຮູ້ແລ້ວ ປາປີ້ງກໍວ່າປີ້ງ

10) ຢ່າໄດ້ຕິຕຽນຂ້ອຍ ຄົນພອຍຜູ້ທຸກຍາກ ຫລາຍເນີ
ທຸກກໍທຸກແຕ່ແນວໃສ່ປາກ ຢາກກໍຢາກແຕ່ແນວໃສ່ທ້ອງ
ອຶດແຕ່ຂອງເຄື່ອງໃຊ້ ໃຈຂ້ອຍຫາກບໍ່ຈົນ

## " ກອນຜະຫຍາພາສິດ "

1) ເພິ່ນວ່າຫີນແຜ່ນລ້ານ ກ້ອນໃຫຍ່ຄືຊິໜັກ ນາງເອີຍ
ບາດວ່າເອົາສະໄນຕິດ ຊັ່ງຊາສັ່ງມາໄດ້

ຜີວ່າຕາມຕາຄົ້ວ.
ຄັນແມ່ນຕາບໍ່ຄົ້ວ

2) ອັດສະຈັນໃຈແຂ້
ບາດວ່າກະຕ່າຍທາງກ້ອນໆ

3) ໃຈປະສິງອ້າຍ
ນາຊ່າວມີບໍ່ແພ້

4) ເຫັນວ່ານໍ້າຫ້ວຍນ້ອຍ
ເຖິງລະດູເດືອນຝົນ

5) ດົງຫລວງບໍ່ມີໄມ້
ນໍ້າສະໝຸດບໍ່ມີຫີນກ້ອນລ້ານ

6) ກວາງກິນໝາກຂາມປ້ອມ
ລະມັ່ງຂີ້ບໍ່ໄດ້

7) ປາກແມ່ນຂໍ້
ປາກບໍ່ແມ່ນຂໍ້

8) ກົ້ງງແຕ່ນອກ
ກົ້ງງປາກບົ້ງ

9) ນໍ້າມາປາກິນໝົດ

10) ເຮືອຄາແກ້ງ
ບາດວ່າໄປຮອດນໍ້າ

ຄືສະໄບຊິຫນັກກວ່າ
ຊິເບົາເບື້ອງຝ່າຍສະໄບ
ສັງມາໄດ້ຮອງນັ່ງ
ສັງມາໄດ້ນັ່ງຮອງ ນາງເອີຍ
ຢາກໄຖນາເຮື້ອເກົ່າ ນາງເອີຍ
ໃຈອ້າຍບໍ່ປະສິງ
ຢ່າຟ້າວເກື່ອນຊາຍຖົ່ມ ໄດ່ເມີ
ອາດເກື່ອນເປັນວັງກວ້າງ
ຊິເອົາຫຍັງມາເປັນປາ
ຊິເປັນແກ້ງບ່ອນໃດ.
ໄປຄາກົ້ນລະມັ່ງ
ສາມມື້ກະຕ່າຍຕາຍ
ຂໍກິນກໍບໍ່ຖີ່
ຖາມຊື້ກໍບໍ່ຂາຍ
ທາງໃນເປັນໝາກເດື່ອ
ຂັ້ງຂໍ້ປາກກະທໍ
ນໍ້າລົດມົດກິນປາ
ກວຽນເຫັນໃຫ້ກວຽນແກ່
ເຮືອຊິໄດ້ແກ່ກວຽນ

## - ໂຄງ

ໂຄງ ຫລື ຄໍາໂຄງ ແມ່ນຄໍາປະພັນປະເພດໜຶ່ງ ແຕ່ງຂຶ້ນດ້ວຍການໃຊ້ຄໍາເວົ້າເກາະກ່າຍ ຫລື ຕິດຕໍ່ເນື່ອງລຽງກັນໄປ. ໂຄງບໍ່ນິຍົມໃຊ້ຄໍາສ້ອຍ ແລະຄໍາບຸພະບົດ. ຊາວລາວສະໄໝກ່ອນມັກໃຊ້ໂຄງ ເພື່ອໂສກວັດຖຸສິ່ງຂອງຕ່າງໆດ້ວຍຄວາມຫວັງວ່າ ຢາກຮູ້ວັດຖຸນັ້ນຈະເປັນມຸງຄຸນ ຫລືອັບປະມຸງຄຸນ. ຖ້າເປັນໂຄງຫົກ ແລະເຈັດ ເພິ່ນນິຍົມໃຊ້ເປັນກອນເຊີ້ງ, ລໍາຕັດ. ໂຄງມີຫລາຍຊະນິດ ແຕ່ລະຊະນິດເອີ້ນຕາມບາດຄໍາທີ່ປະກອບເປັນໂຄງນັ້ນຄື ໂຄງສອງ, ໂຄງສາມ, ໂຄງສີ່, ໂຄງຫ້າ, ໂຄງຫົກ ແລະໂຄງເຈັດ.

ຕົວຢ່າງ ໂຄງສອງ

+ ໂສກໄຕເພິ່ງ: ຊິກງົກ, ທົກກວຽນ, ຫຼຸນແອ່ນ, ແບນໄຕ, ໂສພາບ, ນາບຟານ, ຫານນໍ້າ, ຊໍ້ໄກນ ( ຊ້າງ, ງົວ, ຄຸດ, ແມວ, ລາຊະສີ, ເສືອ, ນາກ, ໝູ )

+ ໂສກຄັນເບັດ: ປ້ອງປູ, ປ້ອງປາ, ມາເປົ່າ, ເຂົ່າຄອນ, ໜອນເຈາະ, ເອາະກິນ

ຕົວຢ່າງ ໂຄງສາມ

+ ໂສກກອງ: ສີຊົມຊື່ນ, ເຮືອນເມືອງພົມ, ສົມຢູ່ສ້າງ, ນາງສັງໂຄ, ໄພທີສັດ, ວັດພະ

ເຈົ້າ, ເຕົ່າຄືນໂຮມ.

+ ໂສກຫວາຍ: ຫູນກາງດົງ, ຊົງກາງຫ້ວຍ, ສ້ວຍກາງລຳ, ຊຳກາງຂ່ວງ, ລ່ວງກາງບ້ານ, ຕອນລວ້ານກາງເຮືອນ ( ປີນ, ກວາງ, ສາກ, ໝາ, ແມວ, ອູ່ )

ຕົວຢ່າງ ໂຄງສີ່

+ ໂສກແປ້ນເຮືອນ: ປູ່ຫອມຍ່າຫອມ, ຫ້ອນຫອມຂອງໄວ້, ຂີ້ໄຮ້ເທົ້າຕາຍ, ບາຍຖືງຄັ້ງວໝາກ, ນົກປາກອົມບອນ, ຂອນຜີບໍ່ຂາດ, ຍາດນິດນາລົມ, ອຸດົມທຸກສິ່ງ, ເປັນມິ່ງຂວັນເຮືອນ.

ຕົວຢ່າງ ໂຄງຫ້າ

+ ໂສກຄັນແຮ້ວ: ຫ້າງແຮ້ວຖືກຕືນສານ, ບໍ່ນານຂາດເປັນບັ້ນ, ຖືກຄັ້ນຢຽບລົງດິນ, ນົກພາບິນສູ່ໄມ້, ໄດ້ສິນດັ່ງໃຈປອງ, ມີໃຈຫອງຢາກເຂົ້າ, ບໍ່ຕ້ອງເຝົ້ານານເລີງ.

ຕົວຢ່າງ ໂຄງຫົກ

+ ໂສກວັນປູກພືດ:

| | |
|---|---|
| ທິດ | ເປັນຮາກເຫງົ້າທີ່ວດີ |
| ຈັນ | ເຄືອຍາວຮີບໍ່ມົ້ວ |
| ຄານ | ເປັນພົ້ວໝາກດົກໝາ |
| ພຸດ | ມີມາລາບໍ່ເສົ້າ |
| ພະຫັດ | ໝາກແຕ່ເຄົ້າເຖິງປາຍ |
| ສຸກ | ເປືອງໝາຫລາຍເຫລືອຍິ່ງ |
| ເສົາ | ມີກ້ານກິ່ງລຳງາມ |

24 / VII

ຕົວຢ່າງ ໂຄງເຈັດ

+ ໂສກເຊີ້ງແບບກາບ

| | |
|---|---|
| ເມືອງວຽງຈັນ | ສວຍງາມສະອາດ |
| ມີຕະຫລາດ | ຂາຍເຂົ້າຂາຍປາ |
| ຫ້ງວັດວາ | ຫໍໂຮງກໍໃຫຍ່ |
| ຖະໜົນໄຕ່ | ຕິດຕໍ່ເປັນສາຍ |
| ເກີນສະບາຍ | ໄປມາບໍ່ຍາກ |
| ມີລົດລາກ | ລົດແກ່ລົດຍົນ |
| ຢູ່ເທິງບົນ | ເຮືອເຫາະບິນເວີ້ນ |
| ລົງຈອດເດີ່ນ | ສະໜາມວັດໄຕ |
| ຄົນລາວເຮົາ | ຈິດໃຈເຜື່ອແຜ່ |
| ແຂກມາແວ່ | ເຊີນຮ່ວມພາຫາຍ |
| ລາວຮັກຫອມ | ສຳພັນຮັກທໍ່ |
| ຫ້ງຕັ້ງຕໍ່ | ຄວາມສາມັກຄີ |
| ມິດໄມຕີ | ຈິງໃຈສະອາດ |

ຫ້າມຈຳໜ່າຍ

ທົ່ວທັງຊາດ .                    ເໜືອໃຕ້ດັ່ງດຽວ

**- ສານ**

ຄຳວ່າ ສານ ຫລື ກອນສານ ນີ້ກໍແມ່ນຄຳປະພັນປະເພດໜຶ່ງທີ່ມີການເນື່ອງສຽງຄ້າຍຄືກັບກອນອ່ານ ແລະກອນລຳ. ອັນທີ່ແຕກຕ່າງຈາກກອນອື່ນໆກໍຄືວ່າ ສານນຳໃຊ້ສັນທະກະວີແບບປະສົມ, ບໍ່ເຄັ່ງຄັດຕາຍໂຕໃນຫລັກການ. ອັນສຳຄັນບໍ່ພຽງແຕ່ໃຫ້ເນື່ອງສຽງ ແຕ່ຍັງສະແດງໄດ້ອາລົມ.

ຕົວຢ່າງ 1 : ສານລົບພະສູນ

ໂອນໍ ສານນີ້ຊື່ວ່າ ສົມທີ່ຄິດຄ່າລ້ານ    ມະນີສີດວງປະເສີດ
ຈັກຂອດໄຮງຕ່ອນຕົ້ນ    ຖະໜອມແກ້ວຄ່າເມືອງ
ວ່າຢາກຜາຍພົນລ້ອມ    ມະຫານິນຮຽງຜ່າງ
ແສງອ່ອນອ້ວນ    ພິລາເຂັ້ມເຮືອງເຮືອງ
ຮຽມຢາກໄປວານຝູງພີ່ນ້ອງ    ວິງວານໃຫ້ມາຊ່ວຍ    ຊິຄືລີ
ທັງໝູ່ຫໍ້    ກະເລີງພ້ອມພຳແກວ
ເຊີນແມມາຜັດສີແກ້ວ    ທຳມະໂລງໃຫ້ຮຸ່ງແຈ້ງ    ແດ່ທ້ອນ
ຫລອນວ່າບຸນສິ່ງໃຫ້    ແສງເທົ້າທົ່ວເມືອງ    ບໍ່ຮູ້
ໂອນໍ    ຮຽມນີ້ເປັນດັ່ງປາຕາຍຂ້ອນ    ໜອງນານກໍເຂີນຂາດ
ຝົນບໍ່ມາສິ່ງໃຫ້    ຕາຍແລ້ງແດດເຜົາ
ຄິດຕໍ່ດອກຄັດເຄົ້າ    ບານຢູ່ກາງດົງ
ຄິດຕໍ່ເຄືອພາຍສົງ    ກໍເລົ່າມີລຳກ້ຽວ
ອັນໜຶ່ງເປັນດັ່ງຟ້າຜ່າໄມ້    ລຳລ້ຽວແລບໃຈ
ເຈົ້າທໍ່ມາຄາຄ້າງ    ກະຈວນຈັບຊິດໃຫຍ່
ຜີບໍ່ຄາໜີບໄວ້    ຊິໝາຍທົ້ວຫອບເອົາ    ພີ່ແລ້ວ

( ອ້າງໃນ ບຸນເລີດ ແສງສຸລິນ, 1993, 1993: 370 )

ຕົວຢ່າງ 2 : ສານຮັກ

ຊາຍ: ສານນີ້ ຊື່ວ່າທີ່ງຄຳຜ້າຍ ເວຫາເທິນເມກ ຈິດປະສົງຈອດຢັ້ງ ຫວັງນ້ອງຝາຍໄກ ຕົນພີ່ ນີ້ປຸນປຽບໄດ້ ຊາຍຊາດພະເນຈອນ ບິນວ່ອນຕາມເວຫາ ສ່ອງລົງບໍ່ເຫັນກາກໍ ຈັກແມ່ນກຳຫຍັງອ້າຍຈຶ່ງກາຍ ເປັນທີ່ງປຽວ ຫລຽວງວາກຫາກິ່ງໄມ້ ໄຊຕົ້ນກໍບໍ່ມີ ຄັນນ້ອງມີແນວຕົ້ນ ໄພໄຊໃຫ້ຂ່າວແດ່ເນີ ພໍໃຫ້ທີ່ງປີກຫັຽນ ໄດ້ເກາະກ້ຽວກິ່ງໄຊແດ່ແນ,...

ຍິງ: ສານນີ້ ຊື່ວ່າໄພໄຊກວ້າງ ສາຂາງາມຕົ້ນໄມ້ໃຫຍ່ ໃຈປະສົງຕໍ່ເຈົ້າທີ່ງແກ້ວ ຜູ້ເວີ່ນຫາ ຢ້ານແຕ່ທີ່ງຄຳຜ້າຍ ກາຍໜີບໍ່ຫລຽວເບິ່ງນັ້ນແລ້ວ ຕິວ່າໄຊຕ່ຳເຕ້ຍ ຊິເລຍຊຳຊາດສະກຸນ ຊາດທີ່ແນວນາມຕົ້ນ ໄຊສົມແຕ່ນົກຈາບຕິບໍ່ ແນວທີ່ງເວີ່ນຢູ່ຟ້າ ບໍ່ຫວັງຊໍ້ວ່າຊິງອຍລະຕິ ຫາກແມ່ນທີ່ງປະສົງແທ້

ໄຊໂພຕົ້ນ ໄມ້ຕຳ ເຊີນທີ່ງບິນເຈີດຜ້າຍ ມາພີ່ຜູ່ດູເບິ່ງດູ ຢ້ານວ່າຢູ່ໄກເຫັນແຕ່ໄຊຕົ້ນ ວ່າງາມຕາເປັນຕາຢູ່ ບາດວ່າເຫັນ ໃກ້ແລ້ວ ຢ້ານທີ່ງແກ້ວບໍ່ຢາກງອຍ ຫັ້ນແລ້ວ, ...

ຕົວຢ່າງ 3 : ສານຈາກສາລິກາ

ສານນີ້ ຂຽນທີ່ກຳຝ່າຍຫ້ອງ ປັກກິ່ງຫອງນະຄອນໃຫຍ່ ວັນທີ່ໃຈຄິດຮອດນ້ອງ ວຽງກວ້າງ ຖິ່ນໄກ ເດືອນໄຂຫວນເຫັນໜ້າ ຈຶ່ງຂຽນມາຕ້ານຕໍ່ ປີ ຄ. ສ. ຄິດຢາກພໍ້ ຈຶ່ງລົງແຕ້ມແຕ່ງສານ.

ໂອນໍ ສານນີ້ຊື່ວ່າສາລິການ້ອຍ ຜູ້ເນີາພອຍພາກຄູ່ ໄປຮ່ວມຮຽນຮ່ຳຮູ້ ວິຊາກ້າວຢູ່ຖິ່ນໄກ ຍາມ ໄປມາຊຶມໜລົ້ນ ນະຄອນຫລວງຄືວ່າມ່ວນ ຫາກແມ່ນມີນາດນ້ອງ ຄຽງຂ້າງຊິມ່ວນຫລາຍ ຍາມ ເດືອນຫງາຍ ໃສແຈ້ງ ແຍງເງົາຄືຊິຄ່ອງງາມເດ ນ້ອງຜູ້ເນີາຢູ່ສ້າງວຽງພີ່ຊິລ່ຳແລບໍ່ມໍ ນາງເອີຍ! ອິດສາ ຊອນຕາສິ້ງ ຫລິງຈັນ ເພັງຕາງພີ່ ເອົາເນີ ອ້າຍຜູ້ເນີາຢູ່ພຸ້ນ ກໍຊອນສິ້ງດັ່ງດຽວ ພອຍເສົ້າດັ່ງຈັນ.

ຍາມເຮົາແນມເບິ່ງຟ້າ ກໍແມ່ນເວລານັ້ນ ຄວາມຜູກພັນຮັກທໍ່ ທໍຮັບແສງອ່ອນນິ້ມ ດວງຈັນ ເຈົ້າແຕ່ງລົງ ຄັນແມ່ນໃຈປະສົງອ້າຍ ຢາກໝາຍບິນເທີນເມກພຸ້ນແລ້ວ ມາຫາແກ້ວແກ່ນຫລ້າ ພະອວນ ນ້ອງຜູ້ຢູ່ໄກ ດຽວນີ້ພໍແຕ່ໄດ້ແນມເບິ່ງແສງຈັນນວນ ຕາງວ່າອີງນວນນາງອາດຊິແນມໄດ້ ຍາມໃດຈັນ ຈອນເສົ້າ ເຊົາໜີຢ່າຊິເບິ່ງນາງເອີຍ ຢ້ານວ່າໃຈມັນຊິຄິດຄ້ອຍໆພອຍເສົ້າດັ່ງຈັນ.

ຄິດຮອດຫລາຍຈຶ່ງໄດ້ບາຍສໍແຕ້ມອັກສອນສານຂຽນສົ່ງ ດ້ວຍປະສົງຢາກຮູ້ວ່ານ້ອງຢູ່ຈັ່ງໃດ ຄ່ຳ ຄືນວັນຮຸ່ງເຊົ້ານ້ອງຍັງຢູ່ສະບາຍສຸກ ຫລືວ່າມີອຸກໃຈບໍ່ສະບາຍເບົາເນື້ອ ຫລືວ່າເຊືອນາງນ້ອງອວນ ແພງນ້ອງພີ່ ມີວຽກງານຍາກຫຍຸ້ງເກີນລຳລົ້ນປະມານ ນາງຜູ້ຢູ່ທາງບ້ານມີຂ່າວດີບອກອ້າຍແດ່ ຫລອນ ວ່າຫາຍ ໂສກກຸ້ມເຫງົາງ້ວງສວ່າງໃຈບໍ່ຮູ້.

ຄ້ອຍໃຈຫລາຍວັນໄດ້ຄອຍສານນາງບໍ່ຄືນຕອບ ບາງຄືນຮອດພ່ຳເພີ້ລະເມີໃບ້ຈິ່ມຫາ ຝັນວ່າ ອວນອຸ່ນອ້າຍ ຂຽນສານຊາຍຕອບສົ່ງ ບອກວ່າຄົງຫ່ຽງໝັ້ນສະເໝີກີ່ກ່ອນມາ ມືນຕາຕາພັດແມ່ນຫ້ອງ ເພື່ອນ ຮ່ວມຮຽນເປັນໝູ່ ຜູ້ທຸກໃຈແມ່ນອ້າຍແລນເສົ້າແນບໃນ ລະທົມຫລາຍນັ່ງເສົ້າເອົ້າອັ່ງບໍ່ມີວາຍ ສານຊາຍ ກາຍເປັນໝັນບໍ່ຕອບໄງຄືນໂຄ້ງ ອັດນາງສົ່ງສານດ້ວຍຕົວອັກສອນຂຽນກ່າຍແດ່ແມ ແມ່ນວ່າ ດີແລະຮ້າຍ ກໍຂໍໄດ້ຕອບສານແດ່ເນີ.

ອ້າຍຂໍລາສັ່ງສຽງສານຊາຍຊິລາກ່ອນ ນາງເອີຍ ພອນໃດດີ ອ້າຍຂໍຍໍມອບມ້ວນພະອວນ ນ້ອງ ຈົ່ງຢູ່ດີເທາະເນີ. ( ສາລິກາ, 7/12/1993 )

## 4.3. ປະເພດການສະແດງເທິງເວທີ

ວັນນະຄະດີປະເພດການສະແດງເທິງເວທີ ແມ່ນວັນນະຄະດີທີ່ແຕ່ງຂຶ້ນສຳລັບການສະແດງ. ວັນນະຄະດີປະເພດນີ້ໄດ້ປະສົມປະສານລະຫວ່າງປະເພດຄຳຮ້ອຍແກ້ວ ແລະຮ້ອຍກອງ ປະສົມສິລະປະ ການສະແດງ ເຊິ່ງປະກອບດ້ວຍວາດຟ້ອນ ທ່ານອງເສບ ແສງສີແສງ ທີ່ປະກອບດ້ວຍການປະພຶດ ແລະ ພາສາຄຳເວົ້າຂອງຕົວລະຄອນ. ການສະແດງເທິງເວທີປະກອບດ້ວຍຫລາຍຢ່າງເຊັ່ນ ລຳເລື່ອງ, ລະຄອນ ຂັບລຳທ້ອງຖິ່ນ.

- ລຳເລື່ອງ ແມ່ນຮູບການເລົ່າເລື່ອງແບບພິເສດ ເພາະລຳເລື່ອງແມ່ນການນຳເອົາເລື່ອງພື້ນ

ເມືອງ, ບົດນິທານ ບົດປະພັນ ເລື່ອງຈິງຄົນແທ້ມາປະສົມກັບສິລະປະການລຳ. ເຊິ່ງລຳໄປຕາມເຫດການຂອງເລື່ອງ. ສິລະປະການລຳມີລັກສະນະການປະສົມປະສານລະຫວ່າງລຳເລື່ອງ ລຳເພີນ ລຳເຕີ້ຍ ປະກອບກັບສຽງດົນຕີ ເຊັ່ນ ແຄນ, ຊໍ, ... ເຮັດໃຫ້ເລື່ອງມີສີສັນ ເປັນຕາເບິ່ງຕາຊົມ. ດັ່ງນັ້ນ ລຳເລື່ອງຈຶ່ງເປັນການສະແດງເທິງເວທີ ປະເພດໜຶ່ງທີ່ໄດ້ຮັບຄວາມນິຍົມຈາກປະຊາຊົນລາວມາເປັນເວລາດົນນານ. ປັດຈຸບັນນີ້ບໍ່ທັນໄດ້ຮັບການສົ່ງເສີມ ແລະພັດທະນາໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

- ລະຄອນແມ່ນບົດວັນນະຄະດີທີ່ປະດິດແຕ່ງຂຶ້ນ ສຳລັບສະແດງເປັນລະຄອນເຊັ່ນ ລະຄອນກ້ອມ, ລະຄອນວິທະຍຸ, ລະຄອນໂທລະພາບ, ລະຄອນເວົ້າເປັນຕົ້ນ. ວັນນະຄະດີລາວປະເພດລະຄອນຖ້າທຽບໃສ່ປະເພດອື່ນໆເຫັນວ່າ ບໍ່ທັນຂະຫຍາຍຕົວເທົ່າທີ່ຄວນ ເພາະບໍ່ທັນມີບົດລະຄອນທີ່ໃຫຍ່ ແລະໂຮງລະຄອນທີ່ໃຊ້ສະແດງລະຄອນ. ບົດລະຄອນສ່ວນຫລາຍຈະເປັນລະຄອນກ້ອມທີ່ສະແດງຂັ້ນລາຍການການສະແດງ. ບົດລະຄອນທີ່ນຳອອກສະແດງກໍເປັນບົດນ້ອຍໆເຊັ່ນບົດລະຄອນບ້າຍົດ, ແນນນຳສິ່ງ ແລະ ບາບໄລ່ເວນທັນ ທີ່ສະແດງໃນເຂດວຽງຈັນສະໄໝເກົ່າ; ສ່ວນປັດຈຸບັນກໍມີລະຄອນວິທະຍຸເຊັ່ນເລື່ອງ ພັນທະທົວໃຈ ແລະອື່ນໆ.

- ຂັບລຳທ້ອງຖິ່ນ ແມ່ນໝາຍເອົາບົດວັນນະຄະດີ ທີ່ແຕ່ງຂຶ້ນດ້ວຍຮູບການກາບກອນ ປະສົມປະສານກັບສິລະປະຂັບລຳທ້ອງຖິ່ນ ເພື່ອໃຊ້ສຳລັບການຂັບລຳໃນງານບຸນຕ່າງໆ. ການສະແດງຂັບລຳເປັນປະເພດວັນນະຄະດີ ທີ່ໄດ້ຮັບຄວາມນິຍົມຈາກປະຊາຊົນລາວທົ່ວທຸກພາກ. ດັ່ງນັ້ນ, ວັນນະຄະດີປະເພດນີ້ ຈຶ່ງກຳເນີດ ແລະຂະຫຍາຍຕົວແຮງ ທັງສະແດງອອກຫລາຍຮູບຫລາຍແບບຫລາຍຈັ່ງຫວະຕາມແຕ່ລະ ທ້ອງຖິ່ນເຊັ່ນ ຂັບຊຳເໜືອ, ຂັບລື້, ຂັບທຸ້ມ, ລຳຜູ້ໄທ, ລຳຄອນສະຫວັນ, ລຳສີພັນດອນ, ...

# ບົດທີ 2

## ບົດບາດຄວາມສຳຄັນຂອງວັນນະຄະດີ

### 1. ວັນນະຄະດີມີຄວາມສຳຄັນຕໍ່ຊີວິດ

#### 1.1. ວັນນະຄະດີແມ່ນອາຫານບຳລຸງຈິດໃຈມະນຸດ

ອາຫານແມ່ນສິ່ງສຳຄັນໃນການຫລໍ່ລ້ຽງຊີວິດຂອງຄົນເຮົາໃຫ້ເຕີບໃຫຍ່ ແລະແກ່ຊະລາໄປຕາມອາຍຸສັງຂານ. ອາຫານທີ່ຫລໍ່ລ້ຽງຊີວິດຂອງຄົນເຮົາມີສອງປະເພດຄື ອາຫານທີ່ຫລໍ່ລ້ຽງທາງດ້ານຮ່າງກາຍສາມາດສຳຜັດໄດ້ໂດຍຜ່ານລີ້ນ ແລະປາກໃຫ້ຮູ້ລົດແຊບຂອງອາຫານຕ່າງໆເຊັ່ນ ເຂົ້າ, ປາ, ອາຫານ, ສົ້ມ, ຫວານ, ເຄັມ,...; ສ່ວນອາຫານທີ່ຫລໍ່ລ້ຽງທາງດ້ານຈິດໃຈຂອງມະນຸດສາມາດສຳຜັດຮູ້ໄດ້ໂດຍຜ່ານຄວາມຮູ້ສຶກທາງໃຈ. ລົດຊາດແຊບນີ້ທີ່ເຮັດໃຫ້ຄົນເຮົາເກີດຄວາມຮູ້ສຶກທາງໃຈໄດ້ມີໄວ້ໃນບົດວັນນະຄະດີເປັນສ່ວນໃຫຍ່.

ລົດແຊບຂອງວັນນະຄະດີໃຫ້ຄຸນປະໂຫຍດບໍ່ໜ້ອຍກວ່າລົດແຊບຂອງອາຫານ. ວັນນະຄະດີມີລົດແຊບດູດດື່ມຈິດໃຈແນວໃດນັ້ນ ເຮົາສາມາດສັງເກດໄດ້ດັ່ງນີ້:

1) ເມື່ອເຮົາອ່ານຕຳລາແບບຮຽນຕ່າງໆ ມີຈຸດປະສົງເພື່ອເຂົ້າໃຈ ແລະຊອກຫາບ່ອນທີ່ເຮົາຕ້ອງການຈະໃຊ້ມັນ. ເມື່ອພົບບ່ອນທີ່ຕ້ອງການຈະໃຊ້ແລ້ວ ເຮົາກໍ່ບໍ່ຢາກອ່ານຕໍ່ໄປອີກ. ກົງກັນຂ້າມ ເຮົາອ່ານໜັງສືວັນນະຄະດີທີ່ເຮົາມັກເຮົາຖືກໃຈແລ້ວ ຈະຮູ້ສຶກວ່າບໍ່ຢາກເຊົາ, ອ່ານໄປມ່ວນໄປ ແລະລືມໃຈເບື່ອເລື່ອງໄປເລື້ອຍໆຈົນລືມເມື່ອຍ ບາງເທື່ອລືມຮອດຢາກກິນເຂົ້າ, ນີ້ກໍ່ເພາະວ່າລົດແຊບຂອງວັນນະຄະດີ.

2) ເວລາເຮົາໄປຟັງໝໍລຳເລື່ອງ, ໄປຟັງໝໍລຳໝູ່, ໄປຟັງຂັບຕໍ່ແຍລະຫວ່າງຍິງຊາຍກ້ຽວພະຫຍາໃສ່ກັນ ຫລືໄປຟັງເພງ, ໄປເບິ່ງຄອນເສີດ, ຖ້າຄິດເຖິງປະໂຫຍດທາງດ້ານເສດຖະກິດ ແມ່ນມີຜົນເສຍຫາຍຫລາຍດ້ານເຊັ່ນ ເສຍເວລາ, ເສຍວຽກ ແລະເສຍເງິນ ເພາະຕ້ອງໄດ້ຊື້ປີ້ເຂົ້າຊົມການສະແດງ, ບາງຄັ້ງອົດນອນ, ແຕ່ເຮົາກໍ່ມັກໄປ ແລະຈ່າຍເງິນຄ່າເຂົ້າຊົມຈົນເລີກຈຶ່ງກັບ; ນີ້ກໍ່ເພາະເຮົາມັກໃນລົດແຊບຂອງວັນນະຄະດີ.

3) ເວລາເຮົາເຮັດວຽກມາເມື່ອຍໆ ຫລືບາງຄັ້ງເຮົາໄດ້ເຮົາໄດ້ຮັບຄວາມທຸກຍາກລຳບາກໃຈໃນເລື່ອງສ່ວນຕົວເປັນຕົ້ນວ່າ ລູກຕາຍເສຍເມຍຕາຍຈາກ, ມີຄວາມທຸກຍາກຂາດເຂີນ ເຂົ້າຂາດແລງແກງຂາດໝໍ້, ເຮັດວຽກງານທຳມາຄ້າຂາຍອັນໃດກໍ່ບໍ່ຈະເລີນກ້າວໜ້າ. ຄວາມທຸກຕ່າງໆທີ່ກ່າວມານັ້ນ ມາທັບຖົມຫົວໃຈຂອງເຮົາ ເຮັດໃຫ້ເຮົາບໍ່ມີຄວາມສຸກ ຄິດນ້ອຍໃຈໃນວາດສະໜາ ຄິດວ່າໂລກນີ້ມີແຕ່ເຮົາຄົນດຽວທີ່ໄດ້ຮັບຄວາມທຸກເຂັນຈົນໃຈດັ່ງນີ້. ແຕ່ເມື່ອເຮົາອ່ານໜັງສືວັນນະຄະດີ, ຟັງນິທານ, ເບິ່ງໜັງເລື່ອງເຮົາຈະພົບ ຕົວລະຄອນບາງເລື່ອງ ຍັງໄດ້ພົບບັນຫາຄວາມຫຍຸ້ງຍາກກວ່າເຮົາ, ຈາກນັ້ນພາໃຫ້ເຮົາຕັ້ງສະຕິໄດ້ ແລະບັນເທົາຄວາມທຸກໂສກຂອງເຮົາລົງໄດ້ທັນທີ; ນີ້ກໍ່ເພາະລົດແຊບຂອງວັນນະຄະດີ.

ຈາກບັນຫາທີ່ກ່າວມານີ້ ຈຶ່ງເປັນອັນແນ່ນອນວ່າວັນນະຄະດີມີລົດແຊບ ແລະເປັນອາຫານບຳລຸງຊີວິດຂອງມະນຸດໃຫ້ສົດຊື່ນ ແຈ່ມໃສ, ສາມາດດຳເນີນຊີວິດຢູ່ໄດ້ບໍ່ໜ້ອຍກວ່າລົດແຊບຂອງອາຫານທີ່ຫລໍ່ລ້ຽງຮ່າງກາຍຂອງຄົນເຮົາໃຫ້ເຕີບໃຫຍ່.

## 1.2. ວັນນະຄະດີຊ່ວຍໃຫ້ມີຄວາມສຸກ, ເບີກບານ ແລະແຈ່ມໃສ

ວັນນະຄະດີແມ່ນສູນລວມກ່ຽວກັບຊີວິດຂອງຫລາຍຄົນ. ດັ່ງນັ້ນ ຖ້າຄົນເຮົາຮູ້ແຕ່ວິຊາອາຊີບຢ່າງດຽວ ເຖິງວ່າຈະຮູ້ເລິກແລບກວ້າງຂວາງປານໃດກໍຕາມ ຖ້າຄົນເຮົາບໍ່ມັກວັນນະຄະດີແລ້ວ ກໍຈະເປັນຄົນມືວເມົາແຕ່ນຳວຽກງານທີ່ກ່ຽວຂ້ອງກັບຊີວິດທາງດຽວ ບໍ່ຫລຽວເຫັນຊີວິດອັນແທ້ຈິງຂອງຕົນ ແລະຄົນອື່ນກໍເລີຍ ເກີດເປັນຄົນມີນິໄສໜັກໄປທາງຄວາມຢາກຫລາຍເກີນໄປ, ເລີຍກາຍເປັນຄວາມໂລບ ຢາກໄດ້ແຕ່ຕົນຝ່າຍດຽວ ບໍ່ຫລຽວເຫັນຄົນອື່ນ. ເມື່ອຄວາມໂລບເຂົ້າມາບັງຄັບຫົວໃຈແລ້ວ, ຄົນຜູ້ນັ້ນ ກໍຈະບໍ່ມີຄວາມສຸກເລີຍ, ຊ້ຳບໍ່ໜຳ ເຂົາອາດຈະປະພຶດຜິດຈາກສິນທຳໄປໄດ້ຢ່າງງ່າຍດາຍ ເພາະຄວາມໂລບ. ສະນັ້ນ ຈຶ່ງເຫັນໄດ້ວ່າ ຄວາມຮູ້ທາງດ້ານເສດຖະສາດ, ກະສິກຳ, ອຸດສາຫະກຳ ຫລືວິຊາຄວາມຮູ້ອື່ນໆທີ່ພາໃຫ້ເກີດຄວາມ ຈະເລີນຮຸ່ງເຮືອງທາງດ້ານວັດຖຸນັ້ນເປັນພຽງປັດໃຈ ຫລືຫົນທາງອັນພາໃຫ້ເດີນໄປຫາສິນບັດ. ສ່ວນຄວາມສຸກອັນແທ້ຈິງຂອງຊີວິດ ນັ້ນແມ່ນຄວາມສະບາຍໃຈ, ຄວາມເບີກບານໃຈ ແລະສິ່ງທີ່ພາໃຫ້ຊີວິດມີຄວາມ ເບີກບານໃຈໄດ້ນັ້ນ ສ່ວນໜຶ່ງກໍແມ່ນວັນນະຄະດີ.

ຫລາຍຮ້ອຍປີຜ່ານມາແລ້ວ, ມີນັກປາດຊາເກຣັກຜູ້ໜຶ່ງຊື່ ປາລະໂຕ ໄດ້ກ່າວໄວ້ວ່າ " ສິ່ງທີ່ເຮັດໃຫ້ມະນຸດມີຄວາມສຸກ ແລະ ເບີກບານໃຈນັ້ນຄືຄວາມງາມ, ຄວາມດີ ແລະຄວາມຈິງ " ( ອ້າງໃນ ສິລາ ວີລະວົງ, 1990: 100). ຄວາມງາມເປັນສ່ວນໜຶ່ງຂອງສິລະປະ, ຄວາມດີເປັນສ່ວນໜຶ່ງຂອງສາສະໜາ. ຄວາມຈິງ ເປັນສ່ວນໜຶ່ງຂອງປັດຊະຍາ ຄືຫລັກແຫ່ງເຫດຜົນ, ທັງຄວາມງາມ, ຄວາມດີ ແລະຄວາມຈິງມີລວມໄວ້ໃນ ວັນນະຄະດີ.

ຕາມທຳນຽມຂອງປະເທດອັງກິດ ຫລືປະເທດທີ່ຈະເລີນແລ້ວ ເຂົາເຈົ້ານັບຖືວ່າການອ່ານໜັງສືວັນນະຄະດີ ມີຄວາມຈຳເປັນຫລາຍສຳລັບຊີວິດ ໂດຍສະເພາະຜູ້ທີ່ມີອາຊີບເປັນໝໍຢາ, ທະນາຍຄວາມ ແລະອາຊີບອື່ນໆ. ຍ້ອນວ່າວັນນະຄະດີຈະຄອຍລະວັງ, ຮັກສາຄວາມຄິດ ແລະຈິດໃຈໃຫ້ຕັ້ງໝັ້ນແນ່ນອນ. ຄົນອັງກິດເຂົາເຈົ້າຖືວ່າ ວັນນະຄະດີຄືຊີວິດ; ດັ່ງນັ້ນ, ເຂົາເຈົ້າຈຶ່ງແນະນຳໃຫ້ຄົນຂອງເຂົາອ່ານວັນນະຄະດີ. ນັກປາດຊາວໂຣມັນຜູ້ໜຶ່ງຊື່ວ່າ ຊີເຊໂຣ ໄດ້ກ່າວໄວ້ເມື່ອປະມານ 2000 ປີກວ່າມາແລ້ວວ່າ " ວັນນະຄະດີ ພາໃຫ້ເກີດຄວາມຈະເລີນແກ່ຜູ້ໜຸ່ມ, ຄວາມຄວາມຊື່ນບານແກ່ຜູ້ເຖົ້າ, ເປັນອາພອນຂອງຄົນຮັ່ງມີ, ເປັນຢາ ແກ້ທຸກໃນຍາມໂສກເສົ້າ, ເປັນຄວາມມ່ວນຊື່ນໃນເຮືອນ, ບໍ່ເປັນທີ່ຖຽດຊັງໃນຕ່າງຖິ່ນ, ບໍ່ຖິ້ມປະລະໄລເຮົາ ທັງເວລາກາງຄືນ ແລະກາງເວັນ, ທັງໃນເວລາເດີນທາງ ແລະຢຸດຢັ້ງ " (ອ້າງໃນ ສິລາ ວີລະວົງ, 1990:100).

## 1.3. ວັນນະຄະດີແມ່ນປຶ້ມຕຳລາຮຽນແຫ່ງຊີວິດ

ຄົນຊາດລາວເປັນຊາດທີ່ເກົ່າແກ່ຊາດໜຶ່ງຢູ່ໃນຊຸມພູທະວີບ ເຊິ່ງເຄີຍຮຽກກັນປັດຈຸບັນວ່າທະວີບອາຊີ. ຕາມປະຫວັດສາດໄດ້ກ່າວໄວ້ວ່າ: " ຄົນຊາດລາວໄດ້ມີຄວາມຈະເລີນ, ຮູ້ຈັກທຳມາຫາກິນ, ຮູ້ຈັກເຮັດໄຮ່ໄຖນາ, ລ້ຽງປູກຝັງ; ຮູ້ປຸກເຮືອນແປງຊານ ຕັ້ງເປັນບ້ານເປັນເມືອງມາແລ້ວບໍ່ໜ້ອຍກວ່າ 2500 ປີ " ( ສິລາ ວີລະວົງ,1957:125) ພ້ອມກັນນີ້ຄົນຊາດລາວໄດ້ສ້າງປະຫວັດສາດອັນຮຸ່ງເຮືອງ, ສ້າງອາລະຍະທຳອັນສູງສົ່ງມາຕັ້ງແຕ່ບູຮານນະການ. ມໍລະດົກດ້ານວັນນະຄະດີໄດ້ປະກອບສ້າງຄຸນຄ່າດ້ານຈິດໃຈ,

ໄດ້ຮັບການປົກປັກຮັກສາ ແລະສືບທອດພັດທະນາໃຫ້ຍືນຍົງຄົງຢູ່ຄູ່ກັບຊາດລາວເທົ່າທຸກວັນນີ້. ປະຊາຊົນລາວໄດ້ຮັບຄວາມຍ້ອງຍໍສັນລະເສີນວ່າ ເປັນຄົນສຸພາບອ່ອນຫວານ, ມີຄວາມຊື່ສັດ ແລະມີວັດທະນະທຳດີ, ນັ້ນກໍ່ ຍ້ອນວ່າແຕ່ໃດມາ ຄົນຊາດລາວເປັນຜູ້ນິຍົມຊົມຊອບໃນວັນນະຄະດີ; ພວກເຂົາເປັນຜູ້ສ້າງວັນນະຄະດີ, ຊົມໃຊ້ ແລະປົກປັກຮັກສາວັນນະຄະດີ. ບົດວັນນະຄະດີຕ່າງໆຂອງລາວໄດ້ສະທ້ອນໃຫ້ເຫັນແນວຄິດຈິດໃຈ, ຄວາມຄິດເຫັນ, ຄວາມມຸ່ງມາດປາຖະໜາ, ຄວາມດຸໝັ່ນຂະຫຍັນພຽນໃນການອອກແຮງງານ, ນ້ຳໃຈອົງ ອາດກ້າຫານໃນການຕໍ່ສູ້ຕ້ານໄພທຳມະຊາດ ແລະຕໍ່ສູ້ຕ້ານສັດຕູຜູ້ຮຸກຮານຢ່າງອົງອາດກ້າຫານຂອງປະຊາຊົນລາວ. ສາມາດເວົ້າໄດ້ວ່າ ບົດວັນນະຄະດີຕ່າງໆຂອງລາວຍັງເປັນແກ້ວສາລະພັດນຶກ, ເປັນແວ່ນແຍງ ທາງດ້ານຈິດໃຈ, ເປັນບົດຮຽນໃຫ້ແກ່ການດຳເນີນຊີວິດທີ່ບໍ່ຈືດຈາງຮ່ວງໂຮຍ ຫລືສູນຫາຍໄປພ້ອມກັບການ ປ່ຽນແປງຂອງການເວລາ.

ບົດວັນນະຄະດີລາວ ແມ່ນຜົນລວມຂອງການດຳເນີນຊີວິດຂອງຄົນລາວ ທີ່ນັກປາດອາຈານລາວຫລາຍໆທ່ານໃນຫລາຍຍຸກສະໄໝໄດ້ຈົດກ່າຍຖ່າຍທອດຈາກຊີວິດຕົວຈິງຂອງທຸກຊັ້ນຄົນໃນສັງຄົມລາວ. ນັບແຕ່ເດັກນ້ອຍຫາຄົນເຖົ້າແກ່ຊະລາ, ຜູ້ມີປັນຍາສະຫລາດກັບຄົນໂງ່ຈ້າ, ຜູ້ຮັ່ງເປັນເສດຖີກັບຄົນຂໍທານ, ຜູ້ກ້າຫານກັບຄົນອ່ອນແອ, ຜູ້ຊະນະກັບຜູ້ປະລາໄຊ, ຜູ້ມີຈິດໃຈໂຫດຮ້າຍກັບຜູ້ມີຈິດໃຈດີມີສິນທຳ, ຄົນງາມກັບຄົນຂີ້ຮ້າຍ, ຄົນຕາຍກັບຜູ້ມີຊີວິດ ແລະອື່ນໆ.

ບົດວັນນະຄະດີມີຄວາມຈະເລີນຮຸ່ງເຮືອງມາໄດ້ຫລາຍຍຸກສະໄໝ, ອຸດົມສົມບູນທາງດ້ານຈຳນວນ ແລະຄຸນະພາບ ສາມາດຫາອ່ານໄດ້ຕາມຫໍສະໝຸດ, ຮ້ານໜັງສືທົ່ວໄປ, ຕາມໜັງສືພິມປະເພດຕ່າງໆ ເຊິ່ງບົດວັນນະຄະດີເຫລົ່ານັ້ນໄດ້ສ່ອງແສງໃຫ້ເຫັນກ່ຽວກັບຊີວິດຂອງຄົນໃນຫລາຍແງ່ມູມ. ( ເບິ່ງບົດອ່ານປະເພດ ກອນເລື່ອງ " ບົດຮຽນແຫ່ງການສ້າງຊີວິດ " ຂອງກິແດງ ພອນກະເສີນສຸກ, 1970:98 ).

## 1.4. ວັນນະຄະດີຊ່ວຍໃຫ້ຄົນມີມະນຸດສຳພັນທີ່ດີ.

ມະນຸດສຳພັນເປັນເລື່ອງກ່ຽວຂ້ອງກັບຄົນທີ່ດຳລົງຊີວິດຮ່ວມກັນ, ຢູ່ຮ່ວມກັນເປັນໝູ່ຄະນະ, ເປັນຄອບຄົວ ແລະສັງຄົມ, ມີການກະທຳຕໍ່ກັນ, ມີການສະໜອງປະໂຫຍດເຊິ່ງກັນ ແລະກັນ, ພາໃຫ້ຄົນມີຄວາມຮູ້ສຶກຜູກພັນຮັກແພງກັນ. ເລື່ອງຂອງມະນຸດສຳພັນບໍ່ແມ່ນເລື່ອງຂອງຜູ້ອ່ານທີ່ຢູ່ນອກຕົວເຮົາ, ເພາະຄົນບໍ່ສາມາດຢູ່ ແລະເຕີບໃຫຍ່ຢ່າງໂດດດ່ຽວໄດ້, ແຕ່ເກີດເຖິງຕາຍມະນຸດຕ້ອງອາໄສເຊິ່ງກັນ ແລະກັນຕະຫລອດເວລາ. ຄົນສະໄໝບູຮານເນັ້ນບຸນຄຸນຂອງແມ່ເໜືອກວ່າຜູ້ໃດໃນໂລກ ເພາະນອກຈາກເປັນຜູ້ໃຫ້ກຳເນີດແລ້ວຍັງເປັນຜູ້ໃຫ້ອາຫານຄືນ້ຳນົມຈາກຊວງອົກລ້ຽງຊີວິດລູກໃຫ້ເຕີບໃຫຍ່. ຄົນເຮົາແຕ່ລະຄົນລອດມາໄດ້ ຍ້ອນອາໄສອາຫານການລ້ຽງດູຈາກແມ່ກ່ອນໃຜໝົດ; ແຕ່ແມ່ຕ້ອງອາໄສພໍ່, ຍາດຕິພີ່ນ້ອງ ( ປູ່ຍ່າຕາຍາຍ, ລຸງປ້າອາວອາ ແລະເພື່ອນບ້ານ... ). ເມື່ອເຮົາໃຫຍ່ຂຶ້ນເຖິງໄວຮຽນກໍ່ຕ້ອງເພິ່ງພາອາໄສໝູ່ ແລະຄູອາຈານໃນໂຮງຮຽນ. ຫລັງຈາກຮຽນຈົບແລ້ວກໍ່ຈະປະກອບອາຊີບ, ທຸກໆອາຊີບລ້ວນແຕ່ມີຄວາມກ່ຽວຂ້ອງສຳພັນກັບຄົນ. ການຄົບຄ້າສະມາຄົມເພື່ວພາອາໄສຄົນອື່ນນັບວ່າກວ້າງອອກໄປ, ຈົນກະທັ້ງຮອດການເຈັບ ແລະ ການຕາຍ, ພວກເຮົາກໍ່ຍັງອາໄສຄົນອື່ນ. ດັ່ງນັ້ນ, ເພື່ອການຮ່ວມກັນກັບ

ຄົນອື່ນໄດ້ຢ່າງມີຄວາມສຸກ ພວກເຮົາຈຳເປັນຕ້ອງມີມະນຸດສຳພັນ ເພື່ອການປັບຕົວເຂົ້າຢູ່ຮ່ວມກຸ່ມ ແລະ ສັງຄົມ; ສະນັ້ນ, ມະນຸດສຳພັນຈຶ່ງມີ ຄວາມສຳຄັນ ແລະຈຳເປັນສຳລັບການດຳເນີນຊີວິດຂອງມະນຸດ.

ຫລັກມະນຸດສຳພັນຂອງລາວ ເຖິງແມ່ນບໍ່ທັນໄດ້ຄົ້ນຄວ້າ ແລະ ຮວບຮວມເປັນປຶ້ມຕຳລາຮຽນ ສຳເລັດຮູບກໍຕາມ, ແຕ່ປູ່ຍ່າຕາຍາຍລາວກໍໄດ້ປູຮາກຖານມະນຸດສຳພັນໄວ້ກັບບົດວັນນະຄະດີເຊັ່ນ ຄຳສອນ, ຄຳພັງເພີຍ, ຄຳສຸພາສິດ, ຄຳຜະຫຍາ ແລະບົດວັນນະຄະດີຕ່າງໆ ເພື່ອເປັນຄຳສອນ ເປັນຄະຕິເຕືອນໃຈ, ສຶກສາໃຫ້ລູກຫລານລາວເປັນຄົນມີມະນຸດສຳພັນດີ, ຈິ່ງໄດ້ຮັບການຍ້ອງຍໍສັນລະເສີນຈາກຄົນທີ່ມາຢ້ຽມຢາມປະເທດລາວວ່າ " ຄົນລາວເປັນຄົນນິ້ມນວນອ່ອນຫວານ, ຊື່ສັດ ແລະມີວັດທະນະທຳດີ ". ນອກຈາກ ນີ້ກໍຍັງໄດ້ຮັບການກ່າວຂານຊົມເຊີຍຈາກຄົນທົ່ວໄປວ່າ ອາຫານທີ່ແຊບຄືອາຫານຈີນ, ບ່ອນນອນດີກໍຄືບ່ອນ ນອນຝຣັ່ງ, ເມຍດີຄືເມຍຍີ່ປຸ່ນ, ເພື່ອນທີ່ດີຄືຄົນລາວ .

ຄຳສອນທີ່ເປັນແນວທາງໃນແງ່ມະນຸດສຳພັນຂອງຄົນລາວ ກໍເກີດຂຶ້ນມາເປັນເວລາດົນນານແລ້ວ, ແຕ່ຄົນລາວຍັງບໍ່ທັນໄດ້ຮວບຮວມໄວ້ເປັນໝວດໝູ່ ຍັງກະແຈກກະຈາຍຢູ່ໃນບົດວັນນະຄະດີຕ່າງໆ ເຊິ່ງຄົນລາວບໍ່ທັນນຳເອົາມາຄົ້ນຄວ້າວິໄຈ, ພອກພູນໃຫ້ຈະເລີນກ້າວໜ້າ. ບາງຄັ້ງຄົນລາວຄິດວ່າ ຄຳສອນ, ຄຳສຸພາສິດ, ຄຳຜະຫຍາ ເປັນຂອງເກົ່າຫລ້າສະໄໝ ຈຶ່ງບໍ່ນຳມາໃຊ້ເປັນປະໂຫຍດໃນການດຳເນີນຊີວິດຂອງຕົນໃນປັດຈຸບັນ. ເພື່ອເປັນສັນຍານໃຫ້ຮູ້ວ່າໃນຄຳສອນ, ຄຳສຸພາສິດ, ແລະບົດວັນນະຄະດີຈຳນວນໜຶ່ງມີເນື້ອໃນບົ່ງຊີ້ເຖິງຫລັກມະນຸດສຳພັນຂອງລາວ ຈຶ່ງຍົກຂຶ້ນມາເປັນອຸທາຫອນສອນໃຈດັ່ງນີ້:

### 1.4.1. ມະນຸດສຳພັນໃນຄຳສຸພາສິດລາວ

ຊາດລາວເປັນຊາດທີ່ມີຄຳສຸພາສິດເປັນຂອງຕົນເອງ ເຄີຍເວົ້າສືບຕໍ່ກັນມາແຕ່ບູຮານເຊິ່ງຄຳສຸພາສິດລາວອຸດົມສົມບູນດ້ານຈຳນວນ ແລະເນື້ອໃນຄວາມໝາຍ ທີ່ກ່າວເຖິງຫລັກມະນຸດສຳພັນບໍ່ໜ້ອຍ ເຊິ່ງປູ່ຍ່າຕາຍາຍໄດ້ໃຊ້ເປັນຄຳສອນເປັນຄະຕິເຕືອນໃຈໃຫ້ແກ່ການດຳເນີນຊີວິດ, ເໝາະແກ່ການສຶກສາແນວຄິດ, ຄຸນສົມບັດ, ຊ່ວຍໃຫ້ຄົນເປັນຄົນດີ, ສາມາດຢູ່ຮ່ວມກັບຄົນອື່ນໄດ້ຢ່າງມີຄວາມສຸກ ຕົວຢ່າງດັ່ງນີ້:

ກ. ຫລັກມະນຸດສຳພັນໃນການເວົ້າ ກ່າວໄດ້ດັ່ງນີ້:

- ເວົ້າດີມີຄົນຖືຂອງມາຝາກ ເວົ້າຫຍາບມີຄົນຖືດາບມາຟັນ
- ໄວປາກເສຍສິນ ໄວຕີນຕົກກົກໄມ້
- ຢ່າເວົ້າຄຳມາຍາ ຢ່າຊາຄົນໄງ່ ຢ່າໄຕ້ຄົນເມົາ
- ຢ່າກ່າວຖ່ອຍ ຕິເພິ່ນລັບຫລັງ
- ເວົ້າຖືກຂໍ້ ຂໍກິນບໍ່ຖີ່ ເວົ້າບໍ່ຖືກຂໍ້ ຂໍຊີ້ກໍບໍ່ຂາຍ
- ກົບຕາຍຍ້ອນປາກ ຄົນຕາກຕາຍຍ້ອນສຽງ

ຂ. ຄວາມສາມັກຄີ ແລະການເພິ່ງພາອາໄສກັນເປັນຫລັກຄວາມສຳພັນທາງມະນຸດສຳພັນ.

- ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂວ່ ໄພ່ບໍ່ພ້ອມ ແປງບ້ານບໍ່ເຮືອງ

- ຟັນເຮືອໄວ້ ຫລາຍລຳແຮທ່າ ໝ່າເຂົ້າໄວ້ ຫລາຍອ່າງແຮເຮືອນ
- ຮົ້ວຫລາຍຫລັກຈິ່ງໝັ້ນ ພີ່ນ້ອງຫລາຍຊັ້ນຈິ່ງດີ
- ຜົມບໍ່ຫລາຍໃຫ້ຕື່ມຊ້ອງ ພີ່ນ້ອງບໍ່ຫລາຍໃຫ້ຕື່ມສ່ຽວຕື່ມເກີ
- ໄມ້ຄ້ຳກ້ວຍ ກ້ວຍຄ້ຳໄມ້
- ຂ້ອຍເພິ່ງເຈົ້າ ເຈົ້າເພິ່ງຂ້ອຍ ຜົວເພິ່ງເມຍ ເມຍເພິ່ງຜົວ
- ນ້ຳເພິ່ງເຮືອ ເສືອເພິ່ງປ່າ ປາເພິ່ງນ້ຳ ເຮືອເພິ່ງພາຍ
- ໂຮມໝູ່ເຮົາຢູ່ ແຍກໝູ່ເຮົາຕາຍ
- ເຮືອລົ່ງແກ້ງ ກຽນເຫັນໃຫ້ກຽນແກ່ ບາດວ່າໄປຮອດນ້ຳ ເຮືອຊິໄດ້ແກ່ກຽນ

ຄ. ໃຈດີເປັນຫລັກທາງມະນຸດສຳພັນ.

ຊາວບູຮານເຂົ້າໃຈວ່າ " ຄົນສຳຄັນຢູ່ທີ່ໃຈ " . ຖ້າຈິດໃຈດີແລ້ວ ແມ່ນຮູບຮ່າງຮ້າຍ ກໍຮຽກວ່າເປັນຄົນດີໄດ້ ດັ່ງນັ້ນ, ໃນສຸພາສິດລາວໄດ້ກ່າວປະນາມຄົນໃຈຮ້າຍ ຍົກຍ້ອງຄົນໃຈດີວ່າ:

- ໃຈຮ້າຍເປັນຜີ ໃຈດີເປັນພະເຈົ້າ
- ຄວາມປາກເປັນທຳ ທົວໃຈເປັນຍັກ
- ກ້ຽງປາກບັ້ງສ້າງຂໍປາກກະທໍ ທາງໃນຂົມ ໝາກກະເດົາແຮມຮົ້ວ
- ນ້ຳຂຸ່ນບໍ່ແພ້ນ້ຳໃສ ໃຈດີແພ້ໃຈຮ້າຍ

ງ. ຄວາມຊື່ສັດແມ່ນຄຸນະທຳຂອງມະນຸດສຳພັນ

ຊາວບູຮານລາວໄດ້ຖືສຳຄັນ ແລະ ເຄີຍໃຊ້ສຶກສາໃຫ້ລູກຫລານມີຄວາມຊື່ສັດສຸຈະລິດ, ບໍ່ຂີ້ລັກ. ບໍ່ຂີ້ ຕົວະ, ບໍ່ເຫັນແກ່ຕົວ ໂດຍຄຳນຶງເຖິງສິດຜົນປະໂຫຍດຂອງຜູ້ອື່ນ ດັ່ງຄຳສຸພາສິດກ່າວໄວ້ວ່າ:

- ພ້າເຂົ້າຢ່າຟັນແຮງ ຂອງເພິ່ນແພງຢ່າເຂົ້າໃກ້
  ຢາກເບິ່ງແທ້ ໃຫ້ຖາມເບິ່ງດູດາຍ ຢ່າຈັບບາຍລັກຖອດ
- ຍາມຍັງນ້ອຍຢ່າລັກໄກ່ ໃຫຍ່ມາຢ່າລັກຄວາຍ
- ເຫັນເງິນໜ້າດຳ ເຫັນຄຳໜ້າເສົ້າ

ຈ. ການຖະໜອມທ່ອມຕົວເປັນຫລັກທາງມະນຸດສຳພັນ ກ່າວໄວ້ວ່າ:

- ຊາດທີ່ເປັນຄົນນີ້ ໃຫ້ທຳຕົວເໝືອນນົກເຈົ່າ
  ບາດວ່າບິນເວີ່ນຟ້າ ຈຶ່ງຂ່າວແຈ້ງດັ່ງນົກຍາງ
- ຢ່າໄດ້ຄຸຍດັ່ງບົ້ງ ຈົ່ງຫລັງໃຫ້ກາຕອດ
  ຈົ່ງໃຫ້ທຳດັ່ງມ້ອນ ໄຍຫຸ້ມທໍ່ຕົວ
- ຍິ່ງແກ່ຍິ່ງກົ້ມ ລະເໝີເຂົ້າໃນນາ

ນອກຈາກນີ້ ສຸພາສິດລາວຍັງມີຫລາຍແງ່ ແລະ ມີຫລາຍຄຳທີ່ມີຄວາມໝາຍທາງດ້ານມະນຸດ

ສຳພັນທີ່ຈະຊ່ວຍໃຫ້ພວກເຮົາມີມະນຸດສຳພັນດີ ຈຶ່ງສາມາດຫາອ່ານໄດ້ຕາມປຶ້ມສຸພາສິດສອນໃຈຂອງ. ທອງຄຳ ອ່ອນມະນີສອນ, ສຸພາສິດບູຮານຂອງ ສິລາ ວິລະວົງ, ກາບປູສອນຫລານ, ອິນທິຍານສອນລູກ ແລະອື່ນໆ.

## 1.4.2. ມະນຸດສຳພັນໃນບົດວັນນະຄະດີລາວ

ບົດປະພັນວັນນະຄະດີລາວມີຫລາຍບົດໃນວັນນະຄະດີພື້ນເມືອງ, ວັນນະຄະດີສະໄໝອານາຈັກລ້ານຊ້າງ ແລະວັນນະຄະດີສະໄໝປັດຈຸບັນ ລ້ວນແຕ່ໄດ້ສ່ອງແສງໃຫ້ເຫັນການພົວພັນລະຫວ່າງຄົນກັບຄົນໃນສັງຄົມ ເຊິ່ງການພົວພັນລະຫວ່າງຄົນກັບຄົນນັ້ນຄືຫລັກການທາງມະນຸດສຳພັນ. ດັ່ງຕົວຢ່າງໃນນິທານເລື່ອງ " ເສດຖີຫາລູກໃພ້ "

ແຕ່ກີ້ແຕ່ກ່ອນມີເສດຖີຄົນໜຶ່ງ ເປັນຄົນຮັ່ງມີດ້ວຍຊັບສິນບັດ ແລະນ້ຳໃຈ, ແຕ່ທ່ານມີລູກຊາຍຄົນດຽວ ເມື່ອລູກຊາຍໃຫຍ່ເປັນບ່າວ ທ່ານເສດຖີກໍເຖົ້າແກ່ລົງທຸກວັນ, ຈຶ່ງຢາກໃຫ້ລູກຊາຍແຕ່ງງານເປັນຝັ່ງເປັນຝາ ແຕ່ຈະຫາຍິງສະຫລາດມາເປັນລູກໃພ້ໄດ້ແນວໃດ? ຈຶ່ງຈະບໍ່ເຜົາຜານສິນບັດຂອງຕົນເອງ. ເມື່ອຄິດໄດ້ຈຶ່ງຕົກລົງຫາລູກໃພ້ດ້ວຍການເສັງຄັດເລືອກດ້ານຄຸນສົມບັດຕາມຄວາມຕ້ອງການຂອງເສດຖີ.

ວິທີການຂອງເສດຖີມີຢູ່ວ່າ ຕ້ອງຈັດພິທີຄັດເລືອກຊີງຕຳແໜ່ງລູກໃພ້ເສດຖີຂຶ້ນ ແລະເລືອກເອົາ 1 ຕຳແໜ່ງເທົ່ານັ້ນ. ສ່ວນຂໍ້ສອບເສັງຂອງທ່ານເສດຖີກໍມີພຽງຂໍ້ດຽວຄື ຖາມວ່າ " ເຮົາມີປາຢູ່ໄຕດຽວເຮັດແນວໃດຈຶ່ງຈະໄດ້ກິນຕະຫລອດປີ " ຝ່າຍລູກຊາຍເມື່ອຈື່ຂໍ້ສອບເສັງໄດ້ແລ້ວ ກໍຫາເລາະທ່ຽວຖາມຜູ້ຍິງ. ເມື່ອເຫັນຍິງສາວງາມທ່າທີເປັນທີ່ຕ້ອງຕາຖືກໃຈ ກໍເຂົ້າໄປສະໜິດສະໜົມ ແລະຖາມເບິ່ງວ່າ " ເຈົ້າ! ເຮົາມີປາຢູ່ໄຕ ດຽວ ເຮັດແນວໃດຈຶ່ງຈະກິນຕະຫລອດໄປ ? ".

ລູກຊາຍເສດຖີໄດ້ເລາະຖາມຍິງສາວຫລາຍຄົນ, ຕ່າງຄົນຕ່າງຕອບ, ລາງຄົນຕອບວ່າ " ງ່າຍໜ້ອຍດຽວ ເຮົາກໍເຮັດປາແດກໄວ້ກິນເທື່ອລະນ້ອຍຕີ! ", ລາງຄົນກໍຕອບວ່າ : " ບໍ່ຍາກ! ເຮັດປາເຄັມໄວ້ກິນຕີ ", ເມື່ອເປັນຄືແນວນັ້ນລູກຊາຍເສດຖີກໍຮູ້ສຶກອິດເມື່ອຍ ແລະໝົດຫວັງຢູ່ຕໍ່ມາ ລູກຊາຍເສດຖີໄດ້ພົບຍິງສາວ ຄົນໜຶ່ງທີ່ມີຄວາມສະຫລາດ, ມີຄວາມເມດຕາ, ມີມະນຸດສຳພັນທີ່ດີ ຕອບກັບທັນວ່າ " ເອົາປາໄຕນັ້ນມາຕັດເປັນຕ່ອນໆ ແລ້ວເອົາຕ່ອນໜຶ່ງໄປໃຫ້ປ້າເຮືອນເໜືອ, ຕ່ອນໜຶ່ງໄປໃຫ້ອາເຮືອນໃຕ້, ເຫລືອນັ້ນປັນໃຫ້ເຮືອນໃກ້ຄຽງນີ້ກິນນຳ, ເຮົາຜົວເມຍກິນຕ່ອນດຽວກໍພໍ. ດ້ວຍມີວິທີນີ້ແລ້ວປາໄຕດຽວເຮົາຈຶ່ງໄດ້ກິນຕະຫລອດປີ " ລູກຊາຍເສດຖີນຳເອົາຄຳຕອບຂອງຍິງສາວໄປເລົ່າສູ່ພໍ່ຟັງ. ທ່ານເສດຖີຜູ້ເປັນພໍ່ເມື່ອໄດ້ຍິນຄຳຕອບ ກໍຫົວກ້າກຂຶ້ນພ້ອມທັງຕົບມືດ້ວຍຄວາມດີໃຈ ແລ້ວເວົ້າຂຶ້ນວ່າ " ຕົກລົງຍິງສາວຄົນນີ້ສອບເສັງໄດ້ ແລະໄດ້ຄອງຕຳແໜ່ງລູກໃພ້ເສດຖີ ".

ສະຫລຸບແລ້ວ ວັນນະຄະດີຫລາຍບົດເປັນຄຳສອນທາງມະນຸດສຳພັນທີ່ດີສຳລັບການດຳເນີນຊີວິດ, ການພົວພັນເພື່ອນສະຫາຍ, ພ້ອມທັງເປັນເຄື່ອງຊຳລະລ້າງຈິດໃຈໃຫ້ມີຄວາມສະອາດ. ດັ່ງນັ້ນຈຶ່ງເຫັນໄດ້ວ່າ ວັນນະຄະດີມີປະໂຫຍດແກ່ຊີວິດ. ພວກເຮົາຄວນສ້າງຕົນເອງໃຫ້ນັກ ແລະຮັກວັນນະຄະດີດ້ວຍການອ່ານວັນນະຄະດີເພື່ອຊຳລະລ້າງຈິດໃຈໃຫ້ສະອາດ, ໜ້າຕາລຶດຊື່ນແຈ່ມໃສ, ມະນຸດສຳພັນຈະເກີດຂຶ້ນກັບເຮົາ. ຈາກນັ້ນເຮົາຈະກາຍເປັນທີ່ຮັກຂອງຄົນອື່ນ. ເມື່ອຄົນອື່ນຮັກເຮົາ ເຮົາກໍຈະມີຄວາມ

ສຸກຄວາມຈະເລີນ, ເມື່ອທຸກຄົນມີຄວາມສຸກຄວາມຈະເລີນ ສັງຄົມກໍຈະມີຄວາມສະຫງົບສຸກ ມີຄວາມຈະເລີນຕາມມາ.

## 2. ວັນນະຄະດີມີຄວາມສຳຄັນຕໍ່ປະເທດຊາດ

### 2.1. ວັນນະຄະດີເປັນເຄື່ອງຜູກມັດຈິດໃຈຂອງຄົນພາຍໃນຊາດ.

ໃນທາງກົດໝາຍຖືວ່າ ຊາດແມ່ນກຸ່ມຄົນທີ່ອາໄສຢູ່ໃນອານາເຂດດຽວກັນ, ມີພາສາ ມີຮີດຄອງປະເພນີ, ມີສິລະປະວັນນະຄະດີອັນດຽວກັນ, ຢູ່ໃຕ້ການປົກຄອງອັນດຽວກັນ. ລັກສະນະຕ່າງໆທີ່ບອກເຖິງຄວາມເປັນຊາດອັນດຽວກັນ ດັ່ງກ່າວນັ້ນ ບໍ່ມີອັນໃດຈະຜູກມັດຈິດໃຈຄົນໃຫ້ຮູ້ຈັກຮັກແພງວ່າເປັນຊາດອັນດຽວກັນກວ່າພາສາ-ວັນນະຄະດີ. ວັນນະຄະດີເປັນເຄື່ອງດຶງດູດຈິດໃຈໃຫ້ຄວາມຮັກຊາດຢ່າງແຮງກ້າ ເພາະວ່າວັນນະຄະດີຍ່ອມເປັນເຄື່ອງໝາຍປະຫວັດສາດ ແລະທຳນຽມປະເພນີ. ຄົນທີ່ມີຄວາມຮັກຊາດຢ່າງແຮງກ້າ ແລະ ຮັກຊາດດ້ວຍບໍລິສຸດເປັນຄົນທີ່ດູດດື່ມຊາບຊຶ້ງໃນບົດວັນນະຄະດີເປັນທີ່ສຸດ. ຕົວຢ່າງ ເຈົ້າຟ້າງຸ່ມ, ເຈົ້າອະນຸວົງ ແລະທ່ານໄກສອນ ພົມວິຫານ ນັກວິລະບູລຸດລາວຜູ້ມີຊື່ສຽງ. ມີຄວາມເກັ່ງກ້າສາມາດໃນການນຳພາປະຊາຊົນລາວຕໍ່ສູ້ເພື່ອປົກປັກຮັກສາປະເທດຊາດ ແລະຄວາມເປັນເອກະລາດຂອງຊາດລາວໄວ້. ທ່ານທັງສາມລ້ວນແຕ່ເປັນຜູ້ທີ່ມີຄວາມຮັກມັກ ແລະຊາບຊຶ້ງໃນວັນນະຄະດີເປັນຊີວິດຈິດໃຈ.

ນ້ຳໃຈຮັກມັກ ແລະ ຊາບຊຶ້ງໃນວັນນະຄະດີລາວຂອງພະຍາເຈົ້າຟ້າງຸ່ມໄດ້ປາກົດຜ່ານບ່ອນວ່າເຈົ້າຟ້າງຸ່ມເປັນອົງກະສັດລາວທີ່ມີຄວາມສາມາດໃນການທ້ອນໂຮມລາວເປັນເອກະລາດ ແລະ ມີແນວທາງສ້າງສາພັດທະນາປະເທດຊາດໃນທຸກໆດ້ານ. ໃນນັ້ນກໍມີການພັດທະນາວັນນະຄະດີລາວ. ມີນັກຄົ້ນຄວ້າວັນນະຄະດີລາວຫລາຍທ່ານໄດ້ມີຄວາມເປັນເອກະພາບກັນວ່າ ໃນສະຕະວັດທີ 14 ໄດ້ເລີ່ມມີບົດວັນນະຄະດີຂອງລາວກຳເນີດເກີດຂຶ້ນ ເດັ່ນທີ່ສຸດແມ່ນບົດ " ຄຳໂອວາດຂອງເຈົ້າຟ້າງຸ່ມ ". ຄຳໂອວາດຂອງເຈົ້າຟ້າງຸ່ມເປັນບົດວັນນະກຳທີ່ເກົ່າແກ່ ແລະມີຊື່ສຽງບົດໜຶ່ງ ເຊິ່ງບົດຄຳໂອວາດດັ່ງກ່າວນີ້ ແມ່ນເຈົ້າຟ້າງຸ່ມເປັນ ຜູ້ແຕ່ງຂຶ້ນຢູ່ວຽງຈັນໃນລະຫວ່າງປີ ຄ.ສ. 1357. ຄຳໂອວາດຂອງເຈົ້າຟ້າງຸ່ມເປັນບົດທີ່ຢັ້ງຢືນເຖິງຄຸນຄ່າ ແລະບົດບາດຂອງຄົນ ໂດຍສະເພາະແມ່ນຜູ້ອອກແຮງງານໃຫ້ແກ່ສັງຄົມ. ທ່ານກ່າວວ່າ " ສິນບັດທີ່ຈະເກີດ ຂຶ້ນໃນແຜ່ນດິນນີ້ແມ່ນຄົນ, ມີຄົນຈຶ່ງມີຈຶ່ງມີສິນບັດ, ບໍ່ມີຄົນເຂົ້າຂອງສິນບັດກໍຈະຫາບໍ່ໄດ້ແລ ". ( ອ້າງໃນ ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ, 1987: 1929193 ). ຜ່ານບົດຄຳໂອວາດຂອງທ່ານ ແລະແນວທາງການຟື້ນຟູປະເທດຊາດ, ຟື້ນຟູວັນນະຄະດີຂອງທ່ານກໍຢັ້ງຢືນວ່າ ທ່ານມັກແລະຮັກຫອມວັນນະຄະດີຂອງ ຊາດ.

ຄວາມຮັກມັກ ແລະ ຊາບຊຶ້ງໃນວັນນະຄະດີລາວຂອງເຈົ້າອະນຸວົງ ໄດ້ປາກົດຜ່ານບົດວັນນະຄະດີ ເລື່ອງ "ສານລຶບພະສູນ". ຈາກການສັນນິຖານທີ່ຂຽນສະຫລຸບໄວ້ໃນເອກະສານຫລາຍເຫລັ້ມ ບອກໄວ້ວ່າ ຜູ້ຂຽນສານລຶບພະສູນແມ່ນເຈົ້າອະນຸວົງ. ສານລຶບພະສູນເປັນບົດວັນນະຄະດີທີ່ມີສິລະປະການແຕ່ງສູງ ເຊິ່ງປະກອບດ້ວຍຄຳຜະຫຍາ, ຄຳສຸພາສິດ, ກາບກອນ ແລະສານຫລາຍຄຳເກາະກ່າຍກັນຢ່າງເປັນລະບົບ, ອ່ານແລ້ວພາໃຫ້ມ່ວນ ດູດດື່ມຈິດໃຈ, ສ້າງໃຫ້ຜູ້ເກີດມີນ້ຳໃຈຮັກຊາດ ຄຽດແຄ້ນສັດຕູຜູ້ຮຸກ

ຮານ. ຈາກຈຳນວນທີ່ຂຽນໄວ້ໃນສານລົບພະສູນ ສະແດງອອກໃຫ້ເຫັນຊັດເຈນວ່າ ເຈົ້າອະນຸວົງເປັນວິລະບຸລຸດລາວ ຜູ້ມີຄວາມຮັກມັກ ແລະຊາບຊຶ້ງໃນວັນນະຄະດີລາວ.

ຄວາມຮັກມັກ ແລະ ຊາບຊຶ້ງໃນວັນນະຄະດີລາວຂອງທ່ານ ໄກສອນ ພົມວິຫານໄດ້ປາກົດອອກຜ່ານປະຫວັດຊີວິດ ແລະຜົນງານຂອງທ່ານທີ່ກ່າວໄວ້ວ່າ " ທ່ານໄກສອນ ພົມວິຫານມັກດົນຕີພື້ນເມືອງລາວ, ທ່ານເປົ່າແຄນເກັ່ງແຕ່ເວລາຍັງເຍົາໄວ. ທ່ານເດີນທາງອອກຈາກບ້ານເພື່ອໄປສຶກສາຮຽນຮູ້ພ້ອມດ້ວຍແຄນ. ແມ່ນຈະຢູ່ຕ່າງແດນ, ເມື່ອຄິດເຖິງບ້ານ ແລະພໍ່ແມ່, ເວລາພົບຄວາມຫຍຸ້ງຍາກຄິດຊອກຫາຊ່ອງທາງແກ້ໄຂບັນຫາໃນສະໜາມຮົບຕ່າງໆ ທ່ານກໍຈະເປົ່າແຄນ. ສຽງແຄນໄດ້ເປັນພະລັງທາງດ້ານຈິດໃຈໃຫ້ທ່ານມີຄວາມເຂັ້ມແຂງ ແລະທົນທານ "( ຄະນະກຳມະການພິພິດຕະພັນໄກສອນ ພົມວິຫານ, 1999: 1-5 ).

ນອກຈາກບັນດາທ່ານທີ່ກ່າວມາແລ້ວ, ບັນດານັກຕໍ່ສູ້ກູ້ຊາດຂອງລາວຫລາຍທ່ານກໍລ້ວນແຕ່ເປັນຜູ້ຮັກມັກ ແລະຊາບຊຶ້ງໃນວັນນະຄະດີລາວເຊັ່ນ ທ່ານພູມີ ວົງວິດຈິດ, ທ່ານອຸດຸມະ ຈຸນລະມະນີ, ທ່ານສີຊະນະ ສີສານ, ...

ໃນປະຫວັດສາດໂລກກໍມີຫລັກຖານແຈ່ມແຈ້ງວ່າ ວັນນະຄະດີເປັນຫລັກຖານໃຫ້ຄົນບໍ່ລືມຊາດເຊັ່ນ ປະເທດອີຕາລີ, ປະເທດນີ້ຫາກໍໄດ້ຊື່ວ່າເປັນປະເທດຕາມທາງແຫ່ງການເມືອງ ເມື່ອປະມານແປດສິບປີປາຍ ຜ່ານມານີ້. ແຕ່ວ່າຊາວອີຕາລີມີຄວາມຮູ້ສຶກເປັນຊາດດຽວກັນມາແຕ່ເຫິງນານແລ້ວ ຍ້ອນອິດທິພົນຂອງວັນນະຄະດີ ແລະພາສາກໍເປັນສຳຄັນ. ແຕ່ກ່ອນຊາວອີຕາລີຖືພາສາລາແຕັງເປັນພາສາກາງ. ຕໍ່ມາ, ມີຈິນຕະກະວີເອກຊາວອີຕາລີຜູ້ໜຶ່ງຊື່ວ່າ ດັນເຕ ໄດ້ນຳເອົາພາສາທ້ອງຖິ່ນຂອງເຂົາເອີ້ນວ່າ " ທົດສະກັນ " ( Toscane ) ມາແຕ່ງເປັນບົດປະພັນ, ຊີ້ໃຫ້ເຫັນຄວາມອ່ອນຫວານຂອງພາສານີ້ ແລະຍົກຍ້ອງພາສາທົດສະກັນໄວ້ໃນໜັງສືວັນນະຄະດີຕ່າງໆ. ພາຍລຸນມາ, ມີຈິດຕະກະວີຫລາຍຄົນເຫັນດີນຳໄດ້ຊ່ວຍກັນສົ່ງເສີມການແຕ່ງບົດປະພັນ, ບົດກາບກອນເປັນພາສາທົດສະກັນຂຶ້ນເລື້ອຍໆຈົນໄດ້ຮັບຄວາມນິຍົມແຜ່ຫລາຍ. ໃນທີ່ສຸດ, ພາສາທົດສະກັນກໍກາຍເປັນພາສາຂອງຊາດ ແລະບົດວັນນະຄະດີທີ່ແຕ່ງເປັນພາສາທົດສະກັນ ກໍກາຍເປັນບົດວັນນະຄະດີຂອງປະຊາຊົນທົ່ວໄປ. ເຖິງແມ່ນວ່າຊາວອີຕາລີບໍ່ທັນໄດ້ໂຮມເປັນປຶກແຜ່ນໃນ ສະໄໝນັ້ນກໍຕາມ, ແຕ່ບົດວັນນະຄະດີນັ້ນເອງພາໃຫ້ຊາວອີຕາລີຮູ້ສຶກວ່າຕົນເປັນເຊື້ອຊາດດຽວກັນ ( ອ້າງ ໃນ ສີລາ ວິລະວົງ, 1996:28 ).

ຊາວອີສານ, ເຖິງແມ່ນວ່າຈະໄດ້ຊື່ເປັນຄົນໄທ, ຕົກຢູ່ໃຕ້ການປົກຄອງຂອງໄທເປັນເວລາເກືອບ 300 ປີ, ແຕ່ຊາວອີສານມີຄວາມຮູ້ສຶກວ່າຕົນເປັນຄົນລາວ ເພາະອິດທິພົນທາງພາສາ ແລະວັນນະຄະດີເປັນສຳຄັນ.

ວັນນະຄະດີລາວເຮົາ ກໍມີຫລາຍບົດທີ່ດຶງດູດຈິດໃຈຂອງຄົນລາວໃນຂົງເຂດຕ່າງໆບໍ່ໃຫ້ລືມຊາດເຊັ່ນ ບົດວັນນະຄະດີເລື່ອງ: " ສານລົບພະສູນ" ; ບົດເພງ " ໂອດວງຈຳປາ ", " ວຽງໃນຝັນ "; ບົດກອນຂັບລຳພື້ນເມືອງຕ່າງໆ. ມີຄົນລາວຫລາຍຄົນທີ່ຖືກອົບພະຍົບໄປຢູ່ຕ່າງປະເທດ ເມື່ອໄດ້ຍິນເພງລາວ ຫລືບົດຂັບລຳພື້ນເມືອງລາວກໍພາໃຫ້ຄິດເຖິງບ້ານເກີດເມືອງນອນ. ມີບາງຄົນກໍກັບມາຢູ່ລາວ ຍ້ອນອິດທິພົນຂອງວັນນະຄະດີເຊັ່ນ ທ່ານມະຫາ ສີລາ ວິລະວົງ ທ່ານເກີດໃນແຂວງຮ້ອຍເອັດ ( ປະເທດໄທ ປັດຈຸບັນ )

ໄດ້ມີໂອກາດຮ່ຳຮຽນໃນປະເທດໄທຈົນໄດ້ຮັບລາຊະການ, ມີໜ້າທີ່ຜູ້ກວດກາລາຊະການ, ແຕ່ທ່ານສີລາ ວີລະວົງ ປະຕິເສດ ຕຳແໜ່ງເຫລົ່ານັ້ນ ແລ້ວຂໍລາພະອາຈານ ອອກເດີນທາງມາວຽງຈັນ, ຍ້ອນອິດຕິພົນທາງພາສາ ແລະວັນນະຄະດີ ເພາະທ່ານໄດ້ສຳຜັດຮູ້ລົດຊາດຂອງວັນນະຄະດີລາວແຕ່ຄາວປະຖົມມະໄວ ເພີ່ມຕິດໃຈສຳນວນໝໍລຳທີ່ກ່າວວ່າ " ບ້າງ! ເຈົ້າບ້າງ! ບ້າງເຈົ້າລາຊະວົງ, ໃນຂົງເຂດວຽງຈັນລາຊະວົງເປັນເຈົ້າ, ໃຜວ່າ ວຽງຈັນເສົ້າ ສາວເອີຍຢ່າຟ້າວວ່າ, ມັນຊິໄປບາດຫລ້າໝາກແຕງ ຊ້າງໜ່ວຍປາຍ " ( ສິລາ ວີລະວົງ, 1990: 30-46 )

## 2.2. ວັນນະຄະດີບອກໃຫ້ຮູ້ກ່ຽວກັບປະຫວັດສາດ.

ວັນນະຄະດີລາວບໍ່ແມ່ນປຶ້ມປະຫວັດສາດ, ແຕ່ວັນນະຄະດີລາວເປັນເອກະສານທີ່ສຳຄັນໃນການຄົ້ນຄວ້າປະຫວັດສາດ, ໃນສະໄໝບູຮານ ຊາດລາວເຮົາບໍ່ທັນມີປະຫວັດສາດອັນແທ້ຈິງ, ເຫດການຕ່າງໆທີ່ເກີດຂຶ້ນໃນປະຫວັດສາດນັ້ນກໍກາຍເປັນເລື່ອງເລົ່າກ່ຽວກັບປະຫວັດສາດທັງໝົດ. ດັ່ງນັ້ນ, ບົດວັນນະຄະດີ ລາວປະເພດພື້ນສົບເຊັ່ນ ບົດເລື່ອງ ຂຸນເຈືອງ, ຈັນທະພານິດ, ສີໂຄດຕະບອງ, ຂຸນບູລົມ, ... ບົດເລື່ອງເຫລົ່ານີ້ລ້ວນແຕ່ສ່ອງແສງໃຫ້ເຫັນສະພາບປະຫວັດສາດຂອງລາວສະໄໝນັ້ນ. ສ່ອງແສງໃຫ້ເຫັນການຕໍ່ສູ້ລະຫວ່າງກຸ່ມຄົນນັ້ນກັບກຸ່ມຄົນນີ້ ເພື່ອຍາດແຍ່ງເຂດທຳມາຫາກິນ, ການສ້າງບ້ານ, ສ້າງເມືອງ ແລະສ້າງອານາຈັກລາວສະໄໝບູຮານ. ນອກຈາກນີ້ ພື້ນສົບຂອງລາວຍັງໄດ້ກ່າວໃຫ້ຮູ້ກ່ຽວກັບປະຫວັດສາດການສ້າງວັດຖຸບູຮານ, ປູຊານີຍະສະຖານຂອງລາວເຮົາເຊັ່ນ ປະຫວັດສາດການສ້າງທົ່ງໄຫຫີນ, ການສ້າງວັດພູຈຳປາສັກ, ພະທາດຫລວງ ແລະວັດວາອາຮາມຕ່າງໆຂອງລາວ.

ໃນສະໄໝຕໍ່ມາ ເມື່ອມີວິຊາປະຫວັດສາດຂອງລາວແລ້ວ, ແຕ່ປະຫວັດສາດກໍບັນທຶກໄດ້ພຽງແຕ່ເຫດການຕົວຈິງທີ່ເກີດຂຶ້ນໃນສັງຄົມເທົ່ານັ້ນ. ສ່ວນວັນນະຄະດີສາມາດຈົດກ່າຍຖ່າຍທອດເຫດການໂດຍລະອຽດ ແລະສຳຄັນທີ່ສຳຄັນຝັງໄວ້ຢູ່ໃນຈິດໃຈຂອງປະຊາຊາດ ອັນເປັນສົມບຸດຖານຂອງເຫດການທີ່ປາກົດອອກມາພາຍນອກເຊັ່ນ ເຫດການທີ່ສັກດີນາສະຫຍາມເຂົ້າຮຸກຮານລາວ, ເຮັດໃຫ້ຄົນລາວຕົກເປັນທິວເມືອງຂຶ້ນ. ຊີວິດຂອງຄົນລາວໄດ້ພົບກັບຄວາມຫຍຸ້ງຍາກລຳບາກແນວໃດ, ປະຊາຊົນລາວມີຄວາມເສຍໃຈ ແລະຄຽດແຄ້ນແນວໃດ ປະຫວັດສາດບໍ່ສາມາດບັນທຶກອອກມາໂດຍລະອຽດ, ມີແຕ່ບົດວັນນະຄະດີເທົ່ານັ້ນທີ່ພັນລະນາອອກມາໃຫ້ເຫັນແຈ້ງ ດັ່ງປາກົດອອກໃນວັນນະຄະດີເລື່ອງ " ສານລຶບພະສູນ ", " ກາບເມືອງພວນ " ແລະ " ພື້ນວຽງ " . ທັງສາມເລື່ອງເປັນບົດວັນນະຄະດີລາວທີ່ມີເນື້ອໃນເວົ້າເຖິງປະຫວັດສາດໂດຍກົງ ເຊິ່ງໄດ້ຍົກໃຫ້ເຫັນເຫດການການທຳລາຍນະຄອນຫລວງວຽງຈັນ ແລະການກົດຂີ່ຂູດຮີດຂອງສັກດີນາສະຫຍາມຕໍ່ປະຊາຊົນລາວ ແລະຮຽກຮ້ອງໃຫ້ປະຊາຊົນລາວ ຈົ່ງລຸກຂຶ້ນຕໍ່ສູ້ເພື່ອກອບກູ້ເອົາປະເທດຊາດຄືນມາ.

ບົດເລື່ອງ " ກາບເມືອງພວນ " ບໍ່ປາກົດຊື່ຜູ້ແຕ່ງ ແລະວັນເດືອນປີແຕ່ງ, ແຕ່ຄາດວ່າຄົງແຕ່ງຂຶ້ນຫລັງຈາກການປະລາໄຊຂອງເຈົ້າອະນຸວົງ ຄັ້ງໄທຍົກທັບໄປປາບເສິກຫໍ້ທີ່ດິນແດນພວນຊຽງຂວາງ ແລະເຂົາກໍລວຍໂອກາດນີ້ກວາດຕ້ອນເອົາປະຊາຊົນຊາວພວນໄປຝັ່ງໄທ ເມື່ອກາງສະຕະວັດທີ 19 . ບົດວັນນະຄະດີເລື່ອງນີ້ ເປັນເລື່ອງໜຶ່ງທີ່ສຳຄັນຂອງລາວ ທັງເປັນເລື່ອງທີ່ກ່ຽວກັບປະຫວັດສາດຂອງລາວ

ອີກດ້ວຍ. ເນື້ອໃນຂອງເລື່ອງໄດ້ສ່ອງແສງໃຫ້ເຫັນຄວາມເປັນໄປຂອງຊາວພວນ ເມື່ອເກີດບ້ານແຕກ ຊະແລກຂາດໃນສະໄໝລາວຕົກເປັນຫົວເມືອງຂຶ້ນຂອງສະຫຍາມ. ບົດວັນນະຄະດີເລື່ອງນີ້ແບ່ງອອກ ເປັນ 3 ຕອນຄື:

ກ. ຕອນທຳອິດພໍສະຫລຸບໄດ້ວ່າ ພາຍຫລັງທີ່ອານາຈັກລາວລ້ານຊ້າງຕົກເປັນຫົວເມືອງຂຶ້ນຂອງສະຫຍາມແລ້ວ, ຕໍ່ມາເຂດເມືອງພວນເອງຕາມເມືອງຕ່າງໆກໍ່ບໍ່ເປັນເອກະພາບກັນບວກກັບພວກຫໍ້ມາກໍ່ການຈະລາຈົນຮຸກຮານ, ສະນັ້ນ ເຈົ້າເມືອງພວນຈຶ່ງຂໍຄວາມຊ່ວຍເຫລືອຈາກເຈົ້າເມືອງໜອງຄາຍໃຫ້ມາຊ່ວຍປາບເສິກຫໍ້ ແລະ ຫົວເມືອງຕ່າງໆທີ່ຂັດແຍ້ງກັບຕົນ. ເມື່ອສະຫຍາມເຂົ້າມາຊ່ວຍກໍ່ເລີຍສວຍໂອກາດປະຕິບັດເຈດຈຳນົງທີ່ພວກເຂົາມີມາແຕ່ເທິງແລ້ວ ໂດຍກວາດຕ້ອນເອົາປະຊາຊົນຊາວພວນໄປໜອງຄາຍ, ເຮັດໃຫ້ປະຊາຊົນໄດ້ພັດພາກຈາກບ້ານເກີດເມືອງນອນດ້ວຍຄວາມລຳບາກທໍລະມານ ດັ່ງສະແດງອອກໃນບົດກອນ

ແຜ່ນດິນໜອງຄາຍ ກາຍເກີດເປັນທຸກ
ຂີ້ຍຸງມາກຫລາຍ ຄົນຕາຍທຸກມື້
ຊີ້ເຂົ້າຊຳແໝງ ນາແຊໄປແກ່
ກິນແຕ່ໜໍ່ໄມ້ ນາຍໄທຫຍຸ້ງທ້ອງ
ເວົ້າປ້ອງຄວາມມາ ບໍ່ໄຄຄາດແຄ້ວ
ກວາດແລ້ວຄົນລາວ ລົ່ງຂ່າວໄປໜ້າ...

ຂ. ເນື້ອໃນຕອນນີ້ເວົ້າເຖິງວ່າ ເມື່ອປະຊາຊົນລາວຖືກແຕກແຍກແຊກຂາດແນວນີ້ ເຂົາເຈົ້າສຸດທີ່ຄິດຮອດບ້ານເກີດເມືອງນອນ, ພູມລຳເນົາ, ໄຮ່ນາຮົ້ວສວນ, ບວກນ້ຳວັງປາ, ເພື່ອນສະໜິດແໜ້ນ. ໃນການ ດຳລົງຊີວິດເວລານັ້ນຖິ່ນພູມລຳເນົາໄດ້ຖືກປະປ່ອຍກາຍເປັນປ່າຮົກຮ້າງ, ອີກຢ່າງໜຶ່ງກໍ່ຕຳຄ້ອຍນ້ອຍໃຈ ເພາະສູນເສຍເຄື່ອງຂອງຊັບສິນບັດທີ່ຕົນໄດ້ສະສົມຂຶ້ນມາດ້ວຍນ້ຳເຫື່ອນ້ຳແຮງ ເປັນເວລາຫລາຍຟ້າຫລາຍປີ, ສິ່ງເຫລົ່ານັ້ນໄດ້ກາຍເປັນຂອງຄົນອື່ນໂດຍທີ່ຕົນເອງບໍ່ໄດ້ຊົມໃຊ້. ເມື່ອຄິດເຖິງມັນແລ້ວຍິ່ງເພີ່ມຄວາມອຸກອັ່ງຢ່າງໜ້າສົມເພດເວທະນາ ດັ່ງກາບຂຽນໄວ້ວ່າ

ມາຍິນທຸກ ໄດ້ຂໍເຊົາເຮືອນ
ມາຍິນເອືອນ ໄດ້ຂໍເຊົາບ້ານ
ມາຂີ້ຄ້ານ ຂໍເຂົ້າເຍຍຕົນ...

ຄ. ເນື້ອໃນຕອນທີສາມໄດ້ກ່າວເຖິງວ່າ ເມື່ອປະຊາຊົນຊາວພວນໄດ້ຖືກກົດຂີ່ຂູດຮີດໜັກຈົນເຂົາເຈົ້າບໍ່ອາດຈະອົດກັ້ນໄວ້ໄດ້ອີກແລ້ວ, ເຂົາຈຶ່ງພາກັນລຸກຮືຂຶ້ນຕ້ານພວກສະຫຍາມໂດຍວິທີໄຕນໜີ, ບໍ່ຍອມຈຳນົນ. ເຂົາເວົ້າວ່າ " ຍອມຕາຍເປັນຜີ ດີກວ່າເປັນຂ້ອຍ " . ເຂົາເຈົ້າພາກັນລັກໜີຂ້າມປ່າຜາດົງກັບຄືນບ້ານເກີດເມືອງນອນ ດັ່ງບົດກາບຂຽນໄວ້ວ່າ

ພ່ອງປົບໃນປ່າ ພ່ອງຄາຢູ່ຢ້າວ
ພ່ອງຟ້າວໄຕນໜີ ພ່ອງມີຄົນໄຂ້
ພ່ອງໄວ້ຄົນໄຂ ພ່ອງຍັງໃນປ່າ...

ເຂົາເຈົ້າແຕກສະຫລຸພ່າຍໄປຕາມປ່າດົງຕ່າງຄົນຕ່າງໄປ, ລູກພັດພໍ່, ຜົວພັດເມຍ ປັນກັນໄປຄົນລະເຄິ່ງດັ່ງບົດກາບຂຽນວ່າ

ຜູ້ກິນໜ້ອຍ ຍັງອ່າວນານຕາຍ
ຜູ້ກິນຫລາຍ ຕາຍໄປນໍລະນາດ
ດັບຊາດເຊື້ອ ຫລານເຫລັ່ນບໍ່ຫລໍ
ຜູ້ໄປກ່ອນ ຕາຍໝົດບໍ່ຍັງ
ຜູ້ມາຫລັງ ແຄນຍັງບໍ່ໜ້ອຍ
ຍິນທຸກຄ້ອຍ ຮ້ອງໄຫ້ຫາກັນ...

ລວມຄວາມວ່າ ເລື່ອງກາບເມືອງພວນ ທັງໝົດມີເນື້ອໃນສ່ອງແສງໃຫ້ເຫັນແຈ້ງໂທດກຳຂອງສັກດີນາສະຫຍາມ ແລະ ສັກດີນາລາວຜູ້ຂາຍຊາດຕໍ່ປະຊາຊົນຊາວພວນ ພາຍໃຕ້ແອກປົກຄອງຂອງສັກດີນາສະຫຍາມ. ເມື່ອຖືກກົດຂີ່ຂູດຮີດໜັກ ເຂົາເຈົ້າບໍ່ໄດ້ເປັນຫ່ວງຕໍ່ຊີວິດ ເພາະມີນ້ຳໃຈຮັກຊາດສູງຈຶ່ງພ້ອມກັນຕ້ານຄືນດ້ວຍວິທີການໂຕນໜີເອົາຕົວລອດ, ເມື່ອຖືກກົດຂີ່ຂູດຮີດໜັກມັນບໍ່ຕ່າງຫຍັງກັບບັ້ງໄມ້ໄຜ່ບັນຈຸນ້ຳ ແລ້ວອັດໃຫ້ແໜ້ນ ແລະຖືກເຜົາໄຟ, ເມື່ອນ້ຳຜົດບໍ່ມີທາງລະບາຍອາຍໄດ້ມັນຈະຜັກດັນບັ້ງໄຜ່ນັ້ນລະເບີດຂຶ້ນເໝືອນດັ່ງປະຊາຊົນຊາວພວນທີ່ມີນ້ຳໃຈຮັກຊາດດັ່ງດຽວກັນເຊັ່ນນັ້ນ.

ໃນສະໄໝປັດຈຸບັນແມ່ນວ່າມີຄວາມຈະເລີນທາງດ້ານເຕັກໂນໂລຊີ ຊ່ວຍໃນການບັນທຶກເຫດການ ແລະຮູບພາບຕ່າງໆໃນປະຫວັດສາດໄດ້ດີທີ່ສຸດ, ແຕ່ເຕັກໂນໂລຊີນັ້ນ ກໍບໍ່ສາມາດຈະພັນລະນາເຫດການໃນຂະບວນການການຕໍ່ສູ້ຂອງປະຊາຊົນລາວໄດ້ດີເໝືອນບົດວັນນະຄະດີຕົວຢ່າງເຊັ່ນ ເຫດການການຕໍ່ສູ້ຂອງປະຊາຊົນລາວຕ້ານກັບຈັກກະພັດອາເມຣິກາ ແມ່ນວ່າມີວິຊາປະຫວັດສາດໄດ້ບັນທຶກເຫດການໂດຍລະອຽດ, ມີກ້ອງຖ່າຍຮູບ, ເກັບຮູບໄວ້ເປັນຫລັກຖານ; ແຕ່ກໍບໍ່ສາມາເຮັດໃຫ້ປະຊາຊົນລາວເຂົ້າໃຈເຫດການລະອຽດໄດ້ເທົ່າກັບບົດເລື່ອງ " ກອງພັນທີສອງ " ຂອງສຸວັນທອນ ບຸບຜານຸວົງ. ບົດເລື່ອງດັ່ງກ່າວໄດ້ພັນລະນາເລື່ອງລາວຂອງກອງພັນທີສອງ ທີ່ໄດ້ດຳເນີນການຕໍ່ສູ້ຕ້ານກັບສັດຕູ, ຕັດສິນໃຈຜ່າວົງປິດລ້ອມຂອງສັດຕູອອກໄປສູ່ຖານທີ່ໝັ້ນຂອງແນວລາວຮັກຊາດໄດ້ຢ່າງປອດໄພ. ນອກຈາກ ກອງພັນທີສອງແລ້ວ ຍັງມີບົດເລື່ອງສັ້ນ, ກາບກອນຫລາຍບົດທີ່ສ່ອງແສງໃຫ້ເຫັນເຫດການປະຫວັດສາດຂອງຊາດລາວໄດ້ຢ່າງລະອຽດ ແລະເລິກເຊິ່ງເຊັ່ນ ບົດກອນ " ປະຫວັດ 21 ມີນາ ", ບົດເລື່ອງ " ລູກປືນນັດສຸດທ້າຍ ", " ກອງລາດຊະວົງ", " ຟອງແມ່ນ້ຳຂອງ ", " ຜູ້ສືບທອດ ", " ນ້ອງອານູ ", " ມີນ້ອຍອາດຫານ ", " ສີທອງວິລະຊົນ ", ... ບັນດາ ບົດເລື່ອງ, ບົດກາບກອນເຫລົ່ານັ້ນ ລ້ວນແຕ່ມີເນື້ອໃນເວົ້າເຖິງປະຫວັດສາດການຕໍ່ສູ້, ເວົ້າເຖິງນ້ຳໃຈອົງອາດກ້າຫານຂອງຄົນລາວ ທີ່ຍອມເສຍສະຫລະເຫື່ອແຮງ, ເລືອດເນື້ອ ແລະຊີວິດ ເພື່ອປົກປັກຮັກສາປະເທດຊາດຂອງລາວໄວ້ຢ່າງໝັ້ນຄົງ.

## 2.3. ວັນນະຄະດີເປັນສິນບັດດ້ານວັດທະນະທຳທີ່ສຳຄັນຂອງຊາດ.

ວັນນະຄະດີເປັນວັດທະນະທຳທີ່ສຳຄັນຂອງຊາດ ເພາະວັນນະຄະດີເປັນພະຍານຫລັກຖານບອກ

ໃຫ້ຮູ້ຄວາມເປັນຢູ່, ແນວຄິດຈິດໃຈ, ຄວາມຄິດເຫັນ, ຮີດຄອງປະເພນີຂອງຊາດໃນສະໄໝຕ່າງໆໄດ້ດີກວ່າປະຫວັດສາດ. ປະຫວັດສາດບັນທຶກໄວ້ແຕ່ເຫດການພາຍນອກທີ່ເກີດຂຶ້ນແລ້ວ, ສ່ວນວັນນະຄະດີຈະແດງເຖິງອຳນາດສຳຄັນທີ່ຝັງຢູ່ໃນຈິດໃຈຂອງປະຊາຊົນ ອັນເປັນສິນມູດຖານຂອງເຫດການທີ່ປາກົດອອກມາພາຍນອກ.

### 2.3.1. ວັນນະຄະດີບອກໃຫ້ຮູ້ຮີດຄອງປະເພນີຂອງຊາດ.

ຮີດຄອງປະເພນີແມ່ນຂະນົບທຳນຽມປະເພນີທີ່ເຄີຍໄດ້ປະພຶດປະຕິບັດສືບທອດກັນມາ. ດັ່ງນັ້ນ, ຮີດຄອງປະເພນີຂອງລາວແມ່ນວັດທະນະທຳສ່ວນໜຶ່ງທີ່ສຳຄັນ ເຊິ່ງໄດ້ຕິດພັນກັບຊີວິດຂອງຄົນລາວແຕ່ອະດີດຈົນເຖິງປັດຈຸບັນ. ບົດວັນນະຄະດີລາວສະພາບສະທ້ອນວິຖີການດຳເນີນຊີວິດ, ຮີດຄອງປະເພນີຕ່າງໆຂອງຄົນລາວ. ວັນນະຄະດີລາວໄດ້ສ່ອງແສງໃຫ້ເຫັນປະຫວັດຄວາມເປັນມາຂອງຄວາມເຊື່ອຖື, ຮີດຄອງປະເພນີ ຕະຫລອດເຖິງພິທີກຳຕ່າງໆທີ່ຄົນລາວໄດ້ປະຕິບັດກັນມາເຊັ່ນ ຮີດສິບສອງຄອງສິບສີ່, ຮີດຍີ່ຄອງຈຽງ ແລະຕົ້ນເຫດຂອງພິທີກຳຕ່າງໆ. ແມ່ນວ່າທຸກໆປີຄົນລາວພາກັນຈັດພິທີກຳສະຫລອງບຸນປະເພນີຕາມຮີດສິບສອງເດືອນເປັນປະຈຳ ແຕ່ຄົນລາວມີໜ້ອຍຄົນທີ່ສົນໃຈ ແລະຮູ້ຈັກວ່າໃນພິທີກຳຮີດສິບສອງເດືອນມີປະຫວັດຄວາມເປັນມາແນວໃດ. ຖ້າສົນໃຈສຶກສາຈະພົບວ່າເລື່ອງລາວໃນຮີດສິບສອງຂອງລາວນັ້ນມີກ່າວໄວ້ໃນວັນນະຄະດີເປັນສ່ວນໃຫຍ່.

ຕຳນານລ້ານຊ້າງບູຮານກ່າວໄວ້ວ່າ ເດືອນໜຶ່ງຮຽກວ່າເດືອນອ້າຍ ຫລື ເດືອນຈຽງ. ຄົນລາວສະໄໝກ່ອນຈະຖືເອົາວັນຂຶ້ນໜຶ່ງຄ່ຳຂອງເດືອນຈຽງເປັນວັນຂຶ້ນປີໃໝ່ລາວ. ເດືອນ 2 ຮຽກວ່າ ເດືອນຍີ່ຈະມີປະເພນີທາຟືນກຽມໄວ້. ເດືອນສາມເປັນປະເພນີບຸນເຂົ້າຈີ່. ທັງສາມປະເພນີມີສ່ວນກ່ຽວຂ້ອງສຳພັນກັນ ເຊິ່ງມີປະຫວັດຄວາມເປັນມາກ່າວໄວ້ໃນບົດວັນນະຄະດີປະເພດນິທານດັ່ງນີ້:

ແຕ່ກີ້ແຕ່ກ່ອນນານມາແລ້ວ ຍັງມີຜົວເມຍຊາວນາຄູ່ໜຶ່ງຮັ່ງມີດ້ວຍຊັບສິນບັດ, ມີໄຮ່ນາກວ້າງຂວາງ, ມີງົວຄວາຍຫລວງຫລາຍຈົນໄດ້ຊື່ວ່າ " ເຈົ້າແຜ່ນດິນ ". ຜົວເມຍຄູ່ນີ້ມີລູກຊາຍນຳກັນສອງຄົນ ຜູ້ໜຶ່ງຊື່ວ່າ ທ້າວ ຢາ, ຜູ້ທີສອງຊື່ ທ້າວ ຍີ່.

ເມື່ອລູກຊາຍທັງສອງໃຫຍ່ກ້າໜ້າບານສູງຂຶ້ນເປັນບ່າວເປັນແພວ, ພໍ່ແມ່ກໍນັບມື້ເຖົ້າແກ່ຊະລາລົງ. ຜົວເມຍເຖົ້າລົມກັນວ່າ ຈະມອບໄຮ່ນາທີ່ກວ້າງຂວາງ ແລະງົວຄວາຍທີ່ຫລວງຫລາຍນີ້ໃຫ້ແກ່ລູກຜູ້ໃດຜູ້ໜຶ່ງ ຈຶ່ງຈະກາຍເປັນມໍລະດົກໄວ້ຢືນນານໃຫ້ລູກຫລານສືບຕໍ່ກັນໄປພາຍໜ້າ. ຕົກມາວັນໜຶ່ງຂອງລະດູເດືອນສາມ, ໄດ້ມີລົມພັດມາໃນຍາມເຊົ້າ ພໍ່ແມ່ ແລະລູກພາກັນນັ່ງເຕົາໄຟ, ໄດ້ໂອກາດດີ ຜູ້ເປັນພໍ່ຈຶ່ງຕັ້ງຄຳຖາມຖາມລູກ ເພື່ອທົດສອບເບິ່ງຈິດໃຈຂອງລູກຊາຍທັງສອງຄົນວ່າ " ເຂົ້າໃນໄຮ່ໃນນາຂອງພວກເຮົາກໍເກັບກູ້ມາບ້ານມາເຮືອນໝົດແລ້ວ, ພໍ່ບໍ່ມີວຽກເຮັດງານທຳອັນໃດແລ້ວ ຈຶ່ງຢາກຖາມລູກທັງສອງເບິ່ງວ່າ ພວກລູກຢາກກິນອັນໃດ ? ຢາກໄດ້ອັນໃດ? ໃຫ້ບອກພໍ່ມາ ພໍ່ຈະຫາມາໃຫ້ລູກຕາມໃຈມັກໃຈປາຖະໜາ ".

ຄິດຢູ່ຄາວໜຶ່ງ ທ້າວ ຢາ ຜູ້ເປັນອ້າຍຕອບພໍ່ວ່າ " ລູກຢາກກິນເຂົ້າຈີ່ໃຫຍ່ເທົ່າຄັນນາ, ມັນໝູທາ, ໄກ່ວ່ສູນນ້ຳອ້ອຍ ". ທ້າວ ຍີ່ເດ ຢາກກິນຫຍັງ? ຢາກໄດ້ຫຍັງ? ພໍ່ຖາມ. ທ້າວ ຍີ່ຕອບພໍ່ວ່າ " ລູກຢາກເອົາແຂນເທົ້ານົມນາງ ( ຢາກຫລິ້ນຢາກນອນກັບຜູ້ສາວ ) ". ສ່ວນຜູ້ເປັນພໍ່ ເມື່ອໄດ້ຟັງຄຳປາຖະໜາຂອງລູກ

ຝົນບໍ່ຕົກ ເຂົ້າໄຮ່ຕາຍຄາ
ຝົນບໍ່ມາ ເຂົ້ານາຕາຍແລ້ງ
ພື້ນດິນແຫ້ງ ເຮົາແຮ່ງໄຫຍຫິວ
ຍໍ່ມີໂດຍ ນ້ຳອົງແຖນເຖົ້າ
ຜູ້ເປັນເຈົ້າ ຕົກແຕ່ງຝົນມາ
ພວກຊາວນາ ພາກັນມ່ວນຊື່ນ
ຊາວບ້ານອື່ນ ມີບໍ່ຫລືໃດ
ບຸນບັ້ງໄຟ ບໍ່ແມ່ນບຸນສະອາດ
ຂີ້ຕົມຟາດ ມີເດ່ໄປນຳ
ສາວໝໍລຳ ຍັງບໍ່ມີຄູ່

ໂອ!ໄຮ!ໂອ! ໄຮ!ໂອ!ໄຮ!ໂອ!
ບັ້ງໄຟເຮົາ ບໍ່ເໝືອນຂອງໝູ່
ເຊືອກພູບູ້ ທັ່ງຂື້ນບໍ່ຖອຍ
ມີຂີ້ຝອຍ ປົກເລົາອ່າງຫຍ່າງ
ຈູດເຂົ້າຫວ່າງ ໃຕ້ງ່າມຂາຄົນ
ບໍ່ທັນດົນ ຄວັນມື້ອອກປາກ
ແຕ່ວ່າຫາກ ເປັນໝີສີຂາວ
ສີຂາວໆ ຄືຢາງພາກຫຸງ
ຈູດໃນມຸ້ງ ບໍ່ໃຫ້ຄົນເຫັນ
ຈູດກາງເວັນ ພວກຂ້ອຍບໍ່ມັກ
ພວກຂ້ອຍມັກ ຈູດແຕ່ກາງຄືນ
ບັ້ງໄຟບືນ ຂື້ນໜ້າເລື້ອຍໆ

ໂອ!ໄຮ!ໂອ! ໄຮ!ໂອ!ໄຮ!ໂອ!
ລູກຊາຍໃຜ ຄືນາງາມແທ້ຫລ້າ
ຍ່າງອອກໜ້າ ແຫ່ບຸນບັ້ງໄຟ
ມາກັບໃຜ ຄືບໍ່ມີຄູ່
ຢາກໄດ້ໝູ່ ຟ້ອນຮ່ວມບໍ່ຊາຍ
ຄົນທັງຫລາຍ ເຂົາເຫລືອດຕາສ່ອງ
ມາເອົານ້ອງ ເຂົ້າຮ່ວມງານບຸນ
ເປັນພະຄຸນ ບຸນຫລາຍຮ່ວມ

ທັງ ສອງແລ້ວຈຶ່ງມາຄິດເຫັນວ່າ ຄວາມປາຖະໜາຂອງທ້າວ ຢາ ແມ່ນວ່າຢາກກິນເຂົ້າຈີ່ໃຫຍ່ເທົ່າຄັນນາກໍຕາມ, ແຕ່ກໍພຽງແຕ່ກິນອີ່ມທ້ອງເທົ່ານັ້ນ, ສິນບັດຈະບໍ່ໝົດໄດ້ ຈະຮັກສາສິນບັດໄວ້ຍາວນານ. ສ່ວນຄວາມມັກຄວາມປາຖະໜາຂອງທ້າວ ຍີ່ ທີ່ມັກຫລິ້ນມັກກິນຢູ່ກັບນາງສາວຕ່າງໆນັ້ນ ເປັນເສັ້ນທາງໄປສູ່ການເຜົາສິນບັດ.

ເພື່ອປະຕິບັດຕາມສັນຍາທີ່ເວົ້າໃຫ້ແກ່ລູກ, ພໍ່ຈຶ່ງພະຍາຍາມຫາທຸກວິທີທາງໃຫ້ລູກທັງສອງໄດ້ສົມປາຖະໜາ. ເພື່ອສ້າງເງື່ອນໄຂໃຫ້ທ້າວຍີ່ໄດ້ແຂນເທົ້ານົມນາງຕາມໃຈປາຖະໜາ, ພໍ່ໄດ້ຈັດແຈ້ງການປະກາດປາວໃຫ້ຊາວບ້ານຊາວເມືອງຕ້ອງພາກັນເຂົ້າປ່າ ເພື່ອຫາຟືນກຽມເຮັດບຸນເຂົ້າຈີ່ໃນເດືອນສາມ ແລະ ເອົາຟືນແຮໄວ້ໃນຍາມຝົນ ເຊິ່ງເປັນລະດູການເຮັດໄຮ່ທຳນາຈະບໍ່ມີເວລາໄປຫາຟືນ. ປະເພນີການຫາຟືນຂອງຄົນລາວສະໄໝກ່ອນແມ່ນ ບ່າວສາວຈະກຽມອາຫານ, ເຂົ້ານ້ຳຊຳປາໄປກິນໃນປ່າຫາຟືນຢ່າງສະໜຸກສະໜານ ເປັນໂອກາດທີ່ບ່າວສາວຈະໄດ້ລົມກັນພາຍໃນປ່າຢ່າງເພີດເພີນ, ເປັນໂອກາດໃຫ້ທ້າວ ຍີ່ ໄດ້ລົມສາວ ແລະ ແຂນເທົ້ານົມນາງໃນປ່າຫາຟືນຕາມໃຈປາຖະໜາ. ເພື່ອສະໜອງຕາມຄວາມປາຖະໜາຂອງທ້າວ ຢາ ພໍ່ຈຶ່ງປະກາດໃຫ້ປະຊາຊົນຈັດພິທີແຂ່ງຂັນເຮັດເຂົ້າຈີ່ຂຶ້ນໃນເດືອນສາມ ເພື່ອໃຫ້ທ້າວ ຢາ ໄດ້ເລາະ ຊີມເຂົ້າຈີ່ໄດ້ຕາມໃຈປາຖະໜາ.

ເມື່ອພໍ່ແມ່ເຖົ້າແກ່ຊະລາ, ກ່ອນໝົດອາຍຸສັງຂານ ພໍ່ໄດ້ມອບມໍລະດົກທັງໝົດໃຫ້ແກ່ທ້າວ ຢາ ເປັນຜູ້ປົກຄອງແຜ່ນດິນ, ໃນວັນຂຶ້ນ 3 ຄ່ຳ ເດືອນຈຽງ. ດັ່ງນັ້ນ, ເດືອນຈຽງຈຶ່ງເປັນເດືອນຂອງທ້າວ ຢາ, ຄົນລາວເຮົາຈຶ່ງຮຽກວ່າ ເດືອນອ້າຍ ແລະຈາກນັ້ນມາຈຶ່ງໄດ້ມີພິທີສະຫລອງວັນຂຶ້ນປີໃຫມ່ລາວໃນເດືອນຈຽງ. ເດືອນສອງຈຶ່ງເປັນເດືອນຂອງທ້າວ ຍີ່. ຄົນລາວສະໄໝບູຮານເອີ້ນເດືອນສອງວ່າ ເດືອນຍີ່, ນັບແຕ່ນັ້ນມາທຸກໆປີ ຄົນລາວຈະຈັດພິທີກຳສະຫລອງແຜ່ນດິນເປັນວັນຂຶ້ນປີໃໝ່ລາວໃນວັນຂຶ້ນ 3 ຄ່ຳ ເດືອນຈຽງ, ຈັດພິທີຫາຟືນ ໃນເດືອນສອງ ແລະສະຫລອງບຸນເຂົ້າຈີ່ໃນເດືອນສາມສືບຕໍ່ກັນມາຈົນກາຍເປັນຮີດຄອງປະເພນີທີ່ຄົນລາວໄດ້ນັບຖື ແລະປະຕິບັດຕະຫລອດມາ ( ຄຳຜຸຍ ພົນລືຊາ, 2000: 138 -139 ).

ໃນບົດວັນນະຄະດີລາວ ນອກຈາກ ຈະບອກໃຫ້ຮູ້ກ່ຽວກັບປະຫວັດຄວາມເປັນມາຂອງຮີດຄອງປະເພນີ, ພິທີກຳຕ່າງໆແລ້ວ, ບົດວັນນະຄະດີລາວ ຍັງສ່ອງແສງໃຫ້ເຫັນເຖິງກ່ຽວກັບວັດຖຸປະສົງຂອງການປະກອບພິທີກຳ ແລະການປະກອບພິທີກຳຕາມຄວາມເຊື່ອຖື, ຮີດຄອງປະເພນີຄົນລາວ ເພື່ອເປັນອຸທະຫອນ ຈຶ່ງຂໍຍົກເອົາກອນເຊີ້ງໃນບຸນບັ້ງໄຟມາກ່າວໄວ້ດັ່ງນີ້:

## ກອນເຊີ້ງບຸນບັ້ງໄຟຂອງຊາວບ້ານສີຖານໃຕ້

ແຕ່ງໂດຍ: ອາຈານຄຳຮຸ່ງ ( ອາຍຸ 50 ປີ ປະຊາຊົນບ້ານສີຖານໃຕ້ )

ເຊີ້ງໂດຍ: ນາງ ໜູພອນ ( ປະຊາຊົນບ້ານສີຖານໃຕ້ )

ໂອ!ໂຮໂອ!
ບັ້ງໄຟໝື່ນ
ບັ້ງໄຟແສນ

ໂຮ!ໂອ!ໂຮ!ໂອ!
ຈູດເມືອຖວາຍແຖນ
ຈູດເມືອຖວາຍຟ້າ

| | |
|---|---|
| ເຈົ້າຜູ້ແກ້ມອິ່ງຕິ່ງ | ຢ່າໄດ້ອິ່ງຫລາຍເດີ |

( ເກັບກຳໂດຍ: ຄຳຜຸຍ ພິນລືຊາ, 2000: 246 )

ຄວາມຮັກບ່າວສາວກໍແມ່ນວັດທະນະທຳລາວຢ່າງໜຶ່ງທີ່ປາກົດຜ່ານວັນນະຄະດີລາວ. ຈາກບົດວັນນະຄະດີລາວເຮົາຈະເຫັນໄດ້ວ່າ ຄວາມຮັກຂອງບ່າວສາວຕາມປະເພນີລາວແມ່ນຄວາມຮັກທີ່ບໍລິສຸດແລະຈິບງາມ, ແມ່ຍິງຈະເປັນຜູ້ຮັກເນື້ອສະຫງວນຕົວ, ຮັກສາພົມມະຈາລີຂອງຕົນເອງໄວ້ເຖິງວັນແຕ່ງດອງ ແລະຈະເຫັນປະເພນີການຄອງເຮືອນຂອງຄົນລາວ ແມ່ນປະຕິບັດຕາມຮີດຄອງປະເພນີຜົວດຽວເມຍດຽວມາແຕ່ບູຮານ.

ຄວາມຮັກມັກບ່າວສາວຊາວລາວທີ່ປາກົດຂຶ້ນໃນວັນນະຄະດີພື້ນເມືອງ ເປັນຄວາມຮັກທີ່ບໍລິສຸດແລະມີເສລີພາບ. ບ່າວສາວສາມາດຊອກຫາຄູ່ຄອງຕາມໃຈປາຖະໜາ. ແຕ່ຕາມປະເພນີສະໄໝບູຮານແມ່ຍິງແລະຜູ້ຊາຍຈະມີມາດຖານການເລືອກຄູ່ຄອງຕ່າງກັນເຊັ່ນ ຜູ້ຊາຍຈະເລືອກເອົາຍິງທີ່ດີ, ມີຄວາມດຸໝັ່ນ, ຊ່າງປາກຊ່າງເວົ້າ, ຊ່າງຕຳຫູກທໍໄໝ. ສ່ວນແມ່ຍິງຈະເລືອກເອົາຜູ້ຊາຍທີ່ມີຄວາມຮູ້ຄວາມສາມາດ ແລະມີຄວາມດຸໝັ່ນດັ່ງປາກົດອອກໃນຄຳຜະຫຍາ ແລະບົດນິທານຫລາຍບົດ, ເພື່ອເປັນອຸທະຫອນ ຈຶ່ງຂໍຍົກເອົາຄຳຜະຫຍາ ແລະບົດເລື່ອງມາເປັນຕົວຢ່າງດັ່ງນີ້:

**ຄຳຜະຫຍາ:**

| | |
|---|---|
| - ໄດ້ເມຍດີ | ປານໄດ້ແກ້ວຄູນລ່າງ |
| ໄດ້ເມຍຊ່າງ | ປານໄດ້ແກ້ວຄູນເຮືອນ |
| ໄດ້ເມຍບິດເບືອນ | ປານຈູງໝູເຂົ້າຄອກ |
| ໄດ້ເມຍປອກຫລອກ | ປານແກ່ໄມ້ທາງປາຍ |
| - ເພິ່ງທີ່ຈະເອົາຜົວ | ໃຫ້ຫາແນວມັກປາດ |
| ໃຈສະຫລາດຮູ້ | ຄອງແທ້ສັ່ງສອນ |
| ຮີດບໍ່ມີລ່ວງລໍ້າ | ຄອງແຫ່ງບັນດິດ |
| ແມ່ນວ່າທຳຄອງຄົນ | ກໍບໍ່ຫລອນພາຮ້ອນ |

( ບົວວັນ ສຸຂະທຳມະວົງ ພ້ອມຄະນະ, 2003: 9-10 )

ນິທານເລື່ອງ **" ດອກຝ້າຍປົກຂອງ "**

ເລົ່າໂດຍ: ນາງແປ; ຮຽບຮຽງໂດຍ: ຄຳຜຸຍ ພິນລືຊາ

ແຕ່ປາງກ່ອນ ນົກຍັງມີເຂົາ ຜັກກະເດົາບໍ່ທັນມີດອກ, ໝາກກອກຍັງມີຄວາມຫວານ ໄດ້ມີນິທານເລົ່າສືບກັນມາວ່າ ມີບ່າວສາວຄູ່ໜຶ່ງ, ຜູ້ບ່າວຕັ້ງເຮືອນຢູ່ຫົວນ່າ, ຜູ້ສາວຕັ້ງບ້ານຫລ້າຂອງ, ທັງສອງເປັນຄົນຂີ້ຄ້ານ. ຜູ້ສາວ ເຂົ້າບໍ່ແກງແລງງາຍບໍ່ແຕ່ງ, ແຕ່ງແຕ່ກາຍເລາະບ້ານຈາຕ້ານກ່າວຂວັນ. ຜູ້ບ່າວໄຮ່ບໍ່ມີສວນບໍ່ເຮັດ, ງົວຄວາຍບໍ່ມີຫາແຫລ່ງ, ແຕ່ງແຕ່ກາຍເລາະບ້ານຈາຕ້ານອວດສະຫາວ. ສາວຢູ່ໃນບ້ານບໍ່ມີໃຜຕ້ານຕໍ່ ຈຶ່ງໄດ້ເດີນທາງຈາກບ້ານໄປຫາດ່ານແດນໄກ, ໄປຫາລາວເມືອງໄກ, ໄປຫາໄທເມືອງອື່ນ.

ມື້ໜຶ່ງຫລັງຈາກແຕ່ງຕົວແລ້ວ, ກ່ອນຈະອອກຈາກບ້ານ ຜູ້ເປັນແມ່ໄດ້ບອກລູກວ່າ " ຊິໄປຊອກຫາລົມສາວມາເປັນລູກເປັນເມຍ, ຄວນຊອກຫາຜູ້ດຸໝັ່ນ, ຮູ້ເຮັດວຽກໄຮ່ການນາ, ຮູ້ເຮັດຫູກເຮັດຝ້າຍ, ຕ່ຳຫູກທໍໄໝ, ເພາະເຮົາເປັນຄົນຂີ້ຄ້ານແລ້ວ, ຖ້າໄດ້ເມຍຂີ້ຄ້ານອີກຈະບໍ່ກຸ້ມປາກກຸ້ມທ້ອງ ". ຈາກນັ້ນບ່າວຜູ້ນັ້ນກໍ ອອກຈາກບ້ານໄປ ແລະມຸ້ງໜ້າໄປສູ່ບ້ານຫລ້າຂອງ ດ້ວຍຄວາມຄິດວ່າ " ຈະໄປຊອກຫາເມຍແນວໃດຈຶ່ງ ຈະໄດ້ຄົນດຸໝັ່ນດັ່ງຄຳແມ່ສັ່ງໄວ້ ".

ເມື່ອໄປເຖິງບ້ານຫລ້າຂອງ ຕາເວັນໃກ້ຈະຄ່ຳແລ້ວ, ສາວໃນໝູ່ບ້ານຜູ້ທີ່ດຸໝັ່ນ ເຂົາກໍຈະຢູ່ໃນເຮືອນຊານຂອງໃຜລາວ ເພື່ອແຕ່ງຢູ່ຄົວກິນ ໜຶ້ງເຂົ້າເປົ່າໄຟໄວ້ສຳລັບອາຫານແລງ. ສ່ວນສາວຂີ້ຄ້ານຄົນນີ້ຍັງຍ່າງເລາະທົ່ວບ້ານທາງບ້ານຢູ່. ບັງເອີນບ່າວສາວຄູ່ນີ້ກໍໄດ້ພົບກັນ ແລະໄອ້ລົມກັນກ່ອນເວລາຈະຄ່ຳມືດ. ຝ່າຍຜູ້ບ່າວສັງເກດເຫັນວ່າ ເບິ່ງຜູ້ສາວຄົນນັ້ນເປັນຄົນງາມ, ຮູບກໍຖືກຕາ ກິລິຍາກໍຖືກໃຈ ຈຶ່ງຕັ້ງໃຈຖາມຫາຄອບ ຄົວເຮືອນຊານ. ຝ່າຍຜູ້ສາວກໍສັງເກດເຫັນວ່າ ຊາຍຜູ້ນີ້ມີຮູບຮ່າງງາມເປັນທີ່ຕິດເນື້ອຕ້ອງໃຈ ຈຶ່ງແນະນຳ ຄອບຄົວເຮືອນຊານຕາມຄວາມຕ້ອງການຂອງຜູ້ບ່າວ. ຄືນນັ້ນຜູ້ບ່າວນັ້ນນຳໄປທີ່ເຮືອນຂອງຜູ້ສາວ ແລະຄ່ອຍໆສັງເກດເບິ່ງຜູ້ສາວວ່າ ກຳລັງເຮັດອັນໃດຢູ່. ບັງເອີນໄດ້ເຫັນສາວຜູ້ນັ້ນນອນເລືອກດອກຝ້າຍໃຫ້ແມ່ຢູ່ກາງຊານ. ຜູ້ບ່າວເກີດມີຄວາມຄິດວ່າ " ສາວຄົນນີ້ຕ້ອງເປັນຄົນດຸໝັ່ນທີ່ສຸດ ເພາະນອນຢູ່ກໍຍັງນຳຝ້າຍມາ ເລືອກ ຄົງຈະຕ່ຳຫູກທໍໄໝເກັ່ງດັ່ງຄວາມແມ່ສັ່ງໄວ້ ". ບ່າວຄົນນີ້ເກີດມີຄວາມສົນໃຈສູງຂຶ້ນ ຈຶ່ງຄ່ອຍຂະຫຍັບຕົວເຂົ້າໄປໃກ້ໆກັບເສົາເຮືອນກ້ອງຕະລ່າງຂອງເຮືອນຜູ້ສາວຄົນນັ້ນ, ບັງເອີນໄດ້ຍິນແມ່ຂອງຜູ້ສາວລົມກັບລູກສາວວ່າ "ຖ້າຈະເອົາຜົວ ຢາກສ້າງບ້ານສ້າງເຮືອນໃຫ້ມີຢູ່ມີກິນຄືເພິ່ນ ຕ້ອງເລືອກເອົາຄົນດຸຄົນໝັ່ນ ...".

- " ເຮັດແນວໃດຈຶ່ງຈະຮູ້ວ່າ ຜູ້ໃດດຸໝັ່ນ ຜູ້ໃດຂີ້ຄ້ານເນາະແມ່? ", ລູກສາວຖາມແມ່.
- " ຊິຍາກຫຍັງ ກໍສັງເກດເບິ່ງມືຂອງເຂົາ ເວລາທີ່ເຂົາຄວັກເຈົ້ານັ້ນລະບໍ " ແມ່ຕອບ.
- " ສັງເກດແນວໃດເນາະແມ່ ? ", ລູກສາວຖາມອີກ.
- "ເວລາເຂົາເອົາມືປ່ອນຂຶ້ນມາຄວັກເຈົ້າທີ່ປ່ອງທົ່ວບ່ອນນອນ,ເຈົ້າກໍເອົາມືລູບເບິ່ງມືເຂົາ ຖ້າມືເຂົາຊາ ບໍ່ນຸ້ມບໍ່ນວນ ຜູ້ນັ້ນແຫລະຄືຄົນດຸໝັ່ນ ", ແມ່ແນະນຳລູກ.

ບັງເອີນບ່າວຂີ້ຄ້ານຄົນນັ້ນລັກຈອບຟັງຢູ່ກ້ອງຕະລ່າງໄດ້ຍິນຄວາມລັບແລ້ວ ຈຶ່ງຟ້າວກັບບ້ານ.

ມື້ຕໍ່ມາ, ບ່າວຜູ້ນັ້ນຈຶ່ງແຕ່ງຕົວກຽມຄວາມພ້ອມ ດ້ວຍການເອົາເຂົ້າໜຽວມາໜ່ຽງໃສ່ມືໃຫ້ນານເພື່ອໃຫ້ເຂົ້າຕິດມື ຈະໄດ້ມືຊາໄປອວດສາວ, ແລ້ວກໍເດີນທາງອອກຈາກບ້ານໄປຫາຜູ້ສາວ. ເມື່ອໄປຮອດບ້ານຜູ້ສາວກໍຮອດກາງຄືນພໍດີ. ຜູ້ບ່າວໄດ້ໂອກາດດີຈຶ່ງປ່ອນມືຂຶ້ນປ່ອງທົ່ວນອນຄວັກຜູ້ສາວ. ຝ່າຍຜູ້ສາວເຫັນມືຜູ້ບ່າວຍື່ນຂຶ້ນໃນປ່ອງ ຈຶ່ງປະຕິບັດຕາມຄຳແນະນຳຂອງແມ່ ດ້ວຍການເອົາມືຂອງຕົນຈັບມືຜູ້ບ່າວ ພ້ອມທັງລູບໆຄຳໆເບົາໆ, ພົບວ່າມືຜູ້ບ່າວຜູ້ນີ້ມືຊາໆ ຖືກຕາມຕຳລາຂອງແມ່ບອກ. ຜູ້ສາວຈຶ່ງຟ້າວລຸກຂຶ້ນເປີດປະຕູອະນຸຍາດໃຫ້ຜູ້ບ່າວເຂົ້າໄປນັ່ງຫລິ້ນຢູ່ໃນເຮືອນ.

ຕັ້ງແຕ່ນັ້ນມາ, ບ່າວສາວຄູ່ນັ້ນຈຶ່ງເລີ່ມມີຄວາມເຂົ້າໃຈເຊິ່ງກັນ ແລະກັນ. ຕໍ່ມາບໍ່ດົນທັງສອງຄົນກໍເກີດຄວາມຮັກມັກ ມີຄວາມເພິ່ງພໍໃຈເຊິ່ງກັນ ແລະກັນ. ຜູ້ບ່າວກໍໝັ້ນໃຈວ່າຜູ້ສາວຈະເປັນຄົນດຸໝັ່ນຊ່າງຕ່ຳຫູກທໍໄໝ ເພາະໄດ້ພົບເຫັນຜູ້ສາວນອນເລືອກຝ້າຍ, ລໍ້ຝ້າຍໃຫ້ແມ່ເລື້ອຍໆ. ສ່ວນຜູ້ສາວຜູ້ນັ້ນກໍໝັ້ນ

ໃຈວ່າ ຜູ້ບ່າວເປັນຄົນດຸໝັ່ນໃນການເຮັດໄຮ່ໄຖນາ ມີຈຶ່ງຊາ, ຖ້າເອົາມາເປັນຜົວ ຊີວິດຕົນກໍຈະບໍ່ອຶດເຂົ້າຢາກປາ. ໃນທີ່ສຸດສອງຝ່າຍກໍຕົກລົງປົງໃຈຮ່ວມຊີວິດນຳກັນ ຈຶ່ງສະເໜີໃນເຖົ້າແກ່ມາສູ່ຂໍ ແລະແຕ່ງດອງກັນຕາມປະເພນີ.

ຫລັງແຕ່ງດອງ ຜູ້ບ່າວກໍຍົກຍ້າຍມາຢູ່ບ້ານຂອງເຈົ້າສາວນຳພໍ່ເຖົ້າແມ່ເຖົ້າຕາມປະເພນີ. ມາຢູ່ນຳກັນໄດ້ບໍ່ດົນ, ພໍ່ເຖົ້າແມ່ເຖົ້າເຫັນວ່າລູກເຂີຍ ແລະລູກສາວຂອງຕົນເປັນຄົນຂີ້ຄ້ານ, ຈຶ່ງບໍ່ສາມາດມອບມໍລະດົກໃຫ້ສືບຢາວແທນເຮືອນໄດ້. ພໍ່ເຖົ້າແມ່ເຖົ້າໄດ້ແນະນຳໃຫ້ລູກສາວແລະລູກເຂີຍອອກເຮືອນ. ຜົວເມຍຄູ່ນັ້ນຈຶ່ງພາກັນຕັ້ງເຮືອນຫລັງນ້ອຍໆຫລັງໜຶ່ງຢູ່ຫ່າງຈາກບ້ານບ້ານຂອງພໍ່ເຖົ້າແມ່ເຖົ້າ.

ຜົວເມຍຄູ່ນັ້ນຄອງເຮືອນດ້ວຍຄວາມຂີ້ຄ້ານ ຈຶ່ງທຸກຍາກຂາດເຂີນ ເຂົ້າຂາດແລງແກງຂາດໝໍ້, ຜູ້ເປັນເມຍ ເຂົ້າບໍ່ແກງແລງງາຍບໍ່ແຕ່ງ ຫູກບໍ່ຟາຍ ຫາເລາະຫລິ້ນຈົ່ມຂວັນຢູ່ຕາມກ້ອງຕະລ່າງເຮືອນນັ້ນເຮືອນນີ້; ສ່ວນຜູ້ເປັນຜົວກໍອອກໄປເຮັດໄຮ່ເຮັດນາວັນລະເລັກລະນ້ອຍ ແລ້ວມາຫາເລາະຫລິ້ນກິນເຫລົ້າກັບໝູ່ຢູ່ບ້ານນັ້ນເຮືອນນີ້ຢູ່ທຸກວັນ. ເມື່ອຜົວກິນເຫລົ້າເມົາມາຮອດເຮືອນ ເມຍກໍປ້ອຍດ່າວ່າຮ້າຍຈົ່ມທຸກຈົ່ມຍາກ ບອກວ່າ " ຜົວບໍ່ດີ ບໍ່ພາສ້າງພາສາ ຈຶ່ງທຸກຈຶ່ງຍາກ ". ຜູ້ເປັນຜົວກໍດ່າວ່າຮ້າຍໃຫ້ເມຍວ່າ " ອີຂີ້ຄ້ານ ! ເຂົ້າບໍ່ແກງແລງງາຍບໍ່ແຕ່ງ ! ບອກອີ້ວຝ້າຍຕອນເຊົ້າກໍວ່າເຊົ້າໂພດ, ບອກຕອນສວາຍພັດວ່າມັນແດດ ມີແຕ່ຈະເອົາຝາມືແດກໜ້າມັນຈຶ່ງຈະພໍດີ ". ການຜິດຖຽງກັນຂອງຜົວເມຍຄູ່ນີ້ເກີດຂຶ້ນບໍ່ເວັ້ນແຕ່ລະວັນ, ບາງວັນກໍຮ້າຍແຮງຂຶ້ນເຖິງຂັ້ນຕົບຕີກັນ, ຖ້າມີການຕີກັນຄັ້ງໃດເມຍຖຽດໃຫ້ຜົວເກັບເອົາເຄື່ອງອູ້ມເອົາລູກໄປຢູ່ນຳພໍ່ແມ່. ເມື່ອຜົວສວ່າງເມົາໃຈດີຂຶ້ນຄິດເຖິງເມຍແລະລູກ ກໍເມືອນຳເອົາເມຍແລະອ້ອນວອນໃຫ້ເມຍ ແລະລູກກັບມາ. ເມື່ອເຫັນຜົວເວົ້າດີນຳ ເມຍກໍໃຈອ່ອນຫິ້ວຖົງເຄື່ອງແລ່ນນຳຜົວ, ມາຢູ່ນຳກັນບໍ່ເຖິງ 7 ວັນ ກໍຜິດ ກັນອີກ. ການຜິດຖຽງກັນຖຽດແລ້ວໜີ ດີແລ້ວກັບມາ ກາຍເປັນປະເພນີ ແລະກິດຈະກຳປະຈຳເດືອນຂອງ ຜົວເມຍຄູ່ນີ້ ເຊິ່ງຊາວບ້ານບໍ່ໄດ້ຫົວຊາ ຖືເປັນເລື່ອງປົກກະຕິຂອງຄອບຄົວນີ້.

ຄອບຄົວຜົວເມຍຄູ່ນີ້ ມີຄວາມສຸກບົນການຜິດຖຽງກັນມາເປັນເວລານານ ມີພະຍານຮັກນຳກັນສາມຄົນ, ຄົນທຳອິດເປັນລູກສາວຊື່ວ່າ ອີ່ນາງ, ພໍ່ແມ່ຈຶ່ງໄດ້ນາມວ່າ " ພໍ່ອີ່ນາງແມ່ອີ່ນາງ " . ຫລັງຈາກເກີດລູກຄົນທີສາມ, ເນື່ອງຈາກອາຫານການກິນໃນຄອບຄົວບໍ່ພຽງພໍ, ກິນອຶດໆຢາກໆ, ຜູ້ເປັນເມຍຈຶ່ງລົ້ມປ່ວຍ ຜົວ ລູກເຈັບເປັນ ເປັນມະລ້ອງຈ້ອງຈ່ອຍ ໃນທີ່ສຸດກໍຈົບຊີວິດລົງດ້ວຍຄວາມຕາຍ.

ເມື່ອເມຍຕາຍ ຜູ້ເປັນຜົວຫາຜ້າແພສີຂາວຈະມາຫຸ້ມຫໍ່ສົບເມຍກໍບໍ່ມີ, ເງິນທອງກໍບໍ່ມີ, ຫລຽວໄປຫາທົ່ວທຸກຫ້ອງເຮືອນກໍບໍ່ມີຫຍັງ ຫລຽວເຫັນແຕ່ກະຕ່າດອກຝ້າຍທີ່ແມ່ເຖົ້ານຳມາໃຫ້ລູກສາວ ບອກໃຫ້ລູກສາວ ເຮັດຫູກເຮັດຝ້າຍນຳບ້ານນຳເມືອງ ແຕ່ລູກສາວບໍ່ລົງມືເຮັດຈັກເທື່ອ ຜູ້ເປັນຜົວຈຶ່ງຈັບເອົາດອກຝ້າຍສີຂາວນັ້ນມາ " ປົກຂອງເມຍ " ພ້ອມທັງຮ້ອງໄຫ້ວ່າ " ແມ່ອີ່ນາງເອີຍ ! ຂ້ອຍບອກເຈົ້າອີ້ວຝ້າຍຕອນເຊົ້າເຈົ້າຕອບ ວ່າຕອນສວາຍກ່ອນ, ຂ້ອຍບອກເຈົ້າອີ້ວຕອນສວາຍ ເຈົ້າຕອບວ່າມັນແດດ, ຂ້ອຍຈຶ່ງເອົາດອກຝ້າຍປົກຂອງ ໃຫ້ເຂົ້າເມືອເມືອງຟ້າ ໂຈໂທ! ເດີ! ແມ່ອີ່ນາງເດີ! ".

ຄວາມຮັກລະຫວ່າງບ່າວສາວຊາວລາວ ໄດ້ປາກົດຜ່ານວັນນະຄະດີລ້ານຊ້າງ, ເປັນຄວາມຮັກທີ່ຂາດສິດເສລີພາບ ເນື່ອງຈາກອຳນາດ ແລະເງິນທອງ. ຜູ້ຊາຍທີ່ມີອຳນາດ ເປັນລູກເຈົ້າຫລານຂຸນຜູ້ມີຍົດ

ຖາບັນດາສັກ ແລະຜູ້ເງິນທອງ ຈະມີສິດເອົາເມຍຫລາຍຄົນ, ເຮັດໃຫ້ແມ່ຍິງຂາດສິດອຳນາດໃນການເລືອກຄູ່ຄອງ, ແຕ່ໃນວັນນະຄະດີສະໄໝນີ້ ກໍສ່ອງແສງໃຫ້ເຫັນຄວາມອົດທົນຊື່ສັດບໍລິສຸດ ຄວາມຮັກລູກຖະໜອມຜົວຂອງແມ່ຍິງລາວ, ສ່ອງແສງໃຫ້ເຫັນຮີດຄອງປະເພນີການຄອງເຮືອນຂອງແມ່ຍິງລາວໃນສະໄໝສັກດີນາ ດັ່ງປາກົດໃນບົດເລື່ອງ ກາລະເກດ, ແຕ່ງອ່ອນ, ຈຳປາສີ່ຕົ້ນ, ສິນໄຊ ແລະອື່ນໆ.

(*) ຄວາມຮັກລະຫວ່າງບ່າວສາວ ແລະປະເພນີການຄອງເຮືອນຂອງຄົນລາວ ທີ່ປາກົດໃນວັນນະຄະດີ ປັດຈຸບັນເປັນຄວາມຮັກທີ່ບ່າວສາວມີສິດເສລີພາບໃນຄວາມຮັກ, ເປັນຄວາມຮັກທີ່ເຕີບໂຕຂຶ້ນໃນພາລະກິດການປະຕິວັດຊາດປະຊາທິປະໄຕ. ເມື່ອຕັດສິນໃຈສ້າງຄອບຄົວນຳກັນແລ້ວ ແມ່ຍິງຈະຂານອາສາເບິ່ງແຍງລ້ຽງດູຄອບຄົວເຮືອນຊານ ແລະລູກເຕົ້າ; ປະກອບສ່ວນເຮັດວຽກການເມືອງຊ່ວຍຜົວ. ຜູ້ເປັນຜົວກໍຈະແບກຫາບພາລະໜ້າທີ່ອັນໜັກໜ່ວງຂອງຊາດຄື ປະກອບສ່ວນເປັນທະຫານແນວໜ້າ. ທັງຍິງ ແລະຊາຍລ້ວນແຕ່ມີຄວາມຮັກບໍລິສຸດຕໍ່ກັນ ພ້ອມທັງແຂ່ງຂັນກັນສ້າງຜົນງານປະກອບສ່ວນໃຫ້ແກ່ຊາດ ແລະການປະຕິວັດ ດັ່ງປາກົດໃນບົດເລື່ອງຜູ້ສືບທອດ, ນາງນາແມ່ຍິງສາມເກັ່ງ, ລູກສາວຂອງພັກ ແລະບົດເລື່ອງອື່ນໆ.

ລວມຄວາມແລ້ວ ໃນບົດວັນນະຄະດີລາວໄດ້ສ່ອງແສງໃຫ້ເຫັນຮີດຄອງປະເພນີທີ່ເປັນວັດທະນະທຳອັນດີງາມຂອງຄວາມຮັກມັກລະຫວ່າງບ່າວສາວ ແລະ ການຄອງເຮືອນຂອງຊາວລາວຢ່າງຖືກຕ້ອງຕາມປະເພນີ. ຜ່ານບົດວັນນະຄະດີລາວແຕ່ສະໄໝບູຮານເຖິງປັດຈຸບັນ ລ້ວນແຕ່ຍົກໃຫ້ເຫັນເຖິງຄວາມຮັກອັນດີງາມ ແມ່ຍິງຈະເປັນຜູ້ຮັກເນື້ອສະຫງວນຕົວ, ຝ່າຍຊາຍຈະເປັນຜູ້ບອກຮັກໃຫ້ແກ່ຝ່າຍຍິງ. ເມື່ອຮັກມັກກັນແລ້ວ ຍິງຊາຍຈະມີສິດເສລີພາບໃນການສ້າງຄອບຄົວນຳກັນ ໂດຍມີການແບ່ງງານກັນເຊັ່ນແມ່ຍິງຈະເປັນ ເບິ່ງແຍງເຮືອນຊານບ້ານຊ່ອງ ລ້ຽງດູລູກ ແລະເຂົ້າຂອງເງິນທອງໃນຄອບຄົວ, ເປັນຜູ້ຮັກສາແບ່ງສັນປັນສ່ວນໃນການໃຊ້ຈ່າຍ. ສ່ວນຜູ້ຊາຍຈະເປັນຜູ້ອອກໄປເຮັດໄຮ່ໄຖນາ ປະກອບສ່ວນວຽກງານບ້ານເຮືອນ ແລະ ປະເທດຊາດບ້ານເມືອງ, ອົດອອມຖະໜອມສ້າງ ຫາເງິນທອງມາໄວ້ກັບລູກເມຍ. ແຕ່ທັງຍິງ ແລະຊາຍກໍລ້ວນແຕ່ມີຈິດໃຈບໍລິສຸດ ພ້ອມທັງຊ່ວຍເຫລືອເຊິ່ງກັນ ແລະກັນໃນການສ້າງຊີວິດຄອບຄົວໃຫ້ມີຄວາມສຸກຄວາມສົມບູນ ໂດຍປະຕິບັດຕາມຫລັກປະເພນີການຄອງເຮືອນແບບຜົວດຽວເມຍດຽວ ຈຶ່ງເຮັດໃຫ້ຊີວິດຄອບຄົວຂອງຊາວລາວມີຄວາມໝັ້ນຄອງ ແລະມີຄວາມສຸກອົບອຸ່ນຕະຫລອດມາ.

## 2.3.2.ວັນນະຄະດີສະແດງໃຫ້ເຫັນສິລະທຳ ແລະຄວາມມຸ່ງມາດປາຖະໜາຂອງຄົນພາຍໃນຊາດ.

ເມື່ອຄົ້ນຄວ້າບັນດາບົດວັນນະຄະດີຕ່າງໆ ພົບວ່າ ປະຊາຊົນລາວເປັນຜູ້ມັກ ແລະຮັກຄວາມເປັນທຳ ເຊິ່ງປາກົດອອກໃນການປັ້ນແຕ່ງຕົວລະຄອນໃນບົດວັນນະຄະດີລາວ ແຕ່ສະໄໝບູຮານຈົນເຖິງປັດຈຸບັນ ຜູ້ແຕ່ງໄດ້ຍົກໃຫ້ເຫັນເຖິງຂໍ້ຂັດແຍ້ງຂອງສອງຕົວລະຄອນຄື ຕົວລະຄອນສິນທຳ ແລະຕົວລະຄອນອະທຳ. ຕົວລະຄອນສອງສາຍນີ້ຈະມີຄວາມແຕກຕ່າງກັນທາງດ້ານຊີວິດການເປັນຢູ່, ແນວຄິດ,

ຈິດຕະສາດ; ຄວາມມຸ່ງມາດປາຖະໜາ.ຈາກນັ້ນຈຶ່ງເກີດຄວາມຂັດແຍ້ງກັນ ແລະຕໍ່ສູ້ກັນ. ການຕໍ່ສູ້ຂອງສອງສາຍຕົວລະຄອນນີ້ໄດ້ສິ້ນສຸດລົງດ້ວຍໄຊຊະນະຂອງຝ່າຍສິນທຳ ຕົວຢ່າງເຊັ່ນ

ໃນບົດວັນນະຄະດີພື້ນເມືອງ ໃນລະບົບເລື່ອງທ້າວກ່ຳພ້າ ຜູ້ແຕ່ງກໍຈະຍົກໃຫ້ເຫັນຄວາມແຕກຕ່າງຂອງທ້າວກ່ຳພ້າກັບພະຍາ, ຍົກໃຫ້ເຫັນຂໍ້ຂັດແຍ້ງ ແລະການຕໍ່ສູ້ກັນລະຫວ່າງທ້າວກ່ຳພ້າກັບພະຍາ, ການຕໍ່ສູ້ກັນນັ້ນກໍສິ້ນສຸດລົງດ້ວຍໄຊຊະນະຂອງຝ່າຍສິນທຳ ຄືໄຊຊະນະຂອງທ້າວກ່ຳພ້າ. ໃນວັນນະຄະດີສະໄໝລ້ານຊ້າງ ຜູ້ແຕ່ງກໍຈະຍົກໃຫ້ເຫັນຂໍ້ຂັດແຍ້ງຕ່າງໆທີ່ເກີດຂຶ້ນໃນພະລາຊະວັງ ເຊິ່ງເປັນເຫດການການຍາດແຍ່ງກັນເປັນເຈົ້ານາຍເຊັ່ນ ເລື່ອງ ສິນໄຊ ເຮົາກໍຈະເຫັນຄວາມຂັດແຍ້ງລະຫວ່າງທ້າວສິນໄຊ (ເປັນຕົວລະຄອນຝ່າຍສິນທຳ) ກັບທ້າວທັງທົກ (ຕົວລະຄອນຝ່າຍອະທຳ). ໃນເລື່ອງ ຈຳປາສີ່ຕົ້ນ ເຮົາກໍຈະເຫັນຂໍ້ຂັດແຍ່ງລະຫວ່າງຕົວລະຄອນນາງອັກຄີ ( ຕົວລະຄອນຝ່າຍ ອະທຳ ) ກັບນາງປະທຸມມາ ( ຕົວລະຄອນຝ່າຍ ສິນທຳ) ແລະເລື່ອງອື່ນໆ. ໃນວັນນະຄະດີປະຕິວັດກໍຈະມີທຸກເລື່ອງທີ່ຍົກໃຫ້ເຫັນຂໍ້ຂັດແຍ້ງຂອງຝ່າຍອະທຳ ແລະຝ່າຍສິນທຳເຊັ່ນ ເລື່ອງ ເສັ້ນທາງແຫ່ງຊີວິດ ກໍຈະເຫັນຂໍ້ຂັດແຍ້ງລະຫວ່າງເພຍຕົງ (ຕົວລະຄອນອະທຳ ) ກັບສອງແມ່ລູກ ( ຕົວລະຄອນສິນທຳ ). ການແກ້ໄຂຂໍ້ຂັດແຍ້ງຂອງທຸກໆບົດເລື່ອງນັ້ນ ກໍຈະສິ້ນສຸດລົງດ້ວຍໄຊຊະນະຂອງຝ່າຍສິນທຳ. ນີ້ຢັ້ງຢືນ ຊັດເຈນແລ້ວວ່າປະຊາຊົນລາວເປັນຜູ້ຮັກ ແລະນັກຄວາມເປັນທຳ.

ໃນບົດວັນນະຄະດີລາວ ນອກຈາກຈະຍົກໃຫ້ເຫັນຄວາມເປັນທຳຂອງສັງຄົມແລ້ວ ຍັງຍົກໃຫ້ເຫັນຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວ ເຊິ່ງປາກົດອອກໃນການປັ້ນແຕ່ງຕົວລະຄອນສິນທຳ. ໃນບົດວັນນະຄະດີ ຕົວລະຄອນສິນທຳຈະເປັນຄົນທຸກຈົນ, ແຕ່ເປັນຄົນມີຄວາມອົດທົນ, ມີຄວາມດຸໝັ່ນ ແລະຊື່ສັດບໍລິສຸດ. ຕົວລະຄອນເຫລົ່ານັ້ນຈະເປັນຄົນບຸກບືນ ພ້ອມກັນນັ້ນກໍຈະໄດ້ຮັບຄວາມຮັກແພງຊ່ວຍເຫລືອຈາກຄົນອື່ນ ໃນທີ່ສຸດຕົວລະຄອນເຫລົ່ານັ້ນກໍຈະໄດ້ຮັບຜົນສຳເລັດໃນຊີວິດຄືຈະກາຍເປັນຜູ້ຮັ່ງມີ, ເປັນເສດຖີ, ເປັນເຈົ້າພະຍາມະຫາກະສັດ, ມີໄຮ່ນາກວ້າງຂວາງ, ມີເງິນທອງສົມບັດ. ນີ້ສະແດງໃຫ້ເຫັນວ່າ ປະຊາຊົນລາວມີຄວາມມຸ່ງມາດປາຖະໜາໃນການດັດສ້າງຊີວິດຂອງຕົນ ໃຫ້ນັບມື້ນັບດີຂຶ້ນເລື້ອຍໆ.

## 2.4. ວັນນະຄະດີເປັນຄັງສາງພາສາແຫ່ງຊາດ

ຊາດລາວປະກອບດ້ວຍຫລາຍຊົນເຜົ່າທີ່ມີພາສາປາກເວົ້າ, ຕົວໜັງສື ຕະຫລອດຮອດຮີດຄອງປະເພນີການເຊື່ອຖືຕ່າງໆທີ່ເປັນເອກະລັກຂອງຕົນເອງ. ບັນດາເຜົ່າເຫລົ່ານັ້ນເຂົາເຈົ້າຍັງມີຄວາມຮ່ວມແຮງຮ່ວມໃຈກັນຕໍ່ສູ້ ເພື່ອປົກປັກຮັກສາປິຕຸພູມແຫ່ງນີ້ຕະຫລອດມາ. ບໍ່ສະເພາະແຕ່ເທົ່ານັ້ນ ເຂົາເຈົ້າຍັງແລກປ່ຽນເສີມສ້າງມູນເຊື້ອວັດທະນະທຳ ດ້ວຍຫລາຍຮູບຫລາຍສີອັນອຸດົມສົມບູນຈະເລີນງອກງາມຈົນເຖິງວັນນີ້ ກໍເນື່ອງຈາກການໃຊ້ພາສາທີ່ມີການແລກປ່ຽນຄົບຄ້າອາລົມຈິດເຊິ່ງກັນ ແລະກັນ. ກ່ອນໜ້ານີ້ຫລາຍຮ້ອຍປີທີ່ ລາວເຮົາຍັງບໍ່ທັນມີຕົວໜັງສືເພື່ອຈົດບັນທຶກ ແຕ່ເຂົາເຈົ້າກໍສາມາດປະດິດຄິດແຕ່ງບົດວັນນະຄະດີຕ່າງໆ ດ້ວຍການເລົ່າປາກຕໍ່ປາກຢ່າງອຸດົມສົມບູນ ເຊິ່ງສະແດງອອກຜ່ານບົດວັນນະຄະດີເຊັ່ນ ເທບນິຍາຍ, ພື້ນສືບ, ນິທານ, ກາບກອນ, ຜະຫຍາ, ສຸພາສິດ ຕະຫລອດຮອດຂັບລຳ, ເຊິ້ງ, ໂສກ

ຫລືສະແດງພື້ນເມືອງອື່ນໆ. ດັ່ງນັ້ນ, ອາດເວົ້າໄດ້ວ່າ ພາສາວັນນະຄະດີສຸດທີ່ອຸດົມສົມບູນ ລະເຈືອຈານເຂົ້າໃນໝູ່ມະຫາຊົນ, ເຖິງວ່າພາສາມີການກຳເນີດ, ຂະຫຍາຍຕົວ ແລະຕາຍໄປບົນພື້ນຖານສັງຄົມກຳນົດໂດຍສະເພາະພາສາຂຽນມີການປ່ຽນແປງໄປຕາມຍຸກສະໄໝປະຫວັດສາດເຊັ່ນວ່າ ຈັກຄິດໄລ່ ແລະ ຄອມພິວເຕີ.

ຈັກຄິດໄລ່ແມ່ນພາສາລາວ ສ່ວນຄອມພິວເຕີແມ່ນພາສາສາກົນ, ແຕ່ພາສາວັນນະຄະດີບໍ່ມີການປ່ຽນແປງ, ຊ້ຳບໍ່ໝຳຍັງແຜ່ຂະຫຍາຍ ແລະເຈືອຈານເຂົ້າໃນໝູ່ມະຫາຊົນຢ່າງເລິກເຊິ່ງ. ຍາມໃດພາສາວັນນະຄະດີກໍ່ຍັງຮັກສາໄດ້ລັກສະນະຮູບພາບ, ສີສັນ ແລະສຳນວນອັນລະອຽດອ່ອນທີ່ສຸດ, ເມື່ອພັນລະນາເຖິງສິ່ງໃດສິ່ງໜຶ່ງ ຈະແມ່ນບົດເລື່ອງນະວະນິຍາຍ ຫລືປະເພດວັນນະຄະດີຄຳກອນ, ກອນຜະຫຍາ, ສຸພາສິດກໍ່ດີ... ພາສາວັນນະຄະດີສາມາດເຮັດໃຫ້ຄົນເຮົາສຳນຶກເຫັນ, ບາງຄັ້ງຄາວເກີດມີຄວາມຄຽດແຄ້ນ, ກົງກັນຂ້າມ ບາງຄັ້ງເກີດມີຄວາມອີດູສົງສານ ແລະໜ້າຮັກ ເຊິ່ງສະແດງໃຫ້ເຫັນພາສາວັນນະຄະດີທີ່ເວົ້າເຖິງຄວາມຮັກດັ່ງນີ້:

| | |
|---|---|
| ອ້າຍຮັກນ້ອງເໝືອນດັ່ງດາວຮັກຟ້າ | ປູປາຮັກນ້ຳໃຫຍ່ |
| ບໍ່ເຫັນໜ້າ | ເຫັນນາກໍ່ພໍຢູ່ |
| ເຫັນແຕ່ເສື້ອພາດແຈ | ເຫັນແຕ່ແພພາດຮົ້ວ |
| ຍິນສຽງຫົວຢູ່ບ້ານ | ຄືຊິໄດ້ປາກນຳ ນ້ອງເອີຍ |

ບໍ່ສະເພາະແຕ່ເທົ່ານັ້ນ ພາສາວັນນະຄະດີຍັງສະແດງໃຫ້ເຫັນຮູບພາບການດຳລົງຊີວິດການທຳມາຫາກິນຂອງປະຊາຊົນໃຫ້ການເຮັດໄຮ່ໄຖນາ, ການຕຳຫູກທໍໄໝ ແລະຄ້າຂາຍ ດັ່ງຄຳທີ່ວ່າ:

| | |
|---|---|
| – ເຮັດນາ | ຢ່າແພງກ້າ |
| ໄປຄ້າ | ຢ່າແພງທຶນ |
| – ເມື່ອຍັງນ້ອຍ | ເປັນໄຄ |
| ເມື່ອເປັນໂຕ | ເຂົ້າທໍ່ປະລາດ |
| ໝົດຊາດແລ້ວ | ເມືອເມືອງສະຫວນ |
| ຍັກກຸມພັນ | ແກ່ຄໍໄປຂ້າ |

ນອກຈາກນີ້ແລ້ວ ພາສາວັນນະຄະດີຍັງໄດ້ບອກເຖິງລະດູການຕ່າງໆເຊັ່ນ

| | |
|---|---|
| ເດືອນຈຽງ | ເກັບດອກຝ້າຍບານ |
| ເດືອນຍີ່ | ຕີພ້າຂວານມິດໄວ້ |
| ເດືອນສາມ | ຖາງໄຮ່ເປັນພົນ |
| ເດືອນສີ່ | ເອົາຫລົວຟືນ ແລະຕຳຜ້າ |
| ເດືອນຫ້າ | ຈູດໄຮ່ຮ້າແປນດີ |
| ເດືອນຫົກ | ໄຖຄາດມີແຮໄວ້ |
| ເດືອນເຈັດ | ຕົກກ້າໃສ່ນາປີ |
| ເດືອນແປດ | ສາມັກຄີດຳນາທົ່ວດ້າວ |

ເດືອນເກົ້າ . ກິນເຂົ້າເພົ້າໄຮ່ດໍ
ເດືອນສິບ ເຂົ້ານາງານພໍສາວບ່າວ
ເດືອນສິບເອັດ ປູປາຕ່າວລີງໄຊ
ເດືອນສິບສອງ ກອງເຂົ້າ, ຕີເຂົ້າ
ແລ້ວເອົາຂຶ້ນເລົ້າຂຶ້ນເຍຍ ນອກຈາກລະດູການຕ່າງໆທີ່ກ່າວມາ, ພາສາວັນນະຄະດີຍັງບອກປະເພດໝາກໄມ້ຊະນິດຕ່າງໆ ດັ່ງ ນີ້

ເປືອກເປັນນໍ ແມ່ນໝາກຂີ້ຫູດ
ຈັບຕູດປູດ ແມ່ນໝາກເດື່ອແຄນຂອງ
ມີໝາກຈອງ ໝາກຈັນໝາກກ້ວຍ
ເມັດອ້ວຍຊ້ວຍ ເຂົ້າໂພດສາລີ
ຫລາຍອີຫລີ ເຕັມສວນເຕັມໄຮ່
ນັບບໍ່ໄຂວ່ ໝາກໄມ້ນານາ...

ພາສາວັນນະຄະດີບົ່ງບອກເຖິງຄວາມສາມັກຄີໃນຕີຈິດ ເອື້ອເຟື້ອເພື່ອແຜ່ເຊິ່ງກັນ ແລະກັນ ດັ່ງຄຳທີ່ ວ່າ

\- ຟັນເຮືອໄວ້ ຫລາຍລຳແຮທ່າ
ຜ່າເຂົ້າໄວ້ ຫລາຍອ່າງແຮເຮືອນ
\- ຫລືວ່າ ຮົ້ວຫລາຍຫລັກ ຈິ່ງໝັ້ນ
ພີ່ນ້ອງຫລາຍຊັ້ນ ຈິ່ງດີ
\- ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂວ່
ໄພ່ບໍ່ພ້ອມ ແປງບ້ານບໍ່ເຮືອງ

ນອກຈາກບົ່ງບອກເຖິງຄວາມສາມັກຄີແລ້ວ ພາສາວັນນະຄະດີຍັງຕັກເຕືອນໃຫ້ຄົນເຮົາເປັນຄົນທີ່ດີ ມີມາລະຍາດ ຮູ້ຈັກຕ່ຳຈັກສູງ ຮູ້ເຄົາລົບຢຳເກງ ແລະອື່ນໆ ເຊິ່ງສະແດງອອກໃນຄຳທີ່ວ່າ:

ເປັນນາຍ ໃຫ້ຮັກໝູ່
ເປັນປູ່ ໃຫ້ຮັກຫລານ
ເປັນຂຸນກວນ ໃຫ້ຮັກໝູ່ບ້ານ
ຄັນຊິຕ້ານ ໃຫ້ຄ່ອຍພຽນຈາ
ເປັນຄົນນີ້ ໃຫ້ທຳພຽນຄືນົກເຈົ່າ
ບາດວ່າບິນຜ່ານຜ້າຍ ໃຫ້ຂາວແຈ້ງດັ່ງນົກຍາງ

ຈາກບັນຫາດັ່ງກ່າວ, ພາສາວັນນະຄະດີບົ່ງບອກເຖິງຄວາມສຽດສີ ຕຳໜິຊົນຊັ້ນປົກຄອງ ດັ່ງຄຳທີ່ ວ່າ:

\- ໄຫໃຫຍ່ລົ້ນ ໄຫນ້ອຍບໍ່ເຕັມ
\- ຜູ້ກິນກິນພໍຮາກ ຜູ້ຍາກຍາກພໍຕາຍ

- ຕຳໜີນາຍ ພາຍຖີງໄປກ່ອນ
- ດາບຢູ່ເໜືອ ຄຳຢູ່ໃຕ້

ພາສາວັນນະຄະດີຍັງສະແດງໃຫ້ເຫັນເຖິງ ການຕຳໜິຕິນເອງ, ຕຳໜິການທໍ້ແທ້ໝົດຫວັງດັ່ງນີ້

ເປັນຂ້ອຍ ໃຫ້ເປັນຂ້ອຍອາດຍາ
ເປັນໝາ ໃຫ້ເປັນໝາວັດ

ອາດເວົ້າໄດ້ວ່າ ພາສາວັນນະຄະດີສຸດທີ່ມີຄວາມໝາຍຢ່າງເລິກເຊິ່ງ ແລະແຊກຊ້ອນໄປດ້ວຍຮູບພາບ ແລະສີສັນທີ່ເປັນເອກະລັກສະເພາະຂອງຊາດ, ດັ່ງສະເໜີໄປແລ້ວວ່າ ເມື່ອພາສາຂຽນໄດ້ກຳເນີດຂຶ້ນ ແລະຂະຫຍາຍຕົວໄປຕາມເສດຖະກິດສັງຄົມໃໝ່, ພາສາວັນນະຄະດີຍິ່ງອຸດົມສົມບູນບໍ່ວ່າດ້ານເນື້ອໃນ ແລະຮູບການຜ່ານບົດປະພັນນະວະນິຍາຍ ແລະກາບກອນ, ຜະຫຍາພາສິດ ຕະຫລອດຮອດຄຳທວາຍຕ່າງໆ. ໃນປັດຈຸບັນ ສັບພາສາໃນວັນນະຄະດີຍິ່ງອຸດົມມັ່ງຄັ່ງທາງດ້ານທຳນອງ ແລະຮູບພາບທີ່ມີຊີວິດຊີວາ ສ່ອງແສງໄປຕາມຍຸກປະຫວັດສາດໃໝ່ ດັ່ງຄຳທີ່ວ່າ:

- ອັດສະຈັນໃຈລາ໌ ງົນກຳກາງແກ່ງ
  ສາມສິບລູກແຈ່ມເຈົ້າ ຍືນເຝົ້າແມ່ຄົງ
- ບຸນຫຍັງເພິ່ນຊັງ ວັງຫຍັງເພິ່ນໜ່າຍ

ພາສາວັນນະຄະດີບໍ່ພຽງເປັນຄຳຖາມເທົ່ານັ້ນ ແຕ່ເຮັດໃຫ້ຄົນເຮົາເກີດມີການຄົ້ນຄິດ ສ້າງໃຫ້ສະໝອງມີໄຫວພິບ, ສະຫລຽວສະຫລາດອີກດ້ວຍ. ເມື່ອເວົ້າເຖິງການຕຳໜິຕິຽນຊົນຊັ້ນ, ພາສາວັນນະຄະດີກໍມີການປ່ຽນແປງໄປຕາມຍຸກປະຫວັດສາດດັ່ງນີ້:

- ຜູ້ຮັ່ງບໍ່ໄດ້ເຂົ້າຄຸກ ຜູ້ທຸກບໍ່ໄດ້ເຂົ້າໂຮງໝໍ
- ຜູ້ດີມີເງິນໃຊ້ ຜູ້ຮ້າຍຕາຍຢ່າງໝາ

ລວມຄວາມວ່າ ພາສາວັນນະຄະດີແມ່ນມູນມໍລະດົກອັນລ້ຳຄ່າ ເຊິ່ງປູ່ຍ່າຕາຍາຍເຮົາໄດ້ຖ່າຍທອດຈາກຮຸ່ນຄົນນີ້ໄປສູ່ຮຸ່ນຄົນອື່ນ ຈົນເຖິງພວກເຮົາດຽວນີ້ ບໍ່ມີວັນຈະສູນສົ້ງໄປຈັກເທື່ອ. ເຮົາຄວນປົກປັກຮັກສາ ແລະອະນຸລັກຮັກສາໄວ້ຕະຫລອດການ...ສົມກັບຄຳວ່າ ວັນນະຄະດີເປັນຄັງພາສາແຫ່ງຊາດ.

## 2.5 ວັນນະຄະດີບອກໃຫ້ຮູ້ຄວາມສວຍງາມຮັ່ງມີຂອງເມືອງລາວ

ປະເທດລາວເປັນປະເທດໜຶ່ງທີ່ສວຍງາມຮັ່ງມີທາງດ້ານທິວທັດທຳມະຊາດ, ມີຮູບຮ່າງຄ້າຍຄືດອກບົວບານຮຸ່ງເຮືອງເຫລືອງເຫລື້ອມ, ມີສາຍພູສະລັບຊັບຊ້ອນຕິດຕໍ່ກັນໜໍ່ເນືອງກັນຢ່າງຍາວຢຽດ ແຕ່ເໜືອຕະຫລອດໃຕ້ ເຊິ່ງຮູບພາບດັ່ງກ່າວໄດ້ຖືກພັນລະນາໃນບົດວັນນະຄະດີລາວ ດັ່ງຄຳກອນທີ່ວ່າ

ເມືອງລາວເປັນເຂດບ້ານ ສະຖານຖິ່ນງາມຕາ
ທາງເໜືອມີພູຜາ ໜ່ວຍພະນອມລຽນຊ້ອນ
ຍິນສະອອນດົງໄມ້ ໄພສົນແສນຍ່ານ
ເປັນດັ່ງອຸທິຍານໃຫຍ່ກວ້າງ ຂຽວສະອຸ້ມຊູ່ຍາມ

ນອກຈາກຄວາມສວຍສົດງົດງາມຂອງທຳມະຊາດແລ້ວ ບົດກອນຍັງຊີ້ໃຫ້ເຫັນລະດູການ ແລະ

ດິນຟ້າອາກາດອັນອົບອຸ່ນ ແລະຊຸ່ມເຢັນ, ຍາມເຊົ້າມີໝອກໜາຕຶບກະຈາຍໄປທົ່ວສັນພູ ແລະເປັນພູ ເບິ່ງເປັນໜ້າລະລານຕາ ເຊິ່ງປາກົດອອກຄຳກອນດັ່ງນີ້

ເດືອນຍີ່ສາມສີ່ເຕົ້າ ເອົ້າອຸ່ນລະດູບານ
ແສນສຳປານມາລາ ເບີກເບີຍບານແຍ້ມ
ສີດ່າງແດງດຳແຫ້ມ ເຫລືອງກະຈາຍເຕັມປ່າ
ເໝືອນດັ່ງດາວສ່ອງຟ້າ ປະດາເຫລື້ອມເຮື່ອເຮືອງ

ບົດກອນຍັງຊີ້ໃຫ້ຮູ້ຄວາມສົດຊື່ນ ແລະກິ່ນຫອມຂອງດວງດອກໄມ້ຢູ່ຕາມພູຜາປ່າດົງ ຫ້ວຍຮ່ອງຄອງບຶງ. ເມື່ອຄົນເຮົາສຳພັດລົດອັນທີ່ຫອມຫວນແນວນີ້ ກໍຮູ້ສຶກເບີກບານໃຈ ດັ່ງບົດກອນໄດ້ຂຽນໄວ້ວ່າ

ຍາມເມື່ອລົມປິ່ນເປື້ອງ ພັດຝຸ່ນລະອອງຫອມ
ໄປສູ່ຈອມພູສູງ ກິ່ນກະຈວນຟອງຟື້ງ
ຝູງໝູ່ດົງດອນດ້າວ ຕະການຕາກວ້າງໃຫຍ່
ຫອມກິ່ນດວງດອກໄມ້ ກະຈ່າຍກົ້ວທົ່ວແດນ

ຜ່ານການສຳພັດລົດຊາດຄວາມຫອມຫວນຂອງດວງດອກໄມ້ນານາພັນແລ້ວບົດກອນຍັງຊີ້ບອກໃຫ້ເຫັນທິວທັດທຳມະຊາດເຊັ່ນວ່າ ລະອອງນ້ຳຕົກຕາດ, ມີເຝືອກຸ້ມປົກຄຸມເໝືອນດັ່ງກ້ອນເມກເບິ່ງຄືຊິວລິວໄປທົ່ວພິພົບ.

ຟັງຍິນຫາດງພົ້ງງ ກ້ອງປ່າໄພໜາ ພຸ່ນເຢີ
ນັ້ນແມ່ນອາໄປໂຕນ ຕາດສູງແສນທ້າງ
ຕົກໃສ່ກາງວັງກວ້າງ ເຫວຊັນເປັນຫລັ່ນ
ເຫັນແຕ່ຄວັນມິດກຸ້ມ ຟອງຟົ້ງສົ່ງສຽງ
ຕົກບໍ່ຮູ້ຂາດສັ້ງງ ໄຫລເລັ່ງເປັນສາຍ
ໄຫລກະຈາຍລົງໄປ ສູ່ນະທີທານກວ້າງ
ໄຫລເປັນທາງລຽນລ້ອມ ໂງ່ງໆກ້ຽວກອດ
ລອດປ່ອງນັ້ນປ່ອງນີ້ ເລົາເຂົ້າສູ່ຂອງ

ຄືດັ່ງທີ່ໄດ້ສະເໜີໃຫ້ຮູ້ແລ້ວວ່າ ວັນນະຄະດີໄດ້ຊີ້ບອກໃຫ້ເຫັນຮູບພາບທິວທັດທຳມະຊາດທີ່ສວຍງາມຂອງເມືອງລາວ ເຊິ່ງນອກຈາກພູຜາປ່າໄມ້ ດິນຟ້າອາກາດທີ່ສົດຊື່ນແລ້ວ ກໍຍັງໄດ້ເວົ້າເຖິງຄວາມອຸດົມຮັ່ງມີຂອງສັບພະຍາກອນທາງທຳມະຊາດ ດັ່ງສະແດງອອກໃນບົດກອນ

ນອກຈາກເຂົ້າແລະນ້ຳ ສັດສິ່ງເດຍລະສານ
ຍັງມີຂອງບູຮານ ມິ່ງເມືອງງາມລົ້ນ
ນີ້ແຫລະເພິ່ນວ່ານ້ຳ ເຕັມແຕ່ປູປາ
ເພິ່ນວ່ານາ ເຕັມແຕ່ຮວງເຂົ້າ
ເພິ່ນວ່າພູເຂົາກວ້າງ ຈວງຈັນເປັນປ່າ
ຫີນສິລາຢູ່ນ້ຳ ເປັນແກ້ວຄ່າແພງ

ນອກຈາກຊັບພະຍາກອນທີ່ເປັນພືດພັນ ແລ້ວກໍຍັງມີບັນດາສັດປ່ານານາຊະນິດທີ່ອຸດົມສົມບູນ ເຊິ່ງປາກົດອອກຜ່ານຄຳກອນດັ່ງນີ້

ຢູ່ໃນຂົງເຂດນັ້ນ
ສັດສິ່ງກໍມີຫລາຍ
ມີງົວຄວາຍທັງໝູ
ໝູ່ກະທິງເຍືອງແບ້
ອົ່ແອເຕັ້ນດົງກວ້າງ
ກວາງຟານມ້າມັ່ງ
ກະຕ່າຍແລນລິ້ນລີ້
ໝີໝູ່ລິງເຫງັ້ນ
ຜຶ້ງກະເລັ້ນງູເຫລືອມ
ເຕົ່າກະແຕແມງໄມ້
ໄກໆຟຸ້ນ
ຍຸງຍອງຮ້ອງສິ່ງ
ຄົນປ່າດົງດ່ານໄມ້
ສະເນືອນກ້ອງໄກ່ຂັນ

( ພູມີ ວົງວິຈິດ, ບົດກອນ ເມືອງລາວສວຍງາມຮັ່ງມີ, 1967 )

ສະຫລຸບລວມແລ້ວ ວັດທະນະທຳມີຄວາມສຳຄັນຕໍ່ຊາດ, ເປັນຮາກຖານຂອງຄວາມເປັນຊາດຢ່າງເລິກເຊິ່ງ. ຖ້າຂາດຮາກຖານຄືວັດທະນະທຳລາວ ຊາດຂອງເຮົາກໍອາດຖືກລຶບລ້າງໄປເທື່ອລະນ້ອຍ ຈົນກາຍເປັນຊາດອື່ນໄປ ເພາະບໍ່ມີຫລັກຖານອັນໃດ ໃຫ້ຖືວ່າຕົນມີລັກສະນະອັນແທ້ຈິງແນວໃດ. ປັດຈຸບັນນີ້ ຄວາມເປັນຢູ່ພາຍນອກຂອງມະນຸດໃກ້ຄຽງກັນຫລາຍ ຍ້ອນອຳນາດຂອງວິທະຍາສາດ, ເຕັກໂນໂລຊີ ແລະອິດທິພົນຂອງຂ່າວສານຕ່າງໆ ດັ່ງບັນດາປະເທດທີ່ຢູ່ໃນພາກພື້ນອາຊີອາຄະເນເຊັ່ນ ຈີນ. ຫວຽດນາມ, ກຳປູເຈຍ, ລາວ, ໄທ, ມຽນມາ ເປັນຕົ້ນ. ບັນດາຊາດເຫລົ່ານີ້ມີວິຖີຊີວິດຫລາຍຢ່າງຄ້າຍຄືກັນເວົ້າລວມ, ເວົ້າສະເພາະແມ່ນກຸ່ມຊົນທີ່ໃຊ້ພາສາຕະກຸນໄຕ. ກຸ່ມເຫລົ່ານີ້ມີວັດທະນະທຳ, ມີພາສາຄວາມເວົ້າ, ມີຮີດຄອງປະເພນີ ເກືອບແມ່ນອັນດຽວກັນ ບໍ່ຕ້ອງເວົ້າຊີວິດການເປັນຢູ່ພາຍນອກຄື ເຄື່ອງນຸ່ງຫົ່ມຢູ່ກິນ ຕົວຢ່າງຄື ຊາດລາວ ແລະຊາດໄທ ສອງຊົນຊາດນີ້ ທຸກສິ່ງທຸກຢ່າງຄືກັນຈົນເກືອບແຍກບໍ່ໄດ້, ສິ່ງທີ່ເຫັນວ່າມັນຕ່າງກັນແທ້ ກໍມີແຕ່ວັດທະນະທຳເທົ່ານັ້ນ. ໃນວັດທະນະທຳຂອງສອງຊາດນີ້ ຖ້າວັດທະນະທຳຂອງຊາດໃດຈະເລີນກວ່າ, ມີອິດທິພົນສູງກວ່າ ວັດທະນະທຳຂອງຊາດນັ້ນກໍຈະໄດ້ປຽບ ອາດຈະກືນເອົາຊາດທີ່ມີສິ່ງອື່ນໆທີ່ຄືກັນຢູ່ແລ້ວນັ້ນໃຫ້ເປັນຊາດຂອງຕົນໄປງ່າຍໆ ເພາະຊາດທີ່ຖືກກືນນັ້ນລືມວັດທະນະທຳຂອງຕົນ ຫລົງໄຫລໄປນຳວັດທະນະທຳຂອງຊາດອື່ນ; ເພາະສະນັ້ນ, ເພື່ອໃຫ້ຊາດຂອງເຮົາໝັ້ນຄົງດຳລົງຢູ່ຕະຫລອດໄປ, ວັດທະນະທຳຈຶ່ງເປັນສິ່ງທີ່ ຄວນຟື້ນຟູ, ບຳລຸງຮັກສາ ແລະສົ່ງເສີມໂດຍແທ້.

□□□□□□□□□

# ບົດທີ 3

## ການປົກປັກຮັກສາ ແລະເສີມຂະຫຍາຍມູນເຊື້ອວັນນະຄະດີ

### 1. ສະພາບການປົກປັກຮັກສາ ແລະຄົ້ນຄວ້າວັນນະຄະດີລາວໂດຍທົ່ວໄປ

ການປົກປັກຮັກສາ ແລະການນຳໃຊ້ວັນນະຄະດີລາວຢູ່ສ.ປ.ປ.ລາວ, ຖ້າພວກເຮົາເບິ່ງໃນແງ່ການສົ່ງທອດ, ໂດຍຜ່ານການສືບທອດດ້ວຍປາກເປົ່າຈາກຄົນຮຸ່ນນີ້ໄປຫາຄົນຮຸ່ນຕໍ່ງມາ ຈົນເຖິງປັດຈຸບັນ ພວກເຮົາເຫັນວ່າສາມາດສືບທອດ ແລະປົກປັກຮັກສາໄດ້ດີພໍສົມຄວນ. ພວກເຮົາສັງເກດເຫັນວ່າມໍລະດົກສ່ວນນີ້ ໄດ້ຕິດແນບສະໜິດກັບຊີວິດຂອງຄົນລາວຕະຫລອດມາ. ບົດວັນນະຄະດີຫລາຍບົດໄດ້ກາຍເປັນຮີດຄອງປະເພນີ, ຫລາຍບົດໄດ້ກາຍເປັນກອນຂັບ, ກອນລຳ ແລະກອນເຊີ້ງທີ່ປະກອບການຟ້ອນທຳນອງເສບ ທີ່ມ່ວນເສາະໃສ ເຊິ່ງປະຊາຊົນໄດ້ໃຊ້ຂັບໃຊ້ລຳຕາມທ້ອງຖິ່ນດິນລາວ ແຕ່ເໜືອເຖິງໃຕ້ ( ແຕ່ຍອດອູເຖິງຫລີ່ຜີ ). ຫລາຍບົດໄດ້ກາຍເປັນຄຳສອນ, ເປັນຄຸນສົມບັດ, ເປັນມາດຕະຖານທີ່ປູ່ຍ່າຕາຍາຍໄດ້ນຳມາສຶກສາອົບຮົມສັ່ງສອນລູກຫລານໃຫ້ມີຄຸນທາດອັນດີ, ມີນິໄສກວ້າງຂວາງ ຮູ້ຈັກຮັກແພງຊ່ວຍເຫລືອເຊິ່ງກັນ ແລະກັນ, ມີຄວາມຊື່ສັດ, ຮັກຄວາມເປັນທຳຈົນໄດ້ຮັບການສັນລະເສີນຈາກແຂກຄົນທີ່ມາຢ້ຽມຢາມວ່າ " ຄົນລາວເປັນຄົນທີ່ສຸພາບອ່ອນຫວານ, ມີຄວາມຊື່ສັດ, ມີວັດທະນະທຳດີ ". ນັ້ນກໍຍ້ອນວ່າແຕ່ໃດມາ ຄົນຊາດລາວເປັນຄົນທີ່ນິຍົມຊົມຊອບໃນວັນນະຄະດີ.

ຖ້າເບິ່ງໃນແງ່ວິຊາການ ພວກເຮົາຈະພົບວ່າ ການປົກປັກຮັກສາ ການເກັບກຳຄົ້ນຄວ້າວິໄຈ ແລະນຳໃຊ້ວັນນະຄະດີເຂົ້າໃນການສ້າງສາພັດທະນາຊັບພະຍາກອນມະນຸດ ເພື່ອການພັດທະນາຊາດ ແມ່ນບໍ່ທັນໄດ້ຮັບການເອົາໃຈໃສ່ເທົ່າທີ່ຄວນ. ຄວາມຈິງ, ການຄົ້ນຄວ້າວັນນະຄະດີຢູ່ໃນປະເທດລາວຂອງພວກເຮົາກໍເລີ່ມມີຂຶ້ນແຕ່ຊຸມປີ 40 ຂອງສະຕະວັດທີ 19 ເປັນຕົ້ນມາ, ແຕ່ບໍ່ໄດ້ຮັບການຊຸກຍູ້ສົ່ງເສີມ, ຍ້ອນແນວທາງນະໂຍບາຍການສຶກສາແບບລ່າເມືອງຂຶ້ນຝຣັ່ງ ແລະຍ້ອນສົງຄາມທຳລາຍຢ່າງໜັກໜ່ວງ. ນັກຄົ້ນຄວ້າວັນນະຄະດີລາວຜູ້ມີຈິດໃຈຮັກຊາດກໍໄດ້ອົດທົນສູ້ຊົນຊອກຫາທິດທາງ ເພື່ອເຜີຍແຜ່ວັນນະຄະດີລາວ ເຊິ່ງສະແດງບ່ອນວ່າ, ໃນປີ 1941 ໄດ້ປາກົດມີໜັງສືສະບັບທຳອິດໃນປະເທດລາວ ໃສ່ຊື່ວ່າ " ລາວໃຫຍ່ " , ແຕ່ລາວໃຫຍ່ ກໍຫາຍຕົວໄປຢ່າງໄວວາ; ຈົນເຖິງປີ 1951 ຈຶ່ງສາມາດອອກວາລະສານລາຍເດືອນສະບັບທຳອິດຂອງລາວຊື່ວ່າ " ວັນນະຄະດີສານ ". ວັນນະຄະດີສານອອກໄດ້ພຽງ 9 ສະບັບກໍຫາຍຕົວໄປ, ທັງໝົດນັ້ນ ແມ່ນຍ້ອນເຈດຈຳນົງຂອງພວກລ່າເມືອງຂຶ້ນ, ເຂົາອ້າງວ່າວັນນະຄະດີລາວເປັນຂອງເກົ່າ, ຫລ້າຫລັງ ມັນບໍ່ຈະເລີນ ບໍ່ກ້າວໜ້າ ຫ້າມເກັບກຳຄົ້ນຄວ້າກ່ຽວກັບວັນນະຄະດີລາວ[1].

ເຖິງຈະກີດໜ່ວງກົ້ນຫ້າມດ້ວຍວິທີການສ້າງໂຮງຮຽນຂອງລັດທີ່ເປັນທາງການຂຶ້ນ ໂດຍນຳເອົາພາສາຝຣັ່ງເຂົ້າມານຳໃຊ້ໃນການສຶກສາຮ່ຳຮຽນທຸກຊັ້ນຮຽນ ແຕ່ນັກຄົ້ນຄວ້າລາວຫລາຍທ່ານກໍບໍ່ໄດ້ລົດລະໃນການຟື້ນຟູຕົວໜັງສືລາວ ແລະວັນນະຄະດີລາວ ຈຶ່ງໄດ້ຫັນທິດເອົາພາສາລາວ ແລະວັນນະຄະດີລາວ

---

[1] ມະຫາ ບົວລີ ປະພາພັນ, ບົດແລະເງື່ອນໄຂການເສບຊົມບົດໜຶ່ງ ໃນບັນຫາການສ້າງຄວາມສະຫງວນນັກ ແລະສັບສານ, ເອກະສານກອງປະຊຸມສຳມະນາ " ມໍລະດົກວັນນະຄະດີລາວ " ຄັ້ງວັນທີ 8-10/1/2000

ເຂົ້າພັດທະນາໃນໂຮງຮຽນສົງ. ໂຮງຮຽນສົງຈຶ່ງໄດ້ດຳເນີນການສິດສອນ ແລະພັດທະນາໄຕຂື້ນ; ດັ່ງນັ້ນ, ວັດຈັນ ຈຶ່ງໄດ້ກາຍເປັນສູນສຶກສາລວມຂອງທາງການລາວໄປໃນໂຕ ໂດຍແມ່ນຍາພໍ່ມະຫາແກ້ວເປັນກົກ, ຕໍ່ມາກໍແມ່ນຍາພໍ່ມະຫາສີລາ ວີລະວົງ ແລະຜູ້ອື່ນໆອີກ. ເມື່ອຫໍສະໝຸດສະພາຈັນທະບູລີໄດ້ຮັບການສ້າງຕັ້ງຂື້ນ ມັນໄດ້ໄຂສັງກາດໃຫ້ການສຶກສາລາວມີຄວາມຫວັງໃໝ່, ກາຍເປັນໜໍ່ແໜງໃຫ້ແກ່ການສຶກສາກ່ຽວກັບຄະດີສຶກສາ, ແບບຮຽນພາສາລາວໄດ້ຮັບການຮຽບຮຽງປັບປຸງ, ໜັງສືສຳຄັນໆໄດ້ຮັບການເອົາໃຈໃສ່. ກອງວັນນະຄະດີ, ກຳມະການວັນນະຄະດີ ລາຊະບັນດິດສະພາລາວໄດ້ອອກ ວາລະສານ, ໄດ້ຊຳຮະໜັງສືອັນເປັນພື້ນຖານ, ຖ່າຍທອດເປັນອັກສອນສະໄໝໃໝ່ເຜີຍແຜ່ໃຫ້ມວນຊົນໄດ້ສຳຜັດ[2] ເຊັ່ນ ເລື່ອງສິນໄຊ, ຊຽງໝ້ຽງ, ສຽວສະຫວາດ, ທ້າວຮຸ່ງທ້າວເຈືອງ, ຄຳສຸພາສິດບູຮານລາວ, ແບບແຕ່ງໄຫວ້ງຈັນ, ຄຳສູ່ຂວັນ, ພະເວດສັນດອນ ແລະເລື່ອງອື່ນໆ. ບັນດາໜັງສືຕ່າງໆທີ່ກ່າວມານັ້ນໄດ້ກາຍເປັນເອກະສານສຳຄັນໃນການຄົ້ນຄວ້າ, ສຶກສາຮຳຮຽນໃນປັດຈຸບັນ.

ໃນໄລຍະປະເທດຊາດເກີດມີການຜັນແຍກອອກເປັນສອງກຸ່ມການເມືອງໃນການກອບກູ້ເອກະລາດແຫ່ງຊາດ ແຕ່ລະຝ່າຍກໍໄດ້ເອົາໃຈໃສ່ວຽກງານດ້ານນີ້. ພໍແຕ່ມະຫາວິທະຍາໄລຂອງສອງຝ່າຍກຳເນີດຂື້ນ, ທັງສອງຝ່າຍກໍມີຈຸດເລັ່ງດຽວກັນຄື ສຶກສາໜັງສືລາວ, ແຕ່ຕ່າງກັນໃນດ້ານທັດສະນະ. ມະຫາວິທະຍາໄລສີສະຫວ່າງວົງໜັກໄປທາງການສຶກສາຕາມມູນເຊື້ອ, ເອົາໃຈໃສ່ສຶກສາສັບ, ຈາຮີດປະເພນີ, ວາດດຳລົງຊີວິດທີ່ສະແດງອອກໃນບົດ ແລະສ່ວນໜຶ່ງຂອງນາມສັນຍາລັກ, ພ້ອມທັງການຈັດປະເພດໃນວົງກວ້າງ[3]. ສ່ວນມະຫາວິທະຍາໄລໃນເຂດປົດປ່ອຍ[4] ພັດເລັ່ງສຶກສາເນື້ອໃນການສ່ອງແສງ ແລະສຶກສາບົດບາດອິດທິພົນ ແລະຕີລາຄາຜົນສະທ້ອນຂອງບົດວັນນະຄະດີຕໍ່ສັງຄົມ. ພ້ອມກັນນັ້ນກໍຍັງໄດ້ຈັດວັນນະຄະດີອອກເປັນພາກໄປຕາມແຕ່ລະຍຸກສະໄໝສັງຄົມຄື ວັນນະຄະດີພື້ນເມືອງ, ວັນນະຄະດີລ້ານຊ້າງ ແລະວັນນະຄະດີປັດຈຸບັນ ເພື່ອສະດວກໃຫ້ແກ່ການສຶກສາເຖິງທາດແທ້ຂອງບົດ. ພ້ອມກັນນັ້ນໃນປີ 1973 ຢູ່ຕາມໂຮງຮຽນສ້າງຄູຕ່າງໆ ກໍໄດ້ມີຂະບວນການເກັບກຳວັນະຄະດີພື້ນເມືອງຕາມບ້ານປະຊາຊົນ. ເສຍດາຍແຕ່ວ່າ ບັນດາບົດເລື່ອງດັ່ງກ່າວບໍ່ໄດ້ພິມເຜີຍແຜ່ ແຕ່ກໍມີຫລາຍບົດຖືກເລືອກເຟັ້ນມາເປັນຂໍ້ມູນຮັບໃຊ້ການສິດສອນ ແລະ ຮຳຮຽນຢູ່ຕາມໂຮງຮຽນຕ່າງໆໃນປັດຈຸບັນ.

ການສະຖາປະໜາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວັນທີ 2 ທັນວາ 1975 ໄດ້ເປີດສັງກາດໃໝ່ໃຫ້ແກ່ການຄົ້ນຄວ້າວັນນະຄະດີລາວ. ຢູ່ຕາມໜັງສືພິມຕ່າງໆເຊັ່ນ ໜັງສືພິມປະຊາຊົນ, ວັນນະສິນ, ສຶກສາໃໝ່, ໜຸ່ມລາວ ແລະໜັງສືພິມອື່ນໆ ກໍປາກົດມີວັນນະຄະດີລາວ ໂດຍສະເພາະແມ່ນວັນນະຄະດີພື້ນເມືອງລາວ ແລະບົດວິຈານວັນນະຄະດີຈຳນວນໜຶ່ງ.

---

2 ຫລັກສູດພາສາລາວ-ວັນນະຄະດີ, ພະແນກອາຈານລາວ, ສະຖາບັນອຸດົມສຶກສາວິຊາຄູ, ມະຫາວິທະຍາໄລສີສະຫວ່າງວົງ.

3 ຫລັກສູດພາສາລາວ-ວັນນະຄະດີ, ພະແນກອາຈານລາວ, ສະຖາບັນອຸດົມສຶກສາ, ມະຫາວິທະຍາໄລສີສະຫວ່າງວົງ.

4 ຫລັກສູດວັນນະຄະດີລາວ, ພະແນກວັນນະຄະດີ-ພາສາຣັດເຊຍ, ມະຫາວິທະຍາໄລສ້າງຄູວຽງໄຊ.

ໃນປີ 1987 ກະຊວງຖະແຫລ່ງຂ່າວ ແລະວັດທະນະທຳ ກໍປະກາດກວດສອບນິທານພື້ນເມືອງລາວ ແລະພິມປຶ້ມນິທານພື້ນເມືອງລາວ 2 ເຫລັ້ມອອກສູ່ສາຍຕາມະຫາຊົນ ແລະປຶ້ມນິທານນັ້ນກໍເປັນເອກະສານສຳຄັນໃນການຄົ້ນຄວ້າຮຳຮຽນວິຊາວັນນະຄະດີພື້ນເມືອງ ຢູ່ມະຫາວິທະຍາໄລແຫ່ງຊາດ. ພ້ອມນີ້ຢູ່ໃນໄລຍະປີ 1992-2002 ນີ້ກໍໄດ້ມີການສຳຫລວດເກັບກຳຮັບໂຮມໃບລານແລ້ວ 17 ແຂວງທົ່ວປະເທດ ຕາມແນວທາງຂອງໂຄງການຮັກສາໃບລານລາວ. ນີ້ເປັນບາດກ້າວທີ່ສຳຄັນທີ່ສຸດຕໍ່ການເລີ່ມຕົ້ນເຂົ້າໃນການຄົ້ນຄວ້າ ວິໄຈໃນຂັ້ນຕໍ່ໄປ.

ຢູ່ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມຂອງກະຊວງສຶກສາ ກໍໄດ້ມີການສຶກສາຄົ້ນຄວ້າວັນນະຄະດີລາວ ເຊິ່ງໄດ້ຮວບຮວມວັນນະຄະດີລາວໃນແຕ່ລະໄລຍະຄື ວັນນະຄະດີພື້ນເມືອງ, ວັນນະຄະດີລ້ານຊ້າງ ແລະວັນນະຄະດີປັດຈຸບັນ ມານຳສະເໜີຢ່າງເປັນລະບົບສົມຄວນ ແລະໄດ້ຈັດພິມເຜີຍແຜ່ໃນປີ 1987, ປຶ້ມເຫລັ້ມນີ້ເປັນເອກະສານສຳຄັນ ແລະເປັນພື້ນຖານໃຫ້ແກ່ການຄົ້ນຄວ້າວິໄຈວັນນະຄະດີໃນຂັ້ນຕໍ່ມາ.

## 2. ການປົກປັກຮັກສາ ແລະຄົ້ນຄວ້າວັນນະຄະດີຢູ່ສະຖາບັນການສຶກສາຕ່າງໆ.

### 2.1. ການຄົ້ນຄວ້າວິໄຈວັນນະຄະດີຢູ່ມະຫາວິທະຍາໄລສ້າງຄູວຽງຈັນ

ພະແນກວັນນະຄະດີ-ພາສາສາດໃນມະຫາວິທະຍາໄລສ້າງຄູວຽງຈັນ ເປັນໜ່ວຍງານໜຶ່ງທີ່ມີໜ້າທີ່ຮັບຜິດຊອບສານຕໍ່ວຽກງານພາສາລາວ ແລະວັນນະຄະດີລາວ. ໜ່ວຍງານດັ່ງກ່າວຖືກສ້າງຕັ້ງຂຶ້ນໃນປີ 1977 ເຊິ່ງໄດ້ມາຈາກການປະສົມລະຫວ່າງພະແນກອັກສອນສາດລາວ, ໂຮງຮຽນສ້າງຄູດົງໂດກວຽງຈັນ ກັບພະແນກວັນນະຄະດີ-ພາສາຣັດເຊຍ, ມະຫາວິທະຍາໄລສ້າງຄູນາຄາຍ. ພະແນກດັ່ງກ່າວນີ້ພວກເຮົາໄດ້ ປະຕິບັດຕາມເປົ້າໝາຍຫລັກຂອງມະຫາວິທະຍາໄລສ້າງຄູຄືສ້າງຄົນໃຫ້ມີຄວາມສາມາດເປັນຄູສອນຢູ່ຕາມໂຮງຮຽນຊຸມຊົນຕ່າງໆໃນທົ່ວປະເທດ.

ຈາກເປົ້າໝາຍການສ້າງຂອງມະຫາວິທະຍາໄລດັ່ງກ່າວນັ້ນ ພວກເຮົາຈຶ່ງກຳນົດໂຄງການຫລັກສູດໃນການສອນວັນນະຄະດີອອກເປັນ 3 ວິຊາຫລັກຄື

ກ. ວິຊາທິດສະດີວັນນະຄະດີ

ວິຊານີ້ເປົ້າໝາຍຫລັກແມ່ນແນໃສ່ໃຫ້ນັກສຶກສາມີຄວາມສາມາດໃນການວິພາກ, ວິເຄາະ ແລະວິຈານບົດວັນນະຄະດີ. ຫລັກທິດສະດີສຳຄັນທີ່ນຳມາເຂົ້າມາສຶກສາຄືຫລັກທິດສະດີມາກຊິດ.

ຂ. ວິຊາວັນນະຄະດີລາວ

ວິຊານີ້ມີເປົ້າໝາຍຫລັກແມ່ນແນໃສ່ໃຫ້ນັກສຶກສາຮູ້ປະເພດ ຫລື ຊະນິດຕ່າງໆຂອງວັນນະຄະດີລາວ ດັ່ງນັ້ນ, ການສິດສອນວິຊານີ້ ຈຶ່ງເນັ້ນໄປໃນທາງນຳສະເໜີປະຫວັດວັນນະຄະດີລາວແຕ່ລະປະເພດຫລາຍກວ່າການຄົ້ນຄວ້າວິໄຈບົດ.

ຄ. ວິຊາວັນນະຄະດີຕ່າງປະເທດ.

ວິຊານີ້ໄດ້ຮຽນລົງເລິກວັນນະຄະດີຈີນ, ວັນນະຄະດີຫວຽດນາມ ແລະວັນນະຄະດີຕາເວັນຕົກ. ເປົ້າໝາຍຫລັກກໍແນໃສ່ໃຫ້ນັກສຶກສາໄດ້ສໍາຜັດກັບບົດວັນນະຄະດີທີ່ມີຊື່ສຽງຂອງໂລກ ແລະ ເຂົ້າໃຈປະຫວັດວັນນະຄະດີປະເພດດັ່ງກ່າວ.

ສະຫລຸບຄວາມແລ້ວ, ການຮຽນການສອນວິຊາວັນນະຄະດີຂອງພວກເຮົາໃນໄລຍະນີ້ແມ່ນເລັ່ງໃສ່ສິດສອນໃຫ້ຮູ້ວັນນະຄະດີ ແລະເຂົ້າໃຈວັນນະຄະດີ ບໍ່ທັນໄດ້ເລັ່ງໃສ່ການຄົ້ນຄວ້າວັນນະຄະດີ. ຫລັງຈາກຮຽນໝົດຫລັກສູດແລ້ວກໍກວດກາສອບເສັງທໍາມະດາ ບໍ່ໄດ້ຂຽນບົດລາຍງານ ຫລືບົດວິໄຈກ່ຽວກັບວັນນະຄະດີ. ສໍາລັບການຄົ້ນຄວ້າຂອງຄູອາຈານຜູ້ສິດສອນໃນໄລຍະນີ້ ສ່ວນຫລາຍກໍເປັນການເກັບກໍາຮວບຮວມບັນດາບົດເລື່ອງຕ່າງໆ ແລ້ວມາຈໍາແນກຕາມເນື້ອໃນຂອງບົດເລື່ອງ ແລະດໍາເນີນການອະທິບາຍ ແລະໄຈ້ແຍກບາງບົດວັນນະຄະດີ ເພື່ອຮັບໃຊ້ການຮຽນການສອນເທົ່ານັ້ນ.

## 2.2. ການຄົ້ນຄວ້າວິໄຈວັນນະຄະດີໃນມະຫາວິທະຍາໄລແຫ່ງຊາດ.

ພາກວິຊາພາສາລາວ-ວັນນະຄະດີ, ມະຫາວິທະຍາໄລແຫ່ງຊາດ ເຊິ່ງເປັນໜ່ວຍງານທີ່ໄດ້ຮັບການມອບໝາຍໃນການສານຕໍ່ວຽກງານດ້ານການສິດສອນດ້ານພາສາລາວ-ວັນນະຄະດີ ຈາກພະແນກວັນນະຄະດີ-ພາສາສາດ ມະຫາວິທະຍາໄລສ້າງຄູ. ນັບແຕ່ໄລຍະກໍ່ສ້າງມະຫາວິທະຍາໄລແຫ່ງຊາດ, ພາກວິຊານີ້ໄດ້ກຽມສ້າງພື້ນຖານ ເພື່ອການຫັນທິດຈາກການເຮັດໜ້າທີ່ພຽງແຕ່ກໍ່ສ້າງຄູມາເປັນການສ້າງບັນດິດທົ່ວໄປ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນສັງຄົມ ໂດຍສະເພາະເນັ້ນການສຶກສາຄົ້ນຄວ້າວັນນະຄະດີ.

ພາກວິຊາພາສາລາວ-ວັນນະຄະດີເລີ່ມສ້າງບຸກຄະລາກອນຕາມເປົ້າໝາຍຫລັກ ຂອງ ມະຫາວິທະຍາໄລແຫ່ງຊາດ ຈຶ່ງເຮັດໃຫ້ນັກສຶກສາຫັນມາສົນໃຈ ແລະຄົ້ນຄວ້າວັນນະຄະດີ. ແຕ່ລະສົກຮຽນມີນັກສຶກສາຫລາຍຄົນໃນພາກວິຊານີ້ໄດ້ຝາກຜົນງານການຄົ້ນຄວ້າເບື້ອງຕົ້ນ ໃນຮູບແບບບົດລາຍງານຈົບຊັ້ນລະດັບປະລິນຍາຕີໄວ້ໃຫ້ສຶກສາຄົ້ນຄວ້າຕໍ່ໃນລະດັບເລິກຫລາຍບົດເຊັ່ນ

1) ທ້າວ ໄຊຊົ້ງ ເບັ່ງຊະຢູ " ຮູບພາບຕົວລະຄອນນົ້ງໃນວັນນະຄະດີສະໄໝປັດຈຸບັນ ".

2) ນາງພຸດທະສອນ ໄຊຍະທອນຈັນ " ຄວາມໝາຍ ແລະສິລະປະຂອງສຸພາສິດແບບສອງວັກໃນບົດເລື່ອງສຽວສະຫວາດ ".

3) ນາງໄຕຄໍາ ຄູ່ມວິໄລ " ຮູບພາບຕົວລະຄອນແມ່ຍິງໃນວັນນະຄະດີປັດຈຸບັນ ".

4) ທອງດີ ອິນທະວົງ ພ້ອມຄະນະ " ອຸດົມຄະຕິຂອງນັກຮົບສາມສະຫາຍໃນເລື່ອງຟອງແມ່ນໍ້າຂອງ ".

5) ທ້າວ ສັງຄົມໄຊ " ເນື້ອໃນຄວາມໝາຍຂອງຄໍາຜະຫຍາຍ່ອຍ ໃນປຶ້ມກອນຜະຫຍາຍ່ອຍຂອງມະຫາບຸນຍົກ ແສນສູນທອນ ".

6) ທ້າວ ບຸນແຖ ທະວົງສັກ " ສິລະປະການປະດິດແຕ່ງກອນ 7 ໃນບົດວັນນະຄະດີລາວ ".

7) ສີສະອາດ ຂັນທະວົງ ພ້ອມຄະນະ " ຮູບພາບຄວາມຮັກລະຫວ່າງຜົວເມຍທີ່ສະແດງອອກຜ່ານບົດເລື່ອງສັງສິນໄຊ ".

8) ນາງແສງພະຈັນ ໄຊຍະພອນ ພ້ອມຄະນະ " ສິລະປະການແຕ່ງຂອງນັກປະພັນຜ່ານບົດວັນນະຄະດີລາວ ".

9) ວຽງສະຫວັນ ຈັນທະວົງ ແລະທ້າວ ສຸລິດາ ຈັນທາທອນ "ຮູບພາບຕົວລະຄອນເດັກນ້ອຍຜ່ານບົດເລື່ອງສະໄໝປັດຈຸບັນ ".

10) ນາງ ບົວວັນ ສຸຂະທຳມະວົງ ພ້ອມຄະນະ " ສຸພາສິດແບບສີ່ວັກທີ່ເວົ້າເຖິງຄຸນສົມບັດ ".

ການສົນໃຈຄົ້ນຄວ້າສຶກສາວັນນະຄະດີ ຂອງນັກສຶກສາພາກວິຊາພາສາລາວ-ວັນນະຄະດີໃນມະຫາວິທະຍາໄລແຫ່ງຊາດດັ່ງກ່າວມານັ້ນ ເຖິງແມ່ນຈະໜ້ອຍກໍຕາມ ແຕ່ເປັນບາດກ້າວອັນສຳຄັນທີ່ສຸດສຳລັບການຄົ້ນຄວ້າສຶກສາວັນນະຄະດີໃນໝູ່ນັກສຶກສາ, ມັນເປັນການເປີດເສັ້ນທາງໃຫ້ແກ່ການຄົ້ນຄວ້າແລະການປົກປັກຮັກສາວັນນະຄະດີຂອງນັກສຶກສາໃນຂັ້ນຕໍ່ໄປ.

ໃນສ່ວນຂອງອາຈານ, ເລີ່ມເຂົ້າສູ່ມະຫາວິທະຍາໄລແຕ່ປີ 1996 ມາ, ຄູອາຈານໃນພາກວິຊາພາສາລາວ-ວັນນະຄະດີກໍເລີ່ມເຂົ້າສູ່ການຄົ້ນຄວ້າ ໂດຍໄດ້ເປີດກອງປະຊຸມສຳມະນາກ່ຽວກັບວັນນະຄະດີລາວຄັ້ງທຳອິດແມ່ນກອງປະຊຸມສຳມະນາກ່ຽວກັບ " ໄລຍະການກຳເນີດ, ຂະຫຍາຍຕົວ ແລະຂອບເຂດຂອງວັນນະຄະດີພື້ນເມືອງ ແລະວັນນະຄະດີລ້ານຊ້າງຂອງລາວ ". ຈາກນັ້ນມາພວກເຮົາກໍໄດ້ຮັບທຶນການຄົ້ນຄວ້າວັນນະຄະດີຈາກກອງທຶນໂຕໂຢຕາ ແລະໄດ້ຮັບການຊີ້ນຳຈາກທ່ານ ສາດສະດາຈານ ດຣ. ຮາຣັນ ຮຸນດິອຸດ ແລະສາດສະດາຈານ ດຣ. ໄຟນເກີ ກຣາບອສກີ ຈາກປະເທດເຢຍລະມັນ, ພວກເຮົາໄດ້ນຳເອົາສານບົດເລື່ອງທີ່ສຳຄັນເຊັ່ນ ກາບເມືອງພວນ, ສານລຶບພະສູນ ແລະພື້ນວຽງ ຂຶ້ນມາສຶກສາຄົ້ນຄວ້າ ໂດຍອີງໃສ່ທິດສະດີມາກຊິດລົມທົບກັບທິດສະດີຊຳລະບົດຂອງພອນມາດ ( Paul Maas ) ເພື່ອມາກ່າຍຖອດອັກສອນ ຈາກຕົ້ນສະບັບອອກມາເປັນໂຕອັກສອນລາວສະໄໝປັດຈຸບັນ ແລ້ວພິມເຜີຍແຜ່. ເຖິງວ່າການສຶກສາຄົ້ນຄວ້າບົດເລື່ອງເຫລົ່ານັ້ນບໍ່ທັນລະອຽດ ແລະເລິກເຊິ່ງກໍຕາມ ແຕ່ມັນກໍມີປະໂຫຍດບໍ່ໜ້ອຍຕໍ່ກັບການຄົ້ນຄວ້າໃນຂັ້ນຕໍ່ໄປ.

ນອກຈາກການສຶກສາຄົ້ນຄວ້າວັນນະຄະດີທີ່ກ່າວນັ້ນແລ້ວ, ຍັງມີອາຈານໃນພາກວິຊາພາສາລາວ-ວັນນະຄະດີໄດ້ມີໂອກາດໄປສຶກສາຕໍ່ລະດັບປະລິນຍາໂທ ກໍໄດ້ມີໂອກາດຍົກເອົາວັນນະຄະດີລາວໄປສຶກສາເຊັ່ນ ດຣ.ໄຊຍະສານ ສຸຄັນທະຄະຕີ ກໍໄດ້ສຶກສາຄົ້ນຄວ້າວັນນະຄະດີລາວພາຍໃຕ້ຫົວຂໍ້ທີ່ວ່າ "ມູນເຊື້ອ ແລະການປ່ຽນແປງໃໝ່ໃນວັນນະຄະດີປັດຈຸບັນຂອງລາວ ". ອາຈານ ບົວພອນ ມະໄລຄຳ ກໍສຶກສາປຽບທຽບຄຳສອນຜູ້ຍິງລາວກັບຄຳສອນຜູ້ຍິງໄທ. ອາຈານເຮືອງແສງ ສຸລຽນທຳ ກໍໄດ້ດຳເນີນການຄົ້ນຄວ້າກ່ຽວກັບ " ຮູບພາບຊາວຊົນນະບົດໃນວັນນະຄະດີຫວຽດນາມແຕ່ປີ 1930 -1945 " ແລະທ່ານອື່ນໆ.

ຂະບວນການຄົ້ນຄວ້າໃນໄລຍະ 10 ປີ ແຫ່ງການກໍ່ສ້າງມະຫາວິທະຍາໄລແຫ່ງຊາດ ຄື ແຕ່ສົກຮຽນ 1995-1996 ເຖິງປັດຈຸບັນເປັນບາດກ້າວໃໝ່ທີ່ສຳຄັນ ແລະມັນເປັນບົດຮຽນພື້ນຖານໃຫ້ແກ່ການປັບຕົວເຂົ້າສູ່ເສັ້ນທາງການຄົ້ນຄວ້າ ແລະປົກປັກຮັກສາວັນນະຄະດີໃນອະນາຄົດ.

## 2.3. ການສຶກສາຮໍ່າຮຽນວິຊາພາສາລາວ-ວັນນະຄະດີຕາມໂຮງຮຽນຕ່າງໆ.

ຕາມໂຮງຮຽນສາມັນສຶກສາ ແລະໂຮງຮຽນສ້າງຄູແຫ່ງຕ່າງໆໃນທົ່ວປະເທດ, ກະຊວງສຶກສາໄດ້ກໍານົດໃຫ້ໂຮງຮຽນເຫລົ່ານັ້ນໃຫ້ຖືເອົາວິຊາພາສາລາວ-ວັນນະຄະດີເປັນວິຊາຫລັກ. ນັກສຶກສາແຕ່ລະຄົນຕ້ອງໄດ້ຜ່ານລາຍວິຊາດັ່ງກ່າວຈຶ່ງຈະຈົບຊັ້ນໃນແຕ່ລະຫ້ອງໄດ້. ແຕ່ຜົນຂອງການຮຽນວິຊານີ້ພົບວ່າ ນັກສຶກສາສ່ວນຫລາຍບໍ່ມັກສົນໃຈ ແລະບໍ່ມັກຮຽນ; ດັ່ງນັ້ນ, ຈຶ່ງເຮັດໃຫ້ລະດັບການຮຽນວິຊານີ້ບໍ່ຄ່ອຍຈະໄດ້ດີເທົ່າທີ່ຄວນ. ພື້ນຖານວິຊານີ້ບໍ່ດີຈຶ່ງມີຜົນກະທົບຕໍ່ການຮຽນໃນລະດັບມະຫາວິທະຍາໄລ. ເມື່ອຈົບລະດັບມະຫາວິທະຍາໄລແລ້ວ ກໍບໍ່ທັນມີຄວາມສາມາດສະໜອງຕໍ່ຄວາມຮຽກຮ້ອງຕ້ອງການຂອງສັງຄົມໄດ້ດີເທົ່າທີ່ຄວນ.

## 3. ການປົກປັກຮັກສາ ( ການຄົ້ນຄວ້າ ) ແລະຂຽນວັນນະຄະດີລາວສ່ວນບຸກຄົນ.

### 3.1. ການປົກປັກຮັກສາ ແລະຄົ້ນຄວ້າວັນນະຄະດີສ່ວນບຸກຄົນ.

ໃນສ່ວນບຸກຄົນ ເຖິງແມ່ນວ່າຈະເຫັນມີໜ້ອຍ, ແຕ່ປາກົດວ່າ ພວກເພິ່ນໄດ້ອຸທິດເຫື່ອແຮງດ້ວຍຄວາມອຸດສາຫະໃນດ້ານນີ້ຢ່າງໜ້າສັນລະເສີນ. ພວກເຮົາມີໜັງສືລາວເປັນຂອງລາວ ໄດ້ອ່ານໄດ້ສຶກສາຢູ່ ໃນເວລານີ້ ກໍເກີດຈາກບຸນຄຸນອັນປະເສີດຂອງບັນດາທ່ານເຫລົ່ານີ້.

1) ສະເດັດເຈົ້າມະຫາ ອຸປະຮາດ ເພັດຊະລາດ ທ່ານເປັນຜູ້ທີ່ມີສາຍຕາເບິ່ງກວ້າງເຫັນໄກຈຶ່ງໄດ້ສູ້ຊົນໃຫ້ເກີດມີຫໍສະໝຸດຈັນທະບູລີຂຶ້ນ ເຊິ່ງເປັນບ່ອນຟື້ນຊີບພາສາລາວ ແລະວັນນະຄະດີລາວຂຶ້ນມາ. ບັນດາບົດວັນນະຄະດີທີ່ສໍາຄັນຂອງຊາດກໍໄດ້ຮັບການຮຽບຮຽງ ແລະຈັດກ່າຍອອກມາໃຫ້ຄົນຮຸ່ນຕໍ່ໆມາໄດ້ສໍາຜັດ.

2) ຍາພໍ່ ມະຫາສິລາ ວີລະວົງ ທ່ານເປັນນັກພາສາສາດ ຜູ້ມີວິນຍານຮັກວັນນະຄະດີ ທ່ານມີຄວາມອົດທົນເປັນເລີດ, ມີມັນສະໝອງທີ່ເຂັ້ມແຂງ ແຕ່ອ່ອນໂຍນ ສາມາດຍົບຍົກເອົາບົດວັນນະຄະດີຫລາຍໆບົດຂຶ້ນມາໃຫ້ເຫັນຄວາມສໍາຄັນ ແລະຄຸນປະໂຫຍດ. ຍິ່ງໄປກວ່ານັ້ນ ທ່ານຍັງເປັນຄູຜູ້ປະເສີດທີ່ໄດ້ສ້າງເຄື່ອງມືແນະແນວທາງການສຶກສາຄົ້ນຄວ້າວັນນະຄະດີໃຫ້ພວກເຮົາດໍາເນີນຕໍ່ມາ. ທ່ານເປັນຜູ້ສັງລວມລັກສະນະ ຮູບແບບ, ຊື່ ແລະ ຫລັກການໃນການແຕ່ງກອນຂອງບັນພະບຸລຸດໄດ້ສ້າງໄວ້ກະແຈກກະຈາຍໃຫ້ເຂົ້າເປັນລະບົບລະບຽບຢ່າງດີເລີດ. ແນວທາງການສຶກສາຄົ້ນຄວ້າວັນນະຄະດີຂອງທ່ານໄດ້ກາຍເປັນແວ່ນແຍງ, ກາຍເປັນກະແຈໄຂປະຕູໃຫ້ລູກຫລານລາວເຂົ້າສູ່ວົງການສຶກສາຄົ້ນຄວ້າວັນນະກໍາ, ວັນນະຄະດີແຫ່ງຊາດລາວ ແລະ ກໍແມ່ນທ່ານເອງເປັນຜູ້ປະກາດເປົ່າດ້ວຍຄົມປາກກາຂອງທ່ານບອກໃຫ້ພວກເຮົາຮູ້ວ່າ ດິນແດນລາວແມ່ນດິນແດນແຫ່ງກາບກອນ, ປະຊາຊົນລາວເປັນຜູ້ຮັກມັກວັນນະຄະດີ, ພວກເຂົາເປັນຜູ້ສ້າງວັນນະຄະດີ ແລະປົກປັກຮັກສາວັນນະຄະດີ.

3) ທ່ານ ອາຈານ ມະຫາບຸນຍົກ ແສນສູນທອນ ກໍໄດ້ກາຍເປັນຜູ້ຄົ້ນຄວ້າຮັບໂຮມບົດວັນະຄະດີໃຫ້ແກ່ພວກເຮົາໄດ້ສໍາຜັດລົດຊາດຂອງໜັງສືວັນນະຄະດີ. ພ້ອມນັ້ນ ທ່ານກໍເປັນຜູ້ມີຄວາມຮູ້ ແລະ ບົດຮຽນທີ່ມີຄຸນປະໂຫຍດໃນດ້ານການຕີຄວາມໝາຍຂອງກອນ. ບົດຮຽນນີ້ໄດ້ກາຍເປັນແນວທາງດ້ານການຄົ້ນຄວ້າໃຫ້ແກ່ນັກສຶກສາໃນໄລຍະປັດຈຸບັນ.

4) ທ່ານ ຄໍາແພງ ເກດຕະວົງ ເປັນຜູ້ໄຂທາງວິຈານວັນນະຄະດີ, ຍົກໃຫ້ເຫັນຄຸນຄ່າຂອງໜັງສື

ເພື່ອປະໂຫຍດແກ່ການສຶກສາ. ນອກຈາກນີ້ ທ່ານຍັງໄດ້ຄົ້ນຄວ້າຄຸນລັກສະນະຄືກັນ ແລະ ຕ່າງກັນລະຫວ່າງບົດວັນນະຄະດີພື້ນເມືອງ ແລະວັນນະຄະດີຊາດົກ ພ້ອມທັງຈຳແນກໃຫ້ເຫັນຄວາມແຕກຕ່າງລະຫວ່າງນິທານ ແລະຕຳນານ. ຈາກນັ້ນ ກໍສະຫລຸບອອກເປັນຫລັກການໃນການຈຳແນກປະເພດເລື່ອງຕ່າງໆ. ແນວທາງການສຶກສາຂອງທ່ານໄດ້ຊ່ວຍໃຫ້ພວກເຮົາມີຄວາມສະດວກໃນການຄົ້ນຄວ້າສິດສອນວັນນະຄະດີລາວ.

5) ທ່ານ ອາຈານ ທອງສຸ່ນ ລາດວົງສາ ອາຈານສອນວິຊາວັນນະຄະດີລ້ານຊ້າງ ຢູ່ມະຫາວິທະຍາໄລສ້າງຄູນາຄາວ ແລະວຽງຈັນ ໄດ້ຂຸດຄຸ້ຍຜ່ານການວິເຄາະບົດວັນນະຄະດີລາວສະໄໝອານາຈັກລາວລ້ານຊ້າງຫລາຍບົດ. ທ່ານໄດ້ສະຫລຸບໃຫ້ພວກເຮົາເຫັນກ່ຽວກັບເງື່ອນໄຂບຸກຄົນອຸດົມຄະຕິໃນຊົນຊັ້ນສັກດີນາ ເຊິ່ງຂຽນໄວ້ໃນຕຳລາຮຽນ ແລະສອນຢູ່ມະຫາວິທະຍາໄລສ້າງຄູຄື

- ຕ້ອງຊື່ສັດສຸດຈະລິດ ແລະຈົງຮັກພັກດີຕໍ່ວົງຕະກຸນ
- ມີຄວາມເກັ່ງກ້າສາມາດ, ມີວິຊາອາຄົມ
- ມີນ້ຳໃຈມຸມານະ, ສາມາດຜ່ານຜ່າອຸປະສັກຫຍຸ້ງຍາກ
- ເຮັດວຽກໂດຍບໍ່ຮຽກຮ້ອງຄ່າຕອບແທນ

ນອກຈາກນີ້ ທ່ານຍັງໄດ້ຍົກໃຫ້ເຫັນບົດບາດຂອງແມ່ຍິງໃນວັນນະຄະດີສະໄໝສັກດີນາວ່າ " ແມ່ຍິງເປັນຮູບພາບໃຈກາງຂອງວັນນະຄະດີ ". ການຄົ້ນພົບຊອກເຫັນບັນຫາດັ່ງກ່າວ ແມ່ນເລື່ອງແປກໃໝ່ທີ່ໜ້າສົນໃຈ ແລະມີຄວາມສຳຄັນໃນວົງການສຶກສາວັນນະຄະດີ ເຊິ່ງຕໍ່ມາກໍໄດ້ມີນັກສຶກສາຈຳນວນໜຶ່ງໄດ້ນຳເອົາເລື່ອງນີ້ມາເປັນຫົວຂໍ້ສຶກສາຄົ້ນຄວ້າ.

6) ທ່ານ ນາງດວງເດືອນ ບຸນຍາວົງ ທ່ານໄດ້ດຳເນີນການຄົ້ນຄວ້າເຈາະເລິກເລື່ອງ ທ້າວຮຸ່ງທ້າວເຈືອງ ຕໍ່ຈາກຍາພໍ່ມະຫາສິລາ ວີລະວົງ ເຮັດໃຫ້ເລື່ອງທ້າວຮຸ່ງທ້າວເຈືອງກະຈ່າງແຈ້ງ ແລະກາຍເປັນເອກະສານສຳຄັນໃນການຄົ້ນຄວ້າວັນນະຄະດີ. ນອກຈາກນີ້ ທ່ານກໍເປັນຜູ້ເປີດຊ່ອງທາງໃນການຄົ້ນຄວ້າວັນນະຄະດີລາວໃຫ້ກວ້າງອອກສູ່ສາຍຕາຂອງຄົນທັງພາຍໃນ ແລະຕ່າງປະເທດອີກດ້ວຍ.

ນອກຈາກທີ່ທ່ານທີ່ໄດ້ເອີຍຊື່ ແລະຜົນງານມາຂ້າງເທິງນີ້ແລ້ວ ຍັງມີຄົນລາວອີກຫລາຍຄົນໄດ້ເກັບກຳຄົ້ນຄວ້າວິໄຈວັນນະຄະດີລາວ ແຕ່ເນື່ອງຈາກເວລາໃນການຄົ້ນຄວ້າມີຈຳກັດຈຶ່ງບໍ່ໄດ້ນຳມາກ່າວໃນທີ່ນີ້.

ການສຶກສາຄົ້ນຄວ້າວັນນະຄະດີລາວ, ນອກຈາກຄົນລາວແລ້ວ ຍັງມີຄົນຕ່າງປະເທດຫລາຍຄົນທີ່ສົນໃຈ ແລະຄົ້ນຄວ້າວັນນະຄະດີລາວເຊັ່ນ ປາວີ , ຟີໂນ, ລາຟົງ ແລະຜູ້ອື່ນໆ ໄດ້ສະເໜີວັນນະຄະດີລາວ ແລະວັດທະນະທຳລາວລົງໃນໜັງສືພິມ ແລະວາລະສານຂອງຝຣັ່ງ ເຊິ່ງໄດ້ຕີລາຄາວັນນະຄະດີສະໄໝອານາຈັກລ້ານຊ້າງວ່າ ເປັນເງົາທີ່ກ່າຍແຝງແປງຮູບມາຈາກວັນນະຄະດີອິນເດຍ. ຂໍ້ຄິດເຫັນ ແລະການຕີລາຄາດັ່ງກ່າວນີ້ ມັນໄດ້ຊ່ວຍກະຕຸ້ນໃຫ້ນັກຄົ້ນຄວ້າລາວມີຄວາມຮູ້ສຶກ, ສົນໃຈຄົ້ນຄວ້າໃນວັນນະຄະດີລາວ, ວັດທະນະທຳລາວ ເພື່ອຫາຄຳຕອບ. ຜ່ານການສຶກສາຄົ້ນຄວ້າວັນນະຄະດີລາວພົບວ່າ ກ່ອນວັນນະຄະດີ, ວັດທະນະທຳອິນເດຍເຂົ້າມາລາວ ຄົນລາວໄດ້ມີວັດທະນະທຳ ແລະວັນນະຄະດີເປັນຂອງຕົນເອງ ແລະ ມີຄວາມອຸດົມສົມບູນຢູ່ແລ້ວເຊັ່ນ ພວກເຮົາມີນິທານພື້ນບ້ານ, ບົດຄຳກອນ, ຄຳຜະຫຍາ,

ກອນຂັບລຳ ແລະ ເຊີ້ງ ທີ່ປະຊາຊົນລາວໄດ້ຂັບຕໍ່ແຍກັນແຕ່ເໜືອຕະຫລອດໃຕ້. ວັນນະຄະດີປະເພດນີ້ໄດ້ເປັນພື້ນຖານເຮັດໃຫ້ວັນນະຄະດີສະໄໝອານາຈັກລ້ານຊ້າງກຳເນີດ ແລະຂະຫຍາຍຕົວ. ດັ່ງນັ້ນ, ໃນວັນນະຄະດີຂຽນຂອງ ລາວສະໄໝອານາຈັກລ້ານຊ້າງໄດ້ມີຫລາຍບົດທີ່ບໍ່ກ່ຽວຂ້ອງກັບສາສະໜາ ແລະວັນນະຄະດີອິນເດຍເຊັ່ນ ສານລົບພະສູນ, ກາບເມືອງພວນ, ທ້າວຮຸ່ງທ້າວເຈືອງ ແລະອື່ນໆ. ສ່ວນວັນນະຄະດີຊາດົກທີ່ມີກົກມາຈາກອິນເດຍຫລາຍບົດ ກໍໄດ້ມີການປັບປຸງໃຫ້ເຂົ້າກັບວິຖີຊີວິດຂອງຄົນລາວຢ່າງແທດເໝາະ.

ນອກຈາກນັກຄົ້ນຄວ້າຝຣັ່ງແລ້ວ ກໍຍັງມີນັກຄົ້ນຄວ້າຫວຽດນາມຫລາຍຄົນເຊັ່ນ ເລຢຸຍເລືອງ, ຫວໍກວາງເບິນ, ດ່າວວັນຕຸງນ, ດົງຫວຽດແອງ, ເຈືອງຢຸຍຮວ້າ, ລ້າຍພີຮຸ່ງ ແລະຜູ້ອື່ນໆ ທີ່ໄດ້ໃຫ້ຄວາມສົນໃຈຮັບໄຮນເອົາເລື່ອງລາວຂອງວັນນະຄະດີລາວຄື ນິທານພື້ນເມືອງລາວ, ສຸພາສິດ, ຄຳຜະຍາຂອງລາວ ພ້ອມ ທັງນຳສະເໜີການກຳເນີດ ແລະຂະຫຍາຍຕົວຂອງວັນນະຄະດີລາວລົງໃນວາລະສານຄົ້ນຄວ້າອາຊີອາຄະເນ, ວາລະສານວັນນະຄະດີ, ຂ່າວວິທະຍາສາດ ແລະໜັງສືພິມຕ່າງໆຂອງຫວຽດນາມ. ເບິ່ງລວມແລ້ວ ບົດຂຽນຕ່າງໆຂອງບັນດານັກຄົ້ນຄວ້າວັນນະຄະດີຫວຽດນາມຕໍ່ວັນນະຄະດີລາວນັ້ນ ສ່ວນຫລາຍແມ່ນຄົ້ນຄວ້າໃນແງ່ປະຫວັດວັນນະຄະດີເຊັ່ນ ການກຳເນີດ, ການຂະຫຍາຍຕົວ, ການສ່ອງແສງຕົວຈິງ, ຄຸນຄ່າຂອງວັນນະຄະດີລາວຕໍ່ກັບປະຫວັດສາດ ແລະສັງຄົມລາວ; ພ້ອມກັນນັ້ນກໍຍົກໃຫ້ເຫັນຄວາມອຸດົມສົມບູນຂອງວັນນະຄະດີລາວ. ບົດທີ່ລົງເລິກໃນການວິໄຈທີ່ສຳຄັນມີສອງບົດຄື "ການປະດິດແຕ່ງວັນນະຄະດີຮ້ອຍແກ້ວຂອງລາວ " ແລະ " ຮູບພາບແມ່ຍິງຜ່ານບົດເລື່ອງ ແລະ ບົດບັນທຶກປະຕິວັດ " ຂອງທ່ານ ດົງຫວຽດແອງ. ຂະບວນການຄົ້ນຄວ້າ ແລະ ນຳສະເໜີວັນນະຄະດີລາວຂອງນັກຄົ້ນຄວ້າຫວຽດນາມນັ້ນ ມັນເປັນການເຜີຍແຜ່ວັນນະຄະດີລາວອອກໃຫ້ຜູ້ອ່ານທັງຫວຽດນາມ ແລະຕ່າງປະເທດໄດ້ມີໂອກາດຮັບຮູ້ວັນນະຄະດີລາວ. ພ້ອມນັ້ນ ມັນກໍເປັນແຮງກະຕຸ້ນໃຫ້ຄົນລາວ ແລະ ຄົນຕ່າງປະເທດຫັນມາສົນໃຈຄົ້ນຄວ້າວັນນະຄະດີລາວຫລາຍຂຶ້ນ ທັງເປັນການປົກປັກຮັກສາວັດທະນະທຳລາວ ແລະວັນນະຄະດີລາວອີກດ້ວຍ.

ນອກຈາກນີ້ ກໍຍັງມີນັກຄົ້ນຄວ້າຂອງອະດີດສະຫະພາບໂຊວຽດເຊັ່ນ ທ່ານ ໂອຊີປົບ ທີ່ໄດ້ຄົ້ນຄວ້າວັນນະຄະດີລາວສະໄໝອານາຈັກລາວລ້ານຊ້າງ ດ້ວຍວິທີສົມທຽບໃສ່ວັນນະຄະດີຂຽນຂອງບັນດາປະເທດໃກ້ຄຽງທີ່ໄດ້ຮັບຜົນສະທ້ອນດ້ານວັດທະນະທຳ ແລະຄວາມສີວິໄລຈາກເຄົ້າອິນເດຍເດີມຄືກັນ. ວິທີຄົ້ນຄວ້າແບບໃໝ່ນີ້ ທ່ານໄດ້ຢືນຢັນໄດ້ບາງບັນຫາທີ່ແຕ່ກ່ອນເຄີຍຖືກຖຽງກັນກັນຢູ່ເຊັ່ນ ເລື່ອງ ສິນໄຊບໍ່ແມ່ນເລື່ອງຊາດົກໂດຍກົງ ແລະເລື່ອງຈຳປາສີ່ຕົ້ນ ກໍບໍ່ແມ່ນແປມາຈາກ " ຈຳປາຊະຊາດົກ " ເພາະບໍ່ເຄີຍມີເລື່ອງແບບນີ້ຢູ່ໃນຄັງສາງຊາດົກ ທີ່ແຜ່ຜາຍກັນຢູ່ຕາມປະເທດຕ່າງໆໃນຂົງເຂດນີ້... .( ອ້າງໃນບໍ່ແສງຄຳ ວົງດາລາ, 1987: 8- 9 ).

ນອກຈາກທ່ານ ໂອຊີປົບແລ້ວກໍຍັງມີທ່ານ ໂນແລັບ ນັກພາສາສາດ ກໍໄດ້ປະກອບສ່ວນເຂົ້າໃນການຄົ້ນຄວ້າວັນນະຄະດີລາວ. ທ່ານໄດ້ຂຽນວັນນະຄະດີລາວລົງໃນປຶ້ມ (ສະເໜີປະເທດລາວ) ທີ່ສະຖາບັນຄົ້ນຄວ້າພາກຕາເວັນອອກຂອງສະພາບັນດິດໂຊວຽດເປັນຜູ້ຮຽບຮຽງ ( ອ້າງໃນບໍ່ແສງຄຳ ວົງດາລາ

ພອນ ຄະນະ,1987:9 ) ໃນບົດດັ່ງກ່າວທ່ານໂນແລັບໄດ້ສະເໜີວັນນະຄະດີລາວໂດຍສັງເຂບຢ່າງເປັນລະບົບ ແຕ່ວັນນະຄະດີພື້ນເມືອງຈົນເຖິງວັນນະຄະດີທັນສະໄໝຂອງລາວທຸກມື້ນີ້.

ອາດເວົ້າໄດ້ວ່າ ທ່ານ ໂອຊີປົບ ແລະທ່ານໂນແລັບ ໄດ້ສ້າງຜົນງານອັນເປັນໜ້າສົນລະເສີນແຕ່ງການຄົ້ນຄວ້າວັນນະຄະດີລາວດ້ວຍວິທີການສົມທຽບຢ່າງເປັນລະບົບ, ເປັນວິທີການຄົ້ນຄວ້າແບບໃໝ່ທີ່ດີທີ່ສຸດ.

## 3.2. ການປົກປັກຮັກສາ ແລະເສີມຂະຫຍາຍວັນນະຄະດີລາວດ້ວຍການປະດິດແຕ່ງບົດວັນນະຄະດີ.

ດັ່ງໄດ້ກ່າວມາແລ້ວວ່າ ຄົນລາວເປັນຜູ້ນິຍົມຊົມຊອບວັນນະຄະດີ, ຮັກວັນນະຄະດີ ແລະກໍ່ສ້າງບົດວັນນະຄະດີ. ສະນັ້ນ, ມູນເຊື້ອວັນນະຄະດີຈຶ່ງໄດ້ຜູກພັນກັບຄົນລາວຕະຫລອດທຸກຍຸກທຸກສະໄໝ. ແຕ່ການປະດິດແຕ່ງວັນນະຄະດີລາວສະໄໝກ່ອນບໍ່ນິຍົມໃສ່ນາມຜູ້ແຕ່ງ. ດັ່ງນັ້ນ ບົດວັນນະຄະດີພື້ນເມືອງ ແລະບົດວັນນະຄະດີລ້ານຊ້າງສ່ວນໃຫຍ່ຈະບໍ່ມີຊື່ຜູ້ແຕ່ງ. ແຕ່ພະລັງແຮງຂອງວິທີການ ແລະ ຫລັກການປະດິດແຕ່ງ ໄດ້ກາຍເປັນບົດຮຽນຄວາມຮູ້ໃຫ້ແກ່ການປະດິດແຕ່ງບົດວັນນະຄະດີລາວໃນສະໄໝຕໍ່ໆມາຈົນເຖິງປັດຈຸບັນ

ໃນປັດຈຸບັນນີ້ ໄດ້ມີລູກຫລານລາວຫລາຍຄົນກໍໄດ້ອົດທົນຜ່ານຜ່າຄວາມຫຍຸ້ງຍາກຫລາຍປະການໃນຊີວິດ ທັນແນວຄິດ ແລະປາຍປາກກາສູ່ການຂຽນບົດກາບກອນ, ບົດເລື່ອງສັ້ນ ແລະນະວະນິຍາຍດ້ວຍຈິດໃຈຮັກວັນນະຄະດີ ຈຶ່ງເຮັດໃຫ້ວັນນະຄະດີຫລາຍບົດໄດ້ຮັບການຕອບຮັບຈາກຜູ້ອ່ານ ຈົນໄດ້ຮັບນາມມະຍົດວ່າເປັນນັກກະວີ, ນັກປະພັນລາວຫລາຍທ່ານດັ່ງນີ້

**1) ນັກກະວີລາວ**

ນັກຂຽນຂອງລາວທີ່ສັງຄົມຍອມຮັບ ແລະກ່າວຍ້ອງຍໍວ່າ ເປັນນັກກະວີລາວປະກອບມີຫລາຍຮຸ່ນຄົນ ມີທັງຮຸ່ນອາວຸໂສ ແລະຮຸ່ນໜຸ່ມ ຫລືຮຸ່ນໃຫມ່.

- ນັກກະວີຮຸ່ນອາວຸໂສມີ: ທ່ານ ພູມີ ວົງວິຈິດ, ທ່ານ ສົມສີ ເດຊາຄຳພູ, ທ່ານວັນ ດີພິມກອງ, ທ່ານ ມະຫາ ຄຳຕັນ ເທບບົວລີ....
- ນັກກະວີຮຸ່ນໃໝ່ມີ: ທ່ານ ທອງອິນ ພົມກອງ, ທ່ານ ຄຳເຜີຍ ວັນນະໂສພາ, ທ່ານ ຄຳໄພ ສັກດາ, ທ່ານ ທິດປາ ຄຳສົມພອນ, ທ່ານ ຄຳພັນ ທິບພະວົງ, ທ່ານ ຄຳປູ່ , ທ່ານວິໄລ ແກ້ວມະນີ, ທ່ານ ທອງໃບ ໂພທິສານ, ທ່ານ ທອງຄຳ ອ່ອນມະນີສອນ, ພ. ພວງສະບາ, ຄຳເຜີຍ ມະນີວັນ, ດາວວຽງ ບຸດນະໄຄ, ພ. ຄຳມູນເຮືອງ...

**2) ນັກປະພັນລາວ**

ນັກປະພັນລາວຜູ້ມີຊື່ສຽງເປັນທີ່ຍອມຮັບ ແລະ ຍົກຍ້ອງຕໍ່ຜົນງານໃນການປະພັນປະກອບມີຫລາຍທ່ານເຊັ່ນ

- ນັກປະພັນຮຸ່ນອາວຸໂສມີ: ທ່ານ ຄຳລຽງ ພົນເສນາ, ທ່ານຈັນທີ ເດືອນສະຫວັນ, ທ່ານ ສຸວັນທອນ ບຸບຜານຸວົງ, ທ່ານ ສົມບູນ ທະວີໄຊ, ທ່ານ ບົວແກ້ວ ຈະເລີນລັງສີ...

- ນັກປະພັນຮຸ່ນໃໝ່ມີ: ທ່ານ ອຸທິນ ບຸນຍາວົງ, ດວງຈຳປາ, ເສລີພາບ,ດາວເໜືອ, ບຸນທະນອງ ຊົມໄຊພົນ, ດວງໄຊ ຫລວງພະສີ, ທອງເສີຍ ໂຄດວົງສາ, ບຸນເສີນ ແສງມະນີ, ນ. ວຽງພິມ ສິນສະໝຸກ, ນ. ທິດາຈັນ, ເບັ້ງໄຊຫວ່າງ...

3) ນັກຂຽນລາວຜູ້ທີ່ໄດ້ຮັບລາງວັນຊີໄຣ ( S.E.A Writer Award ).

ນັກຂຽນຂອງລາວບໍ່ພຽງແຕ່ໄດ້ຮັບການຕອບຮັບຈາກຜູ້ອ່ານໃນສັງຄົມເທົ່ານັ້ນ ຍັງມີນັກຂຽນທີ່ມີຜົນງານດີເດັ່ນຈົນໄດ້ຮັບລາງວັນຊີໄຣ ຫລືລາງວັນວັນນະກຳສ້າງສັນດີເດັ່ນປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້, ເຮັດໃຫ້ຊື່ສຽງນັກຂຽນລາວໄດ້ປາກົດໃຫ້ຊາວໂລກໄດ້ຮັບຮູ້. ນັກຂຽນຊີໄຣຂອງລາວມີດັ່ງນີ້

- ທ່ານ ທອງຄຳ ອ່ອນມະນີສອນ ເປັນບົດກອນທີ່ມີຊື່ວ່າ " ນ້ຳຕາແມ່ " ໄດ້ຮັບລາງວັນໃນປີ 1998 ເປັນຄົນທຳອິດຂອງລາວທີ່ໄດ້ຮັບລາງວັນນີ້.
- ທ່ານ ຈັນທີ ເດືອນສະຫວັນ ເລື່ອງສັ້ນ " ຄ້າງຄືນໃນປ່າເລິກ " ໄດ້ຮັບລາງວັນໃນປີ 1999.
- ທ່ານ ສຸວັນທອນ ບຸບຜານຸວົງ ( ສ. ບຸບຜານຸວົງ ) ເປັນບົດນະວະນິຍາຍຊື່ວ່າ " ສອງເອື້ອຍນ້ອງ " ໄດ້ຮັບລາງວັນໃນປີ 2000.
- ທ່ານ ໂສມສີ ເດຊາຄຳພູ ( ສ. ເດຊາ ) ບົດກອນ " ພົກແຜ່ນດິນ ປີ້ນແຜ່ນຟ້າ ຢາກເຫັນໜ້າໃຫ້ເບິ່ງຫລັງ " ໄດ້ຮັບລາງວັນໃນປີ 2001.
- ທ່ານ ວິເສດ ສະແຫວງສຶກສາ ໄດ້ຮັບລາງວັນໃນປະເພດເລື່ອງສັ້ນທີ່ມີຊື່ວ່າ " ນົກອ້ຽງຂີ້ຕາຄວາຍ " ໄດ້ຮັບລາງວັນໃນປີ 2002.
- ທ່ານ ຫຼຽບ ວົງປະກາຍ ( ດາວເໜືອ ) ນະວະນິຍາຍ ເລື່ອງ " ພາຍຸຊີວິດ " ໄດ້ຮັບລາງວັນໃນປີ 2003
- ທ່ານ ທອງໃບ ໂພທິສານ ບົດກອນ " ງົວ ແລະກວຽນ " ໄດ້ຮັບລາງວັນໃນປີ 2004 .
- ທ່ານ ບຸນເສີນ ແສງມະນີ ເປັນເລື່ອງສັ້ນຊື່ວ່າ " ປະເພນີ ແລະຊີວິດ" ໄດ້ຮັບໃນປີ 2005.
- ທ່ານ ນາງດວງເດືອນ ບຸນຍາວົງ ນະວະນິຍາຍເລື່ອງ " ອາຖັນແຫ່ງພົງໄພ " ໄດ້ຮັບລາງວັນໃນປີ 2006, ເປັນນັກຂຽນຍິງທຳອິດຂອງລາວທີ່ໄດ້ຮັບລາງວັນນີ້.
- ທ່ານ ຫຸມພັນ ລັດຕະນະວົງ ບົດກອນທີ່ມີຊື່ວ່າ " ສຸດອາໄລ " ໄດ້ຮັບລາງວັນໃນປີ 2007 .
- ທ່ານ ໂອທອງ ຄຳອິນຊູ ເປັນເລື່ອງສັ້ນທີ່ມີຊື່ວ່າ " ສິ້ນໄໝຜືນເກົ່າໆ " ໄດ້ຮັບລາງວັນໃນປີ 2008 .

## 4. ການປົກປັກຮັກສາວັນນະຄະດີດ້ວຍການເກັບມ້ຽນເອກະສານ.

ການເກັບມ້ຽນເອກະສານແມ່ນການປົກປັກຮັກສາ ແລະ ເສີມຂະຫຍາຍວັນນະຄະດີຮູບແບບໜຶ່ງເຊິ່ງປູ່ຍ່າຕາຍາຍຂອງພວກເຮົາໄດ້ປະຕິບັດກັນມາແຕ່ສະໄໝກ່ອນໆ. ແຕ່ໃດໆມາປູ່ຍ່າຕາຍາຍລາວເປັນຜູ້ນິຍົມຊົມຊອບໃນບົດວັນນະຄະດີ. ສະນັ້ນ, ເຂົາເຈົ້າຈຶ່ງເປັນຜູ້ປະດິດແຕ່ງ, ນຳໃຊ້ ແລະປົກປັກຮັກສາພາສາວັນນະຄະດີ. ພ້ອມກັນນີ້ ເຂົາເຈົ້າກໍຖືວ່າ ວັນນະຄະດີເປັນສົມບັດອັນລ້ຳຄ່າຂອງຊາດ ຈະຂາດເສຍ

ບໍ່ໄດ້. ດັ່ງນັ້ນ, ເຂົາເຈົ້າຈຶ່ງມີຫລາຍວິທີໃນການປົກປັກຮັກສາເອກະສານເອົາໄວ້ເຊັ່ນ ເຮັດຄຳພີດ້ວຍໄມ້ໄຜ່, ມັດໄວ້ດ້ວຍການຖັກເປັນດ້ວງໄລນດ້ວຍຜ້າສີຂາວ, ສີເຫລືອງ, ສີແດງ. ສຳລັບໃບລານເຮັດເປັນໄມ້ປະກັບແນບ ໄວ້ ແລະທໍ່ ເພື່ອປ້ອງກັນບໍ່ໃຫ້ປວກກັດ. ນອກຈາກນີ້ ເພິ່ນຍັງຫາໄມ້ເນື້ອແຂງ, ໄມ້ແກ່ນຈັນ ຫລືໄມ້ນ້ຳມັນຫອມ ເຮັດເປັນຕູ້ຂະໜາດໃຫຍ່ ແລະນ້ອຍເອົາໄວ້ຕາມວັດ, ເຮືອນ ແລະສະຖານທີ່ສັກສິດ,

## 5. ສະຫລຸບ

ສະຫລຸບແລ້ວແລ້ວໃນດ້ານວິຊາການ, ການເກັບກຳຄົ້ນຄວ້າແລະວິໄຈກ່ຽວກັບວັນນະຄະດີລາວແມ່ນບໍ່ທັນໄດ້ຮັບການຊຸກຍູ້ສົ່ງເສີມເທົ່າທີ່ຄວນ. ບັນຫາດັ່ງກ່າວນີ້ມັນໄດ້ມີຜົນສະທ້ອນຂັ້ນໃຫຍ່ຫລວງຕໍ່ກັບການຮຽນການສອນຂອງຄູບາອາຈານ ແລະນັກສຶກສາ, ຂາດປຶ້ມອ່ານ, ປຶ້ມຄົ້ນຄວ້າ. ຢູ່ໃນຫໍສະໝຸດຕ່າງໆ ສ່ວນຫລາຍເປັນປຶ້ມຕ່າງປະເທດ ສ່ວນປຶ້ມທີ່ເປັນວັດທະນະທຳ, ວັນນະຄະດີລາວແມ່ນມີໜ້ອຍທີ່ສຸດ. ພວກເຮົາເຄີຍໄດ້ຮັບຄຳຖາມຈາກນັກສຶກສາຫລາຍຮຸ່ນຄືນວ່າ " ວັນນະຄະດີມີຄວາມອຸດົມສົມບູນຢູ່ບ່ອນໃດ? ຫາແນວຊິອ່ານຊິຄົ້ນຄວ້າກໍບໍ່ມີ ".

ພວກເຮົາເຫັນວ່າ ວັນນະຄະດີລາວທີ່ໄດ້ດຳເນີນການສອນມາເປັນເວລາ 20 ກວ່າປີ ເຊິ່ງໄດ້ຄຸກຄີ, ຮວບຮວມກ່ຽວກັບວັນນະຄະດີລາວ ເພື່ອສ້າງຕຳລາການຮຽນການສອນ ຂໍຢືນຢັນອີກວ່າ " ວັນນະຄະດີລາວຂອງພວກເຮົາແມ່ນອຸດົມສົມບູນທັງທາງດ້ານຈຳນວນ ແລະເນື້ອໃນສ່ອງແສງ. ພູມລຳເນົາລາວແມ່ນພູມລຳເນົາແຫ່ງກາບກອນ. ຄົນລາວເປັນຜູ້ນິຍົມຊົມຊອບໃນວັນນະຄະດີ ". ແຕ່ຍ້ອນວ່າ ພວກເຮົາຂາດບັ້ນໃນການສານຕໍ່ ແລະພັດທະນາເກືອບສອງສະຕະວັດ, ຍ້ອນການຈູດເຜົາທຳລາຍຂອງສັກດີນາສະຫຍາມ, ການກົດໜ່ວງຂອງພວກລ່າເມືອງຂຶ້ນຝຣັ່ງ ແລະ ສົງຄາມທຳລາຍຂອງຈັກກະພັດອາເມຣິກາ, ບິດວັນນະຄະດີທີ່ ບັນພະບຸລຸດລາວອຸດສາຫະສະສົມ ແລະສົ່ງທອດມານັ້ນຈຶ່ງຂາດການເກັບກຳທ້ອນໂຮມ, ການບັນທຶກຈົດກ່າຍ; ໂຕທີ່ບັນທຶກຈົດກ່າຍໄວ້ແລ້ວ ກໍຕົກເຮ່ຍເສຍຫາຍເປັນຈຳນວນຫລວງຫລາຍ; ສິ່ງທີ່ຍັງໃນປັດຈຸບັນກໍ ຂາດບັ້ນຂາດຕອນ ຄ້າງຢູ່ນຳຄວາມຈື່ຈຳຂອງປະຊາຊົນ ແລະອີກສ່ວນໜຶ່ງກໍຄົງຢູ່ໃນໃບລານ ເຊິ່ງລູກຫລານຂອງພວກເຮົາບໍ່ສາມາດອ່ານ ແລະຄົ້ນຄວ້າໄດ້.

ຈາກສະພາບການຂາດບັ້ນໃນການສານຕໍ່ເກືອບສອງສະຕະວັດດັ່ງກ່າວມານັ້ນ, ມັນໄດ້ສົ່ງຜົນສະທ້ອນເຮັດໃຫ້ການຄົ້ນຄວ້າການວິໄຈຂອງພວກເຮົາໃນປັດຈຸບັນພົບຄວາມຫຍຸ້ງຍາກ. ແມ່ນວ່າສະພາບແວດລ້ອມທາງສັງຄົມໄດ້ເປີດໂອກາດໃຫ້ພວກເຮົາຄົ້ນຄວ້າວິໄຈວັນນະຄະດີ ແຕ່ໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບໂດຍກົງຄື ໜ່ວຍງານວັນນະຄະດີລາວ ແລະໜ່ວຍງານອື່ນໆທີ່ມີສ່ວນກ່ຽວຂ້ອງບໍ່ສາມາດດຳເນີນໄດ້ຢ່າງຈິງຈັງ ແລະເຕັມເມັດເຕັມໜ່ວຍໄດ້ ແມ່ນມາຈາກສາມບັນຫາຫລັກຄື

1) ພວກເຮົາຂາດບຸກຄະລາກອນ. ບຸກຄະລາກອນທີ່ມີຢູ່ໃນປັດຈຸບັນນີ້ ສ່ວນຫລາຍມີຄວາມສາມາດບໍ່ພຽງພໍ. ຜູ້ຮູ້ພັດບໍ່ເປັນ ຜູ້ເປັນພັດບໍ່ຮູ້. ( ຜູ້ຮູ້ແຕ່ບໍ່ເປັນ ແມ່ນບຸກຄົນທີ່ມີຄວາມຮູ້ກ່ຽວກັບວັນນະຄະດີລາວ ສາມາດອ່ານພາສາລາວບູຮານ ສາມາດເຂົ້າໃຈເນື້ອຫາສາລະຂອງວັນນະຄະດີບູຮານໄດ້ ແຕ່ຄົນພວກນີ້ ພັດພົດໂອກາດທີ່ຈະໄປຍົກລະດັບຄວາມຮູ້ຄວາມສາມາດດ້ານທິດສະດີ ແລະ

ເຕັກໂນໂລຊີທີ່ຈະມາວິເຄາະ ວິຈານບົດວັນນະຄະດີ ແລະນຳເອົາບົດວັນນະຄະດີເກົ່ານັ້ນມາຕົກແຕ່ງໃຫ້ຕອບສະໜອງຕໍ່ຄວາມຮຽກຮ້ອງ ຕ້ອງການຂອງສັງຄົມບໍ່ເປັນ. ຜູ້ເປັນພັດບໍ່ຮູ້ແມ່ນນັກວັນນະຄະດີຮຸ່ນໜຸ່ມມີໂອກາດໄດ້ຮ່ຳຮຽນເອົາປະລິນຍາໂທ ປະລິນຍາເອກທາງດ້ານທິດສະດີ ແລະເຕັກໂນໂລຊີ ແຕ່ພັດບໍ່ຮູ້ອ່ານບໍ່ສາມາດເຂົ້າໃຈຄວາມໝາຍ ແລະ ເນື້ອຫາສາລະຂອງວັນນະຄະດີໄດ້ຢ່າງແທດເຖິງໄດ້ ).

2) ພວກເຮົາຂາດເງິນທຶນໃນການຄົ້ນຄວ້າວິໄຈກ່ຽວກັບວັນນະຄະດີ. ຊີວິດຂອງຄູອາຈານ ແລະຜູ້ເຮັດວຽກງານດ້ານນີ້ ຍັງພົບຄວາມຫຍຸ້ງຍາກລຳບາກ ຈຶ່ງບໍ່ມີເວລາພຽງພໍທີ່ຈະດຳເນີນການຄົ້ນຄວ້າຢ່າງເຕັມເມັດເຕັມໜ່ວຍໄດ້.

3) ຍ້ອນຄົນລາວເຮົາເບິ່ງຂ້າມ ບໍ່ຫລິງເຫັນຄຸນຄ່າ ແລະບົດບາດຄວາມສຳຄັນຂອງວັນນະຄະດີ, ບໍ່ມັກອ່ານບົດວັນນະຄະດີ, ບໍ່ມັກສົ່ງເສີມວັນນະຄະດີ, ຖືວ່າວັນນະຄະດີເປັນຂອງເກົ່າຫລ້າສະໄໝ, ບໍ່ຢາກຮຽນບໍ່ຢາກຄົ້ນຄວ້າ ເຖິງແມ່ນວ່າມີໂຄງການຫລັກສູດວິຊານີ້ ນັບແຕ່ໂຮງຮຽນປະຖົມເຖິງມະຫາວິທະຍາໄລ ແຕ່ຜົນການຮຽນການສຶກສາ ແລະນຳໄປໃຊ້ໃຫ້ເກີດດອກອອກຜົນບໍ່ໄດ້ດີເທົ່າທີ່ຄວນ.

ເພື່ອເປັນແນວທາງໃນການພັດທະນາວັນນະຄະດີໃຫ້ກ້າວເນີດ ແລະຂະຫຍາຍຕົວຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຊາດ ແລະປະຊາຊົນລາວໃນຍຸກໃໝ່ ຄວນເອົາໃຈໃສ່ ແລະປະຕິບັດດັ່ງນີ້:

1) ໜ່ວຍງານຕ່າງໆທີ່ມີສ່ວນກ່ຽວຂ້ອງເຊັ່ນ ໜັງສືພິມ, ວາລະສານ,ກະຊວງຖະແຫລ່ງຂ່າວແລະວັດທະນະທຳນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ຄວນມີງານແຂ່ງຂັນ ຫລື ກວດສອບການປະດິດແຕ່ງບົດ ວັນນະຄະດີ, ບົດຟ້ອນ, ບົດຂັບລຳທ້ອງຖິ່ນເປັນປະຈຳ ແລະມີລາງວັນແຕ່ລະລະດັບມອບໃຫ້.

2) ຄວນໂຄສະນາໃຫ້ເຫັນບົດບາດວັນນະຄະດີ ແລະຊຸກຍູ້ໃຫ້ມະຫາຊົນອ່ານ ແລະສົນໃຈໃນບົດວັນນະຄະດີ.

3) ຢູ່ຕາມສະຖາບັນການສຶກສາແຫ່ງຕ່າງໆ ຄວນມີຫໍສະໝຸດໃນການເກັບທ້ອນບົດວັນນະຄະດີ ແລະຈັດພິມບົດວັນນະຄະດີ ເພື່ອຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

4) ຄວນນຳເອົາບົດປະພັນວັນນະຄະດີມາປະສົມປະສານກັບເຕັກໂນໂລຊີສະໄໝໃໝ່ ເພື່ອໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມໃນສະໄໝປັດຈຸບັນ.

# ບົດອ່ານເພີ່ມ

## ເລື່ອງ ຂຸນບູລົມ

ແຕ່ກີ້ແຕ່ກ່ອນພຸ້ນ, ຢູ່ເມືອງຟ້າຍັງມີແຖນອົງໜຶ່ງຊື່ວ່າ ແຖນຟ້າຄື້ນ ເປັນພໍ່ຂອງຂຸນບູລົມ ເຊິ່ງເປັນໃຫຍ່ກວ່າແຖນທັງຫລາຍເຊັ່ນ ແຖນແຕ່ງ, ແຖນຄົມ, ແຖນຊັ່ງ, ແຖນເຖືອກ. ແຖນທັງສີ່ຕົນນີ້ຢູ່ເທິງຊັ້ນຟ້າ ຈາຕູມເປັນຜູ້ແຕ່ງໂລກ ເບິ່ງແຍງສັດສາວາສິ່ງ, ກຳນົດບາບບຸນຄຸນໂທດຄວາມຊົ່ວຄວາມດີຂອງມະນຸດ. ຍັງ ມີເທວະດາຊື່ວ່າ ທໍລະນີ ເປັນຜູ້ຮັກສາແຜ່ນດິນ, ນາງເມກຂະລາ ຮັກສາແມ່ນ້ຳ ແລະຍັງເປັນຜູ້ຮັກສາພະຍາ ທ້າວຂຸນ ຄົນທັງຫລາຍຜູ້ກະທຳບາບບຸນແລ້ວໄປລາຍງານໃຫ້ແຖນທັງສີ່ ເພື່ອໄຈດຖາມ. ຕໍ່ມາກໍມີສະບັດຕະພົນໄດ້ລົງມາເປັນຫລັກເງິນຫລັກຄຳໄວ້ໃນບ່ອນທີ່ຈະຕັ້ງເມືອງໃຫຍ່ 16 ແຫ່ງ ແລະເມືອງນ້ອຍ 15 ແຫ່ງ, ແລ້ວຈຶ່ງໃຫ້ພະພົມຕົນຊື່ວ່າ ບໍລະເມສວນ ຮັກສາທິດຕາເວັນອອກ, ພະນາລາຍຮັກສາທິດຕາເວັນຕົກ, ມະໄຫໄສດຮັກສາທິດເໜືອ ແລະເສລາສິດ ຮັກສາທິດໃຕ້ ພ້ອມທັງເປັນຜູ້ສອນວິຊາອາຊີບ ຕະຫລອດເຖິງ ສິລະປະກຳຕ່າງໆ. ຢູ່ຕໍ່ມາ, ຈຶ່ງມີພະລືສີສອງອ້າຍນ້ອງລົງມາຕັ້ງຫລັກໝາຍໄວ້ທີ່ເມືອງຊຽງທອງແລ້ວເອີ້ນ ພະຍານາກທັງ 15 ຕົວລົງມາສອນ ແລ້ວກໍມອບໝາຍໜ້າທີ່ໃຫ້ເພື່ອຮັກສາບ້ານເມືອງ. ຈາກນັ້ນ, ພະລືສີ ທັງສອງໄດ້ຮຽກເອົາເທວະດາ 6 ຕົນມາສັ່ງສອນອີກຄື ປູ່ພະສີ, ຍ່າພະໄສທີ່ພູຊວງຫລວງ ແລະພູຊ້າງນ້ອຍ. ທັງສອງຜົວເມຍນີ້, ມີໜ້າທີ່ຮັກສາທິດຕາເວັນອອກ; ທ້າວບຸນເຫລືອ ແລະນາງເກົ້າງ້າວ ຢູ່ພູແສນເຂົາຄຳ ໃຫ້ຮັກສາຝ່າຍເໜືອ. ຕົ້ວຟ້າແສດ ແລະນາງພິຈິກໃຫ້ຮັກສາຝ່າຍໃຕ້. ແຕ່ນັ້ນ, ພະລືສີທັງສອງອ້າຍນ້ອງຈຶ່ງ ໄດ້ໃສ່ຊື່ດິນແດນແຫ່ງນັ້ນເປັນເມືອງຊວາ ( ລ້ານຊ້າງ ) ແລ້ວໃຫ້ພະລືສີຜູ້ນ້ອງເຝົ້າຢູ່ທີ່ນັ້ນ. ສ່ວນຜູ້ອ້າຍໄດ້ ຄືນເມືອເມືອງຟ້າ ເພື່ອລາຍງານໃຫ້ແຖນຫລວງຮູ້ ພ້ອມທັງຂໍຮ້ອງໃຫ້ແຖນຫລວງແຕ່ງຕັ້ງຜູ້ມີຄວາມສາມາດ ພ້ອມດ້ວຍມີຄຸນສົມບັດດີມາຄອບຄອງເມືອງດັ່ງກ່າວ. ດັ່ງນັ້ນ, ແຖນຫລວງຈຶ່ງໄດ້ແຕ່ງຂຸນບູລົມລົງມາປົກຄອງເມືອງລຸ່ມ ພ້ອມທັງມອບເຄື່ອງໃຊ້ຂອງສອຍຕ່າງໆ ແລະນາງສາວຮັບໃຊ້ອີກຈຳນວນໜຶ່ງ. ການລົງມາເມືອງລຸ່ມນີ້, ຍັງມີຂຸນທຳມະລາດ, ຂຸນແສງໄປກ່ອນ ຂຸນອຸ່ນ, ຂຸນຂະລີຂີ່ມ້າຕາມຫລັງຊ້າງຂຸນບູລົມ. ປູ່ເຍີ ແມ່ຍ່າງ່າມແບກຂວານໄປກ່ອນ, ເຖົ້າໄລ່, ແມ່ມົດຈັບພ້າແບກຈົກຖືສຽມໄປຕາມຫລັງ, ເຖົ້າເຍີຍ່າງ່າມ; ທັງສີ່ ຄົນນີ້ມີໜ້າທີ່ປາບຜີເຜດ, ຜີຍັກ, ຜີເຊື້ອ, ຜີເມືອງກ່ອນຂຸນບູລົມຈະລົງມາຮອດ. ຕໍ່ຈາກນັ້ນ, ແຖນຊີ້ຈຶ່ງໄດ້ຊີ້ບ່ອນຊີ້ທີ່ໃຫ້ແກ່ຂຸນບູລົມວ່າ ໃຫ້ໄປເມືອງນານ້ອຍອ້ອຍໜູ. ຢູ່ທີ່ນັ້ນ ເຖິງເວລາ 9 ປີ, ຂຸນບູລົມກໍໄດ້ລູກຊາຍ 7 ຄົນ ຄື ຂຸນລໍ, ຂຸນສິງ, ຂຸນອິນ, ຂຸນເຈັດຈຽງ ( ເປັນລູກເມຍຫລວງ ), ຂຸນລ້ານ, ຂຸນຄຳພວງ ແລະຂຸນເຈັດເຈືອງ ( ເປັນລູກເມຍນ້ອຍ ).

ເມື່ອຢູ່ຮ່ວມກັນຕໍ່ມາ, ຂຸນບູລົມພ້ອມທັງເມຍ ກໍຈົ່ມທຸກຈົ່ມຍາກ ຈຶ່ງໃຫ້ຂຸນສານ, ປູ່ເຍີ, ແມ່ຍ່າງ່າມ ເມືອລາຍງານຕໍ່ແຖນຟ້າຄື້ນວ່າ ເຄືອເຂົາກາດທີ່ໜອງຄູວາດີກໜາ, ແດດບໍ່ເຫັນຕາເວັນບໍ່ສ່ອງ ເຮັດໃຫ້ເມືອງລຸ່ມມືອາກາດໜາວຢ່າງໜັກໜ່ວງ. ເມື່ອແຖນໄດ້ຟັງເຊັ່ນນັ້ນແລ້ວ ກໍແຕ່ງໃຫ້ປູ່ເຍີ, ແມ່ຍ່າງ່າມ

ໄປຕັດເຄືອ ເຂົາກາດ. ເຖົ້າໄລ່, ແມ່ມົດໄປປາຕົ້ນໄຮຫລວງ. ແຖນສົ່ວໄປສົ່ວໝາກນ້ຳເຕົ້າປຸງໜ່ວຍອ້າ ແຖນຊີໄປຊີ ໝາກນ້ຳເຕົ້າປຸງໜ່ວຍນ້ອງ ເຮັດໃຫ້ຜູ້ຊາຍຜູ້ຍິງຈຳນວນຫລວງຫລາຍຕະຫລອດຮອດສັ ສາວາສິ່ງຫລຸຫລັ່ງທັ່ງເທກັນອອກມາ. ຈາກນັ້ນ, ແຖນຈຶ່ງບອກໃຫ້ປູ່ເຍີ ເຖົ້າໄລ່ວ່າ ເມື່ອສູເຈົ້າຕັດເຄື ເຂົາກາດ, ປາຕົ້ນໄຮ ຫລວງ ແລະຜ່າໝາກນ້ຳເຕົ້າປຸງແລ້ວ ຢ່າສູພາກັນຂຶ້ນໄປເມືອງຟ້າຫາກູອີກ; ຄັ ທັງສີ່ຕາຍໄປແລ້ວ ໄທເມືອງລຸ່ມໄດ້ກິນອັນໃດໃຫ້ເອີ້ນສູທັງສີ່ມາກິນກ່ອນ. ນັບແຕ່ນັ້ນມາ, ບ້ານເມືອ ຂອງຂຸນບູລົມທີ່ນານ້ອຍອ້ອຍ ໜູກ່ຮຸ່ງເຮືອງແຈ້ງຮູ່ປະການ. ປູ່ເຍີ, ຍ່າແມ່ງ່າມ, ເຖົ້າໄລ່, ແມ່ມົດກໍຕາ ເປັນຜີເຊື້ອເມືອງ. ສ່ວນຂຸນບູລົມກໍໄດ້ເລືອກເອົານາງສາວຜູ້ສວຍສົດງົດງາມ ທີ່ອອກມາຈາກນ້ຳເຕົ້າປຸງ ໜ່ວຍອ້າຍມາເປັນລູກສະໃພ້. ພ້ອມດຽວກັນນັ້ນ, ຂຸນບູລົມກໍໄດ້ແຕ່ງໃຫ້ຂຸນຊາຍທັງ 7 ໄປປົກຄອງ ເມືອງຕ່າງໆຄື

- *ຂຸນລໍ ໃຫ້ໄປປົກຄອງເມືອງຊວາ ( ລ້ານຊ້າງ )*
- *ຂຸນລ້ານ ໃຫ້ໄປປົກຄອງເມືອງຫໍ້ວອງ*
- *ຂຸນສິງ ໃຫ້ໄປປົກຄອງເມືອງຈຸນລະພົມມະທັດ*
- *ຂຸນຄຳພວງ ໃຫ້ໄປປົກຄອງເມືອງກຸມການໂຍນົກ*
- *ຂຸນອິນ ໃຫ້ໄປປົກຄອງເມືອງລະໄວ້ໄຍທິຍາ*
- *ຂຸນເຈັດເຈືອງ ໃຫ້ໄປປົກຄອງເມືອງພວນຕາເວັນຕົກ*
- *ຂຸນເຈັດຈຽງ ໃຫ້ໄປປົກຄອງເມືອງມ່ວນ*

ກ່ອນຈະໄປປົກຄອງເມືອງແຫ່ງຕ່າງໆນັ້ນ ຂຸນບູລົມຜູ້ເປັນພໍ່ ຈຶ່ງໄດ້ໃຫ້ຄຳໂອວາດຕັກເຕືອນລູກ ຊາຍທັງ 7 ແລະລູກສະໃພ້ກ່ຽວກັບຮີດຄອງບ້ານຄອງເມືອງ, ຫລັກການປົກຄອງໄພ່ຟ້າປະຊາກອນໃຫ້ ມີນ້ຳໃຈ ເອື້ອເຟື້ອເຜື່ອແຜ່ຊ່ວຍເຫລືອເກື້ອກູນຜູ້ທຸກຍາກຕະຫລອດເຖິງຄົນຂໍທານທັງຫລາຍ.

## ເລື່ອງ ທ້າວຈັນທະພານິດ

ດິນແດນລ້ານຊ້າງເປັນດິນແດນທີ່ຮັ່ງມີ ແລະສວຍງາມ ເຄີຍມີຊື່ລືຊາປາກົດໃນປະຫວັດສາດ ຂອງລາວເປັນເວລາຊ້ານານ. ນະຄອນຫລວງຂອງດິນແດນລ້ານຊ້າງສະໄໝໜຶ່ງ ເຄີຍມີຊື່ວ່າ ຊຽງດົງ ຊຽງທອງ ເຄີຍມີການຕໍ່ສູ້ປົກປັກຮັກສາ ແລະສ້າງບ້ານແປງເມືອງສືບມາຫລາຍເຊັ່ນຄົນ. ເຄີຍມີເຈົ້າ ກະສັດສືບລາຊະວົງຕໍ່ກັນມາຫລາຍສະໄໝ ຈົນຮອດສະໄໝຂຸນຊວາ, ຂຸນຍິປາ, ຂຸນວິລິບາ, ຂຸນກັນຮາງ ແລະຂຸນລໍເປັນລຳດັບ. ນະຄອນຫລວງແຫ່ງນີ້ຈຶ່ງປາກົດຊື່ວ່າ ເມືອງຊວາລ້ານຊ້າງ.

ກ່ອນສະໄໝຂຸນຊວາພຸ້ນ ບໍ່ຮູ້ວ່າເທິງນານປານໃດ ຍັງມີກະສັດອົງໜຶ່ງຊື່ວ່າ ພະຍາຈັນທະພານິດ ເປັນຜູ້ມີຊື່ລືຊາວ່າເປັນເຈົ້າແຫ່ງທອງຄຳ. ນຳເອົາຄວາມຢູ່ເຢັນເປັນສຸກມາສູ່ໄພ່ຟ້າລາສະດອນເປັນເວລາ ຍາວນານ ໂດຍມີນິທານເລົ່າສືບກັນມາດັ່ງນີ້:

ປາງກ່ອນຍັງມີກະໄຫຊາຍອົງໜຶ່ງຊື່ວ່າ ຈັນທາ ຢູ່ເມືອງວຽງຈັນ ເປັນຄົນທຳມະດາສາມັນ. ທຳມາຫາກິນໂດຍຂາຍໝູ. ໃນແຕ່ລະມື້ທ້າວເຄີຍຫາບກະຕ່າໝູທ່ຽວໄປຂາຍໃນທີ່ຕ່າງໆ ນອກຈາກຂາຍໝູໃນບໍລິເວນບ້ານແລ້ວ, ຍັງຫາບໄປຂາຍໃນບ້ານຕ່າງໆທີ່ຫ່າງໄກ ໂດຍອາໄສວັດ ແລະສາລາເປັນບ່ອນພັກຜ່ອນ. ຢູ່ໃນກຸຕິຫລັງໜຶ່ງ ໂດຍອາໄສຄວາມເອື້ອເຟື້ອຂອງເຖນອົງໜຶ່ງ, ໃນຄືນນັ້ນ ເວລາທີ່ຈັນທານອນຫລັບ, ມະຫາເຖນຊຳໄດ້ຍິນສຽງເສບດົນຕີເພງໄຊດັງສະໜັ່ນນັນເມືອງໃນທີ່ນັ້ນ. ມະຫາເຖນຮູ້ສຶກແປກປະຫລາດໃຈເປັນອັນມາກ ຈຶ່ງເອົາມືຊຸກກວຍໝູທີ່ຕັ້ງຢູ່ຂອກຂ້າງຈັນທາ ຫວັງວ່າຈະປຸກໃຫ້ຈັນທາຕື່ນຂຶ້ນ ເພື່ອພ້ອມກັນຟັງສຽງ ດົນຕີອັນມະຫັດສະຈັນນັ້ນ. ເມື່ອທ້າວຈັນທາຖືກປຸກຈັ່ງຊັ້ນ ກໍສະດຸ້ງຕື່ນຂຶ້ນດ້ວຍຄວາມຝັນອັນແປກປະຫລາດ. ແຕ່ພ້ອມກັນນັ້ນສຽງດົນຕີທີ່ດັງກ້ອງກັງວານ ຢູ່ຫວ່າງຢ່ານີ້ກໍງຽບຫາຍໄປ. ມະຫາເຖນເຫັນເປັນ ດັ່ງນັ້ນ ຈຶ່ງລົ້ມຫົວນອນອີກໂດຍບໍ່ປາກເວົ້າປະການໃດ. ສ່ວນຈັນທາເມື່ອຕື່ນຂຶ້ນແລ້ວ ກໍຮູ້ສຶກສົນໃຈໃນຄວາມຝັນຂອງຕົນເປັນທີ່ສຸດ ແຕ່ບໍ່ກ້າແກ້ຄວາມຝັນນຳມະຫາເຖນ. ເມື່ອຮຸ່ງເຊົ້າຫລັງຈາກສວ່າຍໜ້າແລ້ວ ທ້າວກໍຫາບກວຍໝູໄປຂາຍເຊັ່ນເຄີຍ. ເມື່ອພົບໄທບ້ານທີ່ຄຸ້ນແກວ່ນກັນ ທ້າວຈຶ່ງແກ້ຄວາມຝັນຂອງຕົນນຳໄທບ້ານ ແຕ່ໄທບ້ານຊຳພັດເວົ້າໄປຕ່າງໆນານາ ຍິ່ງເຮັດໃຫ້ທ້າວມີຄວາມກັງວົນສົນໃຈໃນຄວາມຝັນຂອງຕົນເອງ. ບາງຄົນກໍເວົ້າວ່າ " ຄົນຜູ້ນ້ອຍຝັນໃຫຍ່ ຈັກຂາດຄວາມອັບປີຈັງໄຣ, ບາງຄົນກໍວ່າຝັນດີຈະກາຍເປັນຮ້າຍ, ບາງຄົນກໍວ່າ ຄວາມຝັນນີ້ບໍ່ເປັນຕາເພິ່ງເຊື່ອລາງເທື່ອຝັນວ່າໄດ້ກອດຊູ້ ມືນຕາຂຶ້ນຊຳແມ່ນໝອນ..." ເມື່ອເປັນແນວນັ້ນ ທ້າວຈັນທາຈຶ່ງກັບໄປຫາມະຫາເຖນ ແລະໄຫວ້ມະຫາເຖນວ່າ: ຂ້າແຕ່ທ່ານ ອາຈານເອີຍ ! ຕູຂ້ານອນຫລັບໄປໃນຄືນນັ້ນລວດຝັນວ່າຕົນເປັນຜູ້ມີລິດທານຸພາບ ປາກຄາບດວງຈັນ ສອງຕີນຢັນພະອາທິດ ບໍ່ຮູ້ວ່າຈະເປັນນິມິດຮ້າຍດີປະການໃດທ່ານເອີຍ. ເມື່ອໄດ້ຟັງຈັນທາແກ້ຄວາມແປກປະຫລາດ ປະກອບດ້ວຍຕົນເອງ ກໍໄດ້ຍິນສຽງດົນຕີເສບງັນໃນຄືນດຽວກັນນັ້ນ ມະຫາເຖນຈຶ່ງຄຶດຄະນຶງວ່າ ກະໄຫຊາຍຜູ້ນີ້ ອາດຈະເກີດເປັນຜູ້ມີບຸນໜັກສັກໃຫຍ່ແທ້ ຄຶດແລ້ວມະຫາເຖນຈຶ່ງກ່າວວ່າ: ດູລາທ່ານເອີຍ ! ຄວາມຝັນເຫລົ່ານີ້ເປັນນິມິດດີຝັນປະເສີດຫາກຈັກເກີດໂຊກໄຊໃນພາຍໜ້າບໍ່ຢ່າສະແລ.

ເມື່ອທຳນາຍຄວາມຝັນນັ້ນແລ້ວ ມະຫາເຖນກໍໄດ້ແນະນຳຄຳສອນແກ່ທ້າວ ດ້ວຍຄວາມຮັກແພງແລະເຊື່ອຖືຫລາຍປະການ. ນັບແຕ່ນັ້ນມາ ກໍໄດ້ປະຕິບັດຕາມຄຳສອນຂອງມະຫາເຖນ ທຳມາຫາກິນດ້ວຍຄວາມດຸໝັ່ນພາກພຽນ ແລະຊື່ສັດສຸຈະລິດ ຈົນກາຍເປັນພໍ່ຄ້າຜູ້ໜຶ່ງທີ່ຄົນທັງຫລາຍເອີ້ນວ່າ ພໍ່ຄ້າຂາຍໝູ ເຫດວ່າໄດ້ເລີ້ມຕົ້ນຈາກການຂາຍໝູເປັນຕົ້ນທຶນ.

ຢູ່ຕໍ່ມາ ຈັນທາຫາເຮືອໄດ້ລຳໜຶ່ງ ແລ້ວກໍຊັກຊວນເອົາຍາດພີ່ນ້ອງ ແລະມິດສະຫາຍໄດ້ຈຳນວນໜຶ່ງພາກັນຖໍ່ເຮືອຄ້າຈາກວຽງຈັນມຸ່ງໜ້າຂຶ້ນເມືອທາງເໜືອຕາມການແນະນຳຂອງມະຫາເຖນ.

ໃນເວລາທີ່ຖໍ່ເຮືອຕາມລຳຂອງ ຂຶ້ນໄປຮອດຜາຕັດແກ້ ແລະຜາຕັ້ງ ໃນນັ້ນປາກົດເຫັນທອງຄຳຕິດປາຍຖໍ່ຂຶ້ນມາເປັນກ້ອນໃຫຍ່. ແຕ່ຍ້ອນການປະຕິບັດຕາມຄຳແນະນຳຂອງມະຫາເຖນຢ່າງເຄັ່ງຄັດ, ເຫັນທອງຄຳຕິດປາຍໄມ້ຖໍ່ຂຶ້ນມາສອງສາມເທື່ອ ທ້າວຈັນທະພານິດກໍບໍ່ເອົາ. ຈົນວ່າພວກບ່າວເຮືອຮ້ອງໂອຍຄາງ ແລະຕົບເອິກຕີອາງ ຈົ່ມວ່າເສຍດາຍເດ ! ເສຍດາຍເດ! ໃນຂະນະທີ່ທ້າວຈັນທາປ້ອນກ້ອນຄຳລົງໃນນ້ຳ. ເມື່ອໄດ້ຍິນທຸກຄົນຈົ່ມເສຍດາຍທ້າວຈຶ່ງກ່າວວ່າ: ພວກເຈົ້າທັງຫລາຍເອີຍ! ຢ່າເສຍດາຍເທີ້ນ ເຮົາ